ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະມວນຄຳສັບ ເຕັກນິກວິຊາການ ກ່ຽວກັບ ການ ປ່ຽນແປງດິນຟ້າອາກາດ

Glossary on Climate Change

ຈັດພິມໂດຍ:
ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ,
ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

Department of Climate Change (DCC)
Ministry of Natural Resources and Environment (MONRE)

2021

ຄຳນຳ

ວຽກງານການປ່ຽນແປງດິນຟ້າອາກາດ ເປັນວຽກງານໜຶ່ງທີ່ສຳຄັນ ແລະ ຕິດພັນກັບທຸກພາກສ່ວນ ຊຶ່ງລັດຖະບານໄດ້ກຳນົດເຂົ້າໃນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະຕາມທິດສີຂຽວ ແລະ ຍືນຍົງ ໂດຍສົ່ງເສີມໃຫ້ມີການເຊື່ອມສານວຽກງານດັ່ງກ່າວ ເຂົ້າໃນແຜນພັດທະນາຂອງບັນດາຂະແໜງການ ນັບທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະກອບສ່ວນໃນການຕ້ານ, ສະກັດກັ້ນ, ຫຼຸດຜ່ອນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ. ໃນໄລຍະຜ່ານມາບໍ່ທັນມີການຄົ້ນຄ້ວາຕີຄວາມໝາຍ ແລະ ສັງລວມບັນດາຄຳສັບເຕັກນິກວິຊາການ ທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ຊຶ່ງເຮັດໃຫ້ເກີດມີຄວາມບໍ່ເປັນເອກະພາບໃນການນຳໃຊ້ ສ່ວນໃຫຍ່ແມ່ນອີງໃສ່ຄຳສັບ ຂອງສາກົນເປັນຫຼັກ (ພາສາອັງກິດ) ຫຼື ໃຊ້ຄຳສັບແບບຊອດກະຈາ ຫຼື ຕາມຄວາມເຂົ້າໃຈຂອງຕົນເອງ ຈຶ່ງເຮັດໃຫ້ບາງຄັ້ງມີຄວາມເຂົ້າໃຈສັບສົນ, ບໍ່ຈະແຈ້ງຊັດເຈນ ແລະ ບໍ່ຄົບຖ້ວນເທົ່າທີ່ຄວນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ມີບົດບາດ, ໜ້າທີ່ຮັບການຜິດຊອບ ໃນການຈັດຕັ້ງ, ເຄື່ອນໄຫວ ພ້ອມທັງເປັນຈຸດປະສານງານແຫ່ງຊາດ ໃນວຽກງານດັ່ງກ່າວ ຈຶ່ງໄດ້ເກັບກຳລວບລວມ ແລະ ຄັດຈ້ອນບັນດາຄຳສັບເຕັກນິກວິຊາການ ຈາກແຫຼ່ງຕ່າງໆ ເປັນຕົ້ນ: ຈາກສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC), ຄະນະກຳມະການສາກົນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ (IPCC) ແລະ ຈາກອົງການຈັດຕັ້ງສາກົນຕ່າງໆ ທີ່ກ່ຽວຂ້ອງ. ນອກຈາກນັ້ນ, ຍັງໄດ້ສັງລວມຈາກບັນດາເອກສານ ໂດຍສະເພາະດຳລັດ, ບົດແນະນຳ, ແຜນງານຕ່າງໆ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ຈາກບັນດານິຕິກຳ, ເອກະສານທີ່ກ່ຽວຂ້ອງຈາກຂະແໜງການ ແລະ ແຫຼ່ງອື່ນໆ ໃນ ສປປ ລາວ ມາຄັດຈ້ອນ ແລະ ລຽບລຽງເປັນພາສາລາວ ເພື່ອຄວາມສະດວກ ແລະ ເປັນເອກະພາບກັນ ໃນການນຳໃຊ້ບັນດາຄຳສັບເຕັກນິກວິຊາການດັ່ງກ່າວ ຂອງບັນດາຂະແໜງການທີ່ກ່ຽວຂ້ອງທັງພາກລັດ, ອົງການຈັດຕັ້ງສາກົນ, ສະຖາບັນການສຶກສາ, ເອກະຊົນ ເວົ້າລວມແມ່ນທົ່ວສັງຄົມ ໃນ ສປປ ລາວ.

ການປະມວນ ຄຳສັບນິກວິຊາການ ສະບັບນີ້ ໄດ້ຮັບຜົນສຳເລັດ ເປັນຢ່າງດີ ກໍ່ຍ້ອນໄດ້ຮັບການຊີ້ນຳ-ນຳພາຢ່າງໃກ້ສິດຈາກການນຳ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄວາມເປັນເຈົ້າການຂອງກົມ, ໄດ້ຮັບຄຳຄິດເຫັນ ແລະ ການປະກອບສ່ວນຢ່າງຕັ້ງໜ້າຈາກຫຼາຍພາກສ່ວນ ເປັນຕົ້ນ: ບັນດາກົມ, ກອງ, ສະຖາບັນພາຍໃນ ກຊສ; ກະຊວງ ກະສິກຳ-ປ່າໄມ້, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກະຊວງ ພະລັງງານ ແລະ ບໍ່ແຮ່, ກະຊວງ ສຶກສາທິການ ແລະ ກິລາ, ກະຊວງ ສາທາລະນະສຸກ, ອົງການອະນາໄມໂລກ(WHO) ແລະ ສະຖາບັນເຕີບໂຕສີຂຽວສາກົນ (GGGI) ຈຶ່ງເຮັດໃຫ້ເກີດຜົນສຳເລັດ. ການສັງລວມ ຄຳສັບເຕັກນິກວິຊາການ ດັ່ງກ່າວຄາດວ່າຈະເປັນປະໂຫຍດ ແລະ ເປັນຄັ້ງທຳອິດທີ່ໄດ້ມີການສັງລວມ, ຕີຄວາມໝາຍ ແລະ ຈັດພິມອອກ ເພື່ອຈະໄປນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ ຂອງທຸກພາກສ່ວນໃນສັງຄົມ. ເອກະສານປະມວນຄຳສັບເຕັກນິກວິຊາການນີ້ ບໍ່ປັດສະຈາກໄດ້ຂໍ້ຂາດຕົກບົກຜ່ອງ ແຕ່ພວກເຮົາຫວັງຢ່າງຍິ່ງວ່າ ພາຍຫຼັງໄດ້ຖືກນຳໃຊ້ແລ້ວ ຈະໄດ້ຮັບຄຳຄິດເຫັນທີ່ເປັນປະໂຫຍດກັບຄືນມາ ແລະ ພວກເຮົາຍິນດີພ້ອມທີ່ຈະປັບປຸງ ໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ສົມບູນຍິ່ງຂຶ້ນເປັນແຕ່ລະໄລຍະໃນຕໍ່ໜ້າ.

ນະຄອນຫຼວງວຽງຈັນ, ວັນທີ 31 ມີນາ 2021

ຫົວໜ້າກົມ

ສີອຳພອນ ແສງຈັນດາລາ

Table of Contents - ສາລະບານ

A 1

Abrupt Climate Change: ການປ່ຽນແປງດິນຟ້າອາກາດແບບກະທັນຫັນ 1

Abatement: ການຫຼຸດລົງ 1

Accredited Entity(AE): ອົງກອນບໍລິຫານ ແລະ ຄຸ້ມຄອງທຶນ 1

Adaptation: ການປັບຕົວ 1

Adaptation Assessment: ການປະເມີນການປັບຕົວ 2

Adaptation Benefits: ຜົນປະໂຫຍດຈາກການປັບຕົວ 2

Adaptation Costs: ຕົ້ນທຶນໃນການປັບຕົວ 2

Adaptive Capacity: ຄວາມສາມາດໃນການປັບຕົວ 3

Aerosols: ຝຸ່ນລະອອງຂະໜາດບໍ່ເກີນ 10 ໄມໂຄແມັດ 3

Albedo: ລັງສີຄວາມຮ້ອນຂອງດວງອາທິດທີ່ຖືກສະທ້ອນກັບ 3

Adaptation Options: ບັນດາທາງເລືອກໃນການປັບຕົວ 4

Aggregate Impacts: ຜົນກະທົບລວມ 4

Atmosphere: ຊັ້ນບັນຍາກາດ 4

Adaptation Fund: ກອງທຶນການປັບຕົວ 5

Afforestation: ການປູກໄມ້ໃຫ້ເປັນປ່າໃສ່ດິນທີ່ຖືກເປົ່າຫວ່າງ ມາດົນແລ້ວ 5

Agro-Forestry: ກະສິກຳ-ປ່າໄມ້ ແບບປະສົມປະສານ 5

Agriculture, Forestry and Other Land Use (AFOLU): ການກະສິກຳ, ປ່າໄມ້ ແລະ ນຳໃຊ້ທີ່ດິນອື່ນໆ 6

Allocation: ການຈັດສັນ 6

Allowance: ການອະນຸຍາດ 6

Annex-I, Annex-B Countries/Parties: ປະເທດໃນບັນຊີ I, ປະເທດ/ລັດພາຄີໃນບັນຊີ B ຂອງອະນຸສັນຍາກຽວໂຕ 7

Annex II Parties: ປະເທດໃນບັນຊີ II ຂອງສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ 7

Anthropogenic Greenhouse Emissions: ການປ່ອຍທາດອາຍເຮືອນແກ້ວ ຈາກກິດຈະກຳຂອງມະນຸດ 8

Ad Hoc Working Group on the Paris Agreement (APA): ຄະນະກຳມະການສະເພາະກິດ ວ່າດ້ວຍສັນຍາປາຣີ 8
Avoided Deforestation: ຫຼີກລ້ຽງການທຳລາຍປ່າໄມ້ 8
Avoiding Unplanned Frontier Deforestation and Degradation (AUFDD):
ຫຼີກລ້ຽງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ ໃນພື້ນທີ່ປ່າໄມ້ 8
Avoiding Unplanned Mosaic Deforestation and Degradation (AUMDD): ຫຼີກລ້ຽງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມທີ່ກະແຈກກະຈາຍໂດຍບໍ່ມີແຜນ 9
AWG-KP: ຄະນະກຳມະການສະເພາະກິດ ກ່ຽວກັບ ການຄົ້ນຄ້ວາພັນທະ ສຳລັບກຸ່ມປະເທດທີ່ພັດທະນາແລ້ວ ໃນບັນຊີ ທີ 1 ພາຍໃຕ້ ອະນຸສັນຍາກຽວໂຕ 9
AWG-LCA: ຄະນະກຳມະການສະເພາະກິດ ກ່ຽວກັບການຄົ້ນຄ້ວາ ຮ່ວມມືໄລຍະຍາວເພື່ອການດຳເນີນງານ ພາຍໃຕ້ສົນທິສັນຍາ 10
B 11
Bali Road Map: ແຜນປະຕິບັດງານບາລີ 11
Baseline(reference): ເສັ້ນທຽບຖານ(ຂໍ້ມູນອ້າງອີງ) 12
Base year: ປີທຽບຖານ 12
Baseline Scenario: ສະຖານະການຈຳລອງທຽບຖານ 13
Biodiversity: ຊີວະນາໆພັນ 14
Biofuels: ເຊື້ອໄຟຊີວະພາບ 14
Biomass: ຊີວະມວນ 14
Bundling: ການລວມເຂົ້າກັນ 14
Boundaries: ຂອບເຂດ 15
C 15
Capacity: ຄວາມສາມາດ 15
Capacity Building: ການສ້າງຄວາມສາມາດ 15
Caps: ກຳນົດລະດັບການປ່ອຍ 16
Carbon Accounting: ການຄິດໄລ່ຫາ ທາດອາຍກາກບອນ 16

Carbon Benefits: ຜົນປະໂຫຍດຈາກທາດອາຍກາກບອນ 16
Carbon Bio Sequestration: ການສະສົມທາດອາຍກາກບອນຊີວະພາບ 16
Carbon Carrying Capacity: ຄວາມສາມາດໃນການເກັບກັກທາດອາຍກາກບອນ. 17
Carbon Credit Note: ເອກະສານຢັ້ງຢືນສິນເຊື່ອທາດອາຍກາກບອນ 17
Carbon Cycle: ການໝູນວຽນ ຫຼື ວົງຈອນ ຂອງທາດອາຍກາກບອນ....................... 17
Carbon Dioxide (CO_2): ທາດອາຍກາກບອນໄດອອກໄຊ.................................. 17
Carbon Dioxide Equivalent (CO_2e): ທາດອາຍກາກບອນໄດອອກໄຊ ຫົວໜ່ວຍທຽບເທົ່າ (CO_2).. 18
CDM Excutive Board: ສະພາບໍລິຫານກົນໄກການພັດທະນາສະອາດສາກົນ.......... 18
Carbon Footprint: ການປ່ອຍທາດອາຍກາກບອນ ຈາກຂະບວນການຜະລິດ 19
Carbon Market: ຕະຫຼາດ ທາດອາຍກາກບອນ 19
Carbon Neutral: ບໍ່ມີການປ່ອຍທາດອາຍກາກບອນ/ບໍ່ສ້າງມົນລະພິດ ຫຼື ເຮັດ ກິດຈະກຳຫຍັງກໍ່ໄດ້ທີ່ມີການປ່ອຍທາດອາຍເຮືອນແກ້ວ... 19
Carbon Offset: ການຊົດເຊີຍທາດອາຍກາກບອນ.. 20
Carbon Pool (Reservoir): ແຫຼ່ງສະສົມທາດກາກບອນ.................................. 20
Carbon Price: ລາຄາທາດອາຍກາກບອນ... 21
Carbon Rights: ກຳມະສິດທາດອາຍກາກບອນ 21
Carbon Sequestration: ການເກັບສະສົມທາດອາຍກາກບອນ 22
Carbon Sinks: ແຫຼ່ງຊຶມຊັບທາດອາຍກາກບອນ.. 22
Carbon Source: ແຫຼ່ງກຳເນີດທາດອາຍກາກບອນ 22
Carbon Stock: ປະລິມານສະສົມຂອງທາດອາຍກາກບອນ.................................... 22
Carbon Stock Enhancement: ການເພີ່ມປະລິມານສະສົມຂອງທາດອາຍກາກບອນ 23
Carbon tax: ພາສີຂອງທາດອາຍກາກບອນ.. 23
Carbon Trading or Emissions Trading: ການຄ້າຂາຍທາດອາຍກາກບອນ ຫຼື ການຄ້າຂາຍ ການປ່ອຍທາດອາຍ.. 23
Carbon Capture and Storage (CCS): ການເກັບກັກ ແລະ ການສະສົມທາດອາຍກາກບອນ 24

Certification: ການຢັ້ງຢືນ 24
Certified Emission Reductions (CERs): ເອກະສານຢັ້ງຢືນການຫຼຸດຜ່ອນ
ການປ່ອຍທາດອາຍເຮືອນແກ້ວ 24
Clean Development Mechanism (CDM): ກົນໄກການພັດທະນາສະອາດ 25
Climate: ພູມອາກາດ 26
Climate Change: ການປ່ຽນແປງດິນຟ້າອາກາດ ຫຼື ການປ່ຽນແປງສະພາບພູມ
ອາກາດ 26
Climate Change Fund: ກອງທຶນການປ່ຽນແປງດິນຟ້າອາກາດ 27
Climate Extreme: ຄວາມຮຸນແຮງຂອງສະພາບພູມອາກາດ 27
Climate Finance: ການເງິນດ້ານການປ່ຽນແປງດິນຟ້າອາກາດ 27
Climate Modeling: ແບບຈຳລອງສະພາບພູມອາກາດ 27
Climate Prediction: ການຄາດຄະເນສະພາບພູມອາກາດໄລຍະສັ້ນ 28
Climate Projection: ການຄາດຄະເນສະພາບພູມອາກາດ ໄລຍະຍາວ 28
Climate Sensitivity: ຄວາມອ່ອນໄຫວຕໍ່ສະພາບພູມອາກາດ 29
Climate Services: ການບໍລິການ ຂໍ້ມູນສະພາບພູມອາກາດ 29
Climate-Smart Agriculture (CSA): ການຜະລິດກະສິກຳ ທີ່ແທດເໝາະກັບສະພາ
ບການປ່ຽນແປງດິນຟ້າອາກາດ 29
Climate Scenario: ການຈຳລອງສະພາບ ພູມອາກາດ ທີ່ຄາດວ່າຈະເກີດຂຶ້ນໃນອະນາຄົດ 30
Climate System: ລະບົບພູມອາກາດ 30
Climate-Resilient Health Systems: ລະບົບສາທາລະນະສຸກທີ່ມີຄວາມທົນທານຕໍ່
ສະພາບພູມອາກາດ 31
Climate-Related Risks: ຄວາມສ່ຽງຕ່າງໆ ທີ່ເກີດຂຶ້ນຈາກການປ່ຽນແປງຂອງສະພາບ
ພູມອາກາດ 31
Climate Sensitive Health Outcome: ຄວາມອ່ອນໄຫວດ້ານສຸຂະພາບ
ຕໍ່ສະພາບພູມອາກາດ 32
Climate Variability: ຄວາມຜັນແປຂອງສະພາບພູມອາກາດ 32
Coupled Model Intercomparison Project (CMIP): ການປຽບທຽບແບບຈຳ
ລອງສະພາບພູມອາກາດ 33

Compliance (Regulatory) Market: ການປະຕິບັດຕາມກົນໄກຕະຫຼາດ ພາກບອນ 33
Conditional Mitigation Scenario: ແບບຈໍາລອງການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂ 33
Conference of the Parties (COP): ກອງປະຊຸມລັດພາຄີສົນທິສັນຍາ 33
Concept Note: ເອກະສານແນວຄວາມຄິດ 34
Coping: ການຮັບມື 34
Coping Capacity: ຄວາມສາມາດໃນການຮັບມື 44
Country Programme: ແຜນງານ ແຫ່ງຊາດ 35
Cross-Cutting Issues: ບັນຫາທີ່ພົວພັນກັບຫຼາຍຂະແໜງການ 35
Cross-Sector Calculation Tool: ເຄື່ອງມືການຄິດໄລ່ທາດອາຍເຮືອນແກ້ວທີ່ກວມລວມ 36
D 36
Deforestation: ການທໍາລາຍປ່າ 36
Degradation or Forest Degradation: ການຊຸດໂຊມ ຫລື ການເຮັດໃຫ້ປ່າໄມ້ຊຸດໂຊມ 36
Delivery Partners: ຄູ່ຮ່ວມພັດທະນາ 37
Designated National Authority (DNA): ຈຸດປະສານງານແຫ່ງຊາດ ສໍາລັບກົນໄກການພັດທະນາສະອາດ 37
Designated Operational Entity (DOE): ອົງກອນດໍາເນີນງານສາກົນ 38
Disaster: ໄພພິບັດ 38
Disaster Control: ການຄວບຄຸມໄພພິບັດ 38
Disaster Management: ການຄຸ້ມຄອງໄພພິບັດ 39
Disaster Prevention: ການປ້ອງກັນໄພພິບັດ 39
Disaster Preventive Measures: ບັນດາມາດຕະການປ້ອງກັນໄພພິບັດ 39
Disaster risk: ຄວາມສ່ຽງໄພພິບັດ 40
Disaster Risk Assessment: ການປະເມີນຄວາມສ່ຽງໄພພິບັດ 40
Disaster risk management (DRM): ການຄຸ້ມຄອງຄວາມສ່ຽງໄພພິບັດ 40

Disaster Risk Reduction (DRR): ການຫຼຸດຜ່ອນຄວາມສ່ຽງໄພພິບັດ.............. 41
Disaster Preparedness and Response: ການກຽມພ້ອມ ແລະ
ການຕອບໂຕ້ເຫດການໄພພິບັດ.. 41
Disease Prevention: ການປ້ອງກັນພະຍາດລະບາດ 42
Direct Access Entity (DAE): ອົງກອນເຂົ້າຫາກອງທຶນໂດຍກົງ 42
Direct GHG Emissions: ການປ່ອຍທາດອາຍເຮືອນແກ້ວໂດຍກົງ...................... 42
Downscaling: ການຫຼຸດຈາກມາດຕາສ່ວນໃຫຍ່ ມາເປັນເປັນມາດຕາສ່ວນນ້ອຍ 43
Double Counting: ການນັບຊໍ້າຊ້ອນກັນ 43
Drought: ໄພແຫ້ງແລ້ງ... 43
E 43
Early Warning: ການເຕືອນໄພລ່ວງໜ້າ.. 43
Ecophysiological Process: ຂະບວນການທາງດ້ານຊີວະວິທະຍາ...................... 44
Ecosystem: ລະບົບນິເວດ.. 44
Ecosystem-based adaptation: ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ
ໂດຍອີງໃສ່ລະບົບນິເວດ.. 45
Ecosystem Approach: ຕາມວິທີການຂອງ ລະບົບນິເວດ 45
Ecosystem Services: ການບໍລິການດ້ານລະບົບນິເວດ 46
El Nio: ປະກົດການໄພແຫ້ງແລ້ງ 46
Emissions: ການປ່ອຍ.. 47
Emission Factor: ຕົວຄູນການປ່ອຍ... 47
Emission Reduction Purchase Agreement (ERPA): ຂໍ້ຕົກລົງການ ຊື້ຂາຍ
ການຫຼຸດຜ່ອນການປ່ອຍ 48
Emissions Scenario: ການຈໍາລອງ ການປ່ອຍທາດອາຍເຮືອນແກ້ວ ໃນອະນາຄົດ . 48
Emissions Trading: ການຊື້-ຂາຍ ການບອນ... 49
Emission Uncertainty: ຄວາມຄາດເຄື່ອນໃນການຄິດໄລ່ການປ່ອຍທາດອາຍເຮືອນ
ແກ້ວ 49
Energy Efficiency: ພະລັງງານທີ່ມີປະສິດທິພາບ... 49
Enhancing Carbon Sinks: ການເພີ່ມແຫຼ່ງຊຶມຊັບທາດກາກບອນ....................... 50

Evaporation: ການລະເຫີຍອາຍ 50
Evapotranspiration: ປະກົດການຂອງການລະເຫີຍອາຍ 50
Exposure: ການປະເຊີນຕໍ່ການປ່ຽນແປງດິນຟ້າອາກາດ 50
Extreme Weather Event: ເຫດການຄວາມຮຸນແຮງຂອງສະພາບອາກາດ 50
Extratropical Cyclone: ພະຍຸໝູນຢູ່ນອກເຂດຮ້ອນ 51
F 51
Financial Mechanism: ກົນໄກດ້ານການເງິນ 51
Fiduciary Standards: ມາດຕະຖານການຄຸ້ມຄອງການເງິນ 52
Flood: ໄພນໍ້າຖ້ວມ 52
Focal Point: ຈຸດປະສານງານ 53
Food and Nutrition Security: ການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ 53
Food Security: ການຄໍ້າປະກັນດ້ານສະບຽງອາຫານ 54
Forest Carbon: ກາກບອນປ່າໄມ້ 54
Forest Carbon Index (FCI): ດັດສະນີກາກບອນປ່າໄມ້ 55
Fossil Fuels: ນໍ້າມັນເຊື້ອໄຟ 55
Fugitive Emissions: ແຫຼ່ງທາດອາຍເຮືອນແກ້ວຈາກການລະເຫີຍອາຍ 55
Fugitive Fuel Emissions: ການປ່ອຍທາດອາຍເຮືອນແກ້ວຈາກນໍ້າມັນເຊື້ອໄຟ 56
G 56
Global Environment Facility (GEF): ກອງທຶນສິ່ງແວດລ້ອມໂລກ 56
Glacier: ຊັ້ນນໍ້າກ້ອນ 57
Global Warming: ພາວະໂລກຮ້ອນ 57
Global Warming Potential (GWP): ຕົວຊີ້ບອກຄຸນລັກສະນະ ທີ່ກໍ່ໃຫ້ເກີດພາລະໂລກຮ້ອນ 57
Global Surface Temperature: ອຸນຫະພູມເທິງພື້ນຜິວໂລກ 58
Green Climate Fund (GCF): ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ 58
Greenhouse Effect: ປະກົດການທາດອາຍເຮືອນແກ້ວ 59
Greenhouse Intensity: ຄວາມໜາແໜ້ນ ຂອງທາດອາຍເຮືອນແກ້ວ 59

Greenhouse Gases (GHGs): ທາດອາຍເຮືອນແກ້ວ......................................60
Greenhouse Gas Capture: ການເກັບກັກທາດອາຍເຮືອນແກ້ວ 60
Greenhouse Gas Inventory: ການສຳຫຼວດການປ່ອຍທາດອາຍເຮືອນແກ້ວ.......60
Green Power: ພະລັງງານສີຂຽວ (ພະລັງານສະອາດ)..61
Greenhouse Gas Removal (GGR): ການດູດຊັບທາດອາຍເຮືອນແກ້ວ..........61
Greenhouse Gas Sink: ແຫຼ່ງຊຶມຊັບທາດອາຍເຮືອນແກ້ວ................................61
Greenhouse Gas Source: ແຫຼ່ງການປ່ອຍທາດອາຍເຮືອນແກ້ວ 61
H..62
Hazard: ໄພອັນຕະລາຍ...62
Heatwave: ຄື້ນຄວາມຮ້ອນ 62
Hydrological Cycle (also referred to as water cycle): ວັດທະຈັກຂອງອຸທົກກະສາດ(ເອີ້ນວ່າວັດທະຈັກ ນ້ຳ)...62
I...63
Impacts: ຜົນກະທົບ 63
Indirect Emissions: ການປ່ອຍທາດອາຍເຮືອນແກ້ວໂດຍທາງອອ້ມ.....................63
Intensity Ratios: ອັດຕາສ່ວນຄວາມໜາແໜ້ນ 64
Intergovernmental Panel on Climate Change (IPCC): ຄະນະກຳມະການສາກົນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ..64
Inventory: ການສຳຫຼວດ 64
Inventory Boundary: ຂອບເຂດການສຳຫຼວດ...65
Inventory Quality: ຄຸນນະພາບຂອງການສຳຫຼວດ..65
J..65
Joint Implementation (JI): ການຈັດຕັ້ງປະຕິບັດຮ່ວມກັນພາຍໃຕ້ອະນຸສັນຍາກຽວໂຕ......65
Joint Crediting Mechanism (JCM): ກົນໄກການຮ່ວມມືສອງຝ່າຍໃນການຫຼຸດຜ່ອນທາດອາຍເຮືອນແກ້ວ...66
K..66
Kyoto Protocol: ອະນຸສັນຍາກຽວໂຕ ວ່າດ້ວຍ ການດ້ວຍການຄວບຄຸມການປ່ອຍທາດອາຍເຮືອນແກ້ວ...66

Kyoto Mechanisms: ກົນໄກຈັດຕັ້ງປະຕິບັດພາຍໃຕ້ອະນຸສັນຍາກຽວໂຕ 67
L 67
Landslide: ດິນເຈື່ອນ 67
Land surface Air Temperature: ອຸນຫະພູມອາກາດເທິງໜ້າດິນ 67
Land Use and Land Use Change: ການນຳໃຊ້ທີ່ດິນ ແລະ ການປ່ຽນແປງ
ການນຳໃຊ້ທີ່ດິນ 68
Land Use, Land-Use Change and Forestry (LULUCF): ການນຳໃຊ້
ທີ່ດິນ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້ 68
Least Developed Countries (LDCs): ບັນດາປະເທດດ້ອຍພັດທະນາ 69
Least Developed Country Fund (LDCF): ກອງທຶນສຳລັບປະເທດດ້ອຍພັດທະນາ..... 69
Local Disaster Risk Management (LDRM): ການຄຸ້ມຄອງຄວາມສ່ຽງໄພພິບັດ
ໃນຂັ້ນທ້ອງຖິ່ນ 69
Loss and Damage: ຄວາມສູນເສຍ ແລະ ຄວາມເສຍຫາຍຈາກການປ່ຽນແປງດິນຟ້າ
ອາກາດ 70
M.. 71
Mainstreaming (climate change): ການເຊື່ອມສານການປ່ຽນແປງ
ດິນຟ້າອາກາດ... 71
Maladaptation: ການປັບຕົວທີ່ບໍ່ມີປະສິດທິຜົນ 71
Mitigation: ການຫຼຸດຜ່ອນທາດອາຍເຮືອນແກ້ວ 71
Mobile Combustion: ການເຜົາໄໝ້ນ້ຳມັນເຊື້ອໄຟຈາກຂະແໜງການຂົນສົ່ງ 72
Monsoon: ລົມມໍລະສຸມເຂດຮ້ອນ.. 72
Measurement, Reporting and Verification (MRV): ການວັດແທກ,
ການລາຍງານ ແລະ ຢັ້ງຢືນ 72
N 73
Natural Disaster: ໄພພິບັດທຳມະຊາດ 73
National Adaptation Programmes of Action (NAPAs): ແຜນດຳເນີນງານ
ແຫ່ງຊາດ ໃນການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ......................... 73
National Communication on Climate Change : ບົດສື່ສານແຫ່ງຊາດ ກ່ຽວກັບ

ການປ່ຽນແປງດິນຟ້າອາກາດ........73
Nationally Appropriate Mitigation Actions (NAMAs): ແຜນດຳເນີນງານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຕາມສະພາບເງື່ອນໄຂຂອງປະເທດ........74
Native or Natural Forests: ປ່າໄມ້ດັ້ງເດີມ ຫຼື ປ່າໄມ້ທຳມະຊາດ........74
Natural Regeneration: ການຟື້ນຟູປ່າໂດຍທຳມະຊາດ........74
National Designated Authority(NDA): ຈຸດປະສານງານແຫ່ງຊາດ ສຳລັບກອງທຶນ GCF........74
National Determined Contributions (NDC): ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ........75
Non-Party: ປະເທດບໍ່ໄດ້ເຂົ້າເປັນພາຄີສັນຍາ........75
P........76
Paris Agreement: ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ........76
Post Disaster Recovery: ການຟື້ນຟູຫຼັງໄພພິບັດ........76
Post Disaster Needs Assessment: ການປະເມີນຄວາມຕ້ອງການຫຼັງໄພພິບັດ........77
Primary Effects: ຜົນກະທົບໃນເບື້ອງຕົ້ນ........77
Project Design Document of CDM: ເອກະສານໂຄງການກົນໄກການພັດທະນາສະອາດ........77
Proxy Climate Indicator: ຄ່າຕົວຊີ້ບອກສະພາບພູມອາກາດ........78
R........79
Ratification: ການໃຫ້ສັດຕະຍາບັນ........79
Radiative Forcing: ການປ່ອຍລັງສີ........79
Rapid Assessment: ການປະເມີນແບບເລັ່ງລັດ........80
Reducing Emissions from Deforestation and Forest Degradation (REDD): ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າເສື່ອມໂຊມ........80
Reforestation: ການປູກປ່າໄມ້ຄືນໃໝ່........80
Removals: ແຫຼ່ງຊຶມຊັບທາດອາຍເຮືອນແກ້ວ........81
Renewable energy: ພະລັງງານທົດແທນ........81

Representative Concentration Pathways (RCPs): ການຈຳລອງ ຄວາມເຂັ້ມຂຸ້ນການປ່ອຍທາດອາຍເຮືອນແກ້ວ....81
Resilience: ຄວາມທົນທານ....83
Responses to Climate Change: ການຮັບມື ຕໍ່ສະພາບການປ່ຽນແປງດິນຟ້າອາກາດ....83
Return Period: ຮອບວຽນການເກີດຊໍ້າ....83
Revegetation: ການຟື້ນຟູປ່າຄືນ....84
Rio Conventions: ສົນທິສັນຍາຣີໂອ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ (UNFC-CC), ຊີວະນາໆພັນ (CBD), ການຕໍ່ສູ້ຕ້ານການກາຍເປັນທະເລຊາຍ (UNCCD)....84
Rio+20: ຣີໂອ+20....84
Risk Assessments: ການປະເມີນຄວາມສ່ຽງ....85
Risk Classification(or class): ການຈັດປະເພດຄວາມສ່ຽງ(ຫຼື ລະດັບ)....85
S....86
Secondary Effects (Leakage): ຜົນກະທົບໄລຍະສອງ (ການຮົ່ວໄຫຼ)....86
Scenario: ການຈຳລອງ ສະພາບທີ່ຄາດວ່າຈະເກີດຂຶ້ນໃນອະນາຄົດ....86
Sea Level Rise: ການເພີ່ມຂຶ້ນຂອງລະດັບນໍ້າທະເລ....86
Sea Surface Temperature (SST): ອຸນຫະພູມພື້ນຜິວທະເລ....87
Sensitivity: ຄວາມອ່ອນໄຫວ....88
Sequestration: ການເກັບສະສົມ....88
Sequestered Atmospheric Carbon: ການກັກເກັບ ທາດອາຍກາກບອນ ໃນຊັ້ນບັນຍາກາດ....88
Small Scale CDM Projects: ໂຄງການພັດທະນາສະອາດຂະໜາດນ້ອຍ....89
Socio-Eonomic Scenarios: ການຈຳລອງດ້ານເສດຖະກິດ-ສັງຄົມ....89
Solar Radiation: ລັງສີ ຈາກແສງຕາເວັນ....89
Special Climate Change Fund (SCCF): ກອງທຶນພິເສດ ກ່ຽວກັບການປ່ຽນແປງດິນຟ້າອາກາດ....90
Stocktake of Climate Change Information: ການທົບທວນຂໍ້ມູນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ....90

Stratosphere: ຊັ້ນບັນຍາກາດທີ່ຢູ່ລະຫວ່າງ 10 ຫາ 60 ກິໂລແມັດຈາກໜ້າໂລກ..... 91
Stationary Combustion: ການເຜົາໄໝ້ນ້ຳມັນເຊື້ອໄຟຢູ່ກັບທີ່ 91
Storm Surge: ພາຍຸຄື້ນທະເລ.. 91
Subsidiary Body for Implementation (SBI): ຄະນະກຳມະການຈັດຕັ້ງປະຕິບັດ
ພາຍໃຕ້ສົນທິສັນຍາ 91
Subsidiary Body for Scientific and Technological Advice (SBSTA):
ຄະນະກຳມະການທີ່ປຶກສາດ້ານວິທະຍາສາດ ແລະ ເຕັກໂນໂລຊີພາຍໃຕ້ສົນທິສັນຍາ 92
T 92
Thermal Infrared Radiation: ລັງສີຄວາມຮ້ອນຂອງແສງອິນຟາເຣດ.................. 92
Tropical Cyclone: ພາຍຸໝູນເຂດຮ້ອນ 93
Troposphere: ຊັ້ນບັນຍາກາດ(ຊັ້ນໂທຣໂປສະເຟຍ)... 93
Trust Funds: ກອງທຶນສະໜັບສະໜູນ... 94
U 94
United Nations Framework Convention on Climate Change (UNFCCC):
ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ.......................... 94
Uncertainty: ຄວາມບໍ່ແນ່ນອນ ຫຼື ຄວາມຄາດເຄື່ອນ 95
V 95
Validation: ການກວດສອບເພື່ອຮັບຮອງ 95
Value Chain Emissions: ຕ່ອງໂສ້ ການປ່ອຍທາດອາຍເຮືອນແກ້ວ ຈາກຂະບວນ
ການຜະລິດ 96
Verification: ການຢັ້ງຢືນ.. 96
Verified Emissions Reductions(VERs): ການຢັ້ງຢືນການຫຼຸດຜ່ອນການປ່ອຍ
ທາດອາຍເຮືອນແກ້ວ 96
Voluntary Carbon Unit (VCU): ຫົວໜ່ວຍກາກບອນໃນລະບົບກາກບອນແບບສະ
ໝັກໃຈ.. 97
Voluntary Commitments: ການໃຫ້ຄຳໝັ້ນສັນຍາແບບສະໝັກໃຈ...................... 97
Voluntary Markets: ຕະຫຼາດກາກບອນແບບສະໝັກໃຈ...................................... 97
Vulnerability: ຄວາມບອບບາງ.. 98

Vulnerability Assessment: ການປະເມີນຄວາມບອບບາງ....98

Vulnerability Classification: ການກຳນົດເຂດຄວາມບອບບາງ....99

Vulnerability Mapping: ການສ້າງແຜນທີ່ຄວາມບອບບາງ....99

W....99

Weather: ສະພາບອາກາດ....99

Weather Prediction/Forecast: ການຄາດຄະເນ ກ່ຽວກັບອາກາດ/ການພະຍາກອນລ່ວງໜ້າ....100

Z....100

Zero-carbon: ການປ່ອຍທາດອາຍກາກບອນເຫຼືອສູນ....100

References - ເອກະສານອ້າງອີງ....102

A

Abrupt Climate Change: ການປ່ຽນແປງດິນຟ້າອາກາດແບບກະທັນຫັນ

ໝາຍເຖິງ ຄວາມຜັນຜວນຂອງພູມອາກາດ ຊຶ່ງຈະນຳໄປສູ່ ການປ່ຽນແປງດິນຟ້າອາກາດແບບກະທັນຫັນ, ບາງຄັ້ງເອີ້ນວ່າການປ່ຽນແປງດິນຟ້າອາກາດແບບໄວວາ ຫຼື ເຫດກະທັນຫັນ. ແບບກະທັນຫັນ ໝາຍເຖິງ ຄວາມຈຳກັດຂອງໄລຍະເວລາທີ່ຈະຮັບມືກັບມັນໄດ້. ຢ່າງໃດກໍ່ຕາມ ບໍ່ຈຳເປັນຕ້ອງກຽມຄວາມພ້ອມ ຮັບມືກັບທຸກເຫດການເກີດກະທັນຫັນ. ບາງຄັ້ງການປ່ຽນແປງດິນຟ້າອາກາດແມ່ນບໍ່ສາມາດຄາດເດົາໄດ້ ເນື່ອງຈາກເກີດການປ່ຽນແປງ (ຜັນຜວນ)ຢ່າງກະທັນຫັນຂອງລະບົບອາກາດ.

The nonlinearity of the climate system may lead to abrupt climate change, sometimes called rapid climate change, abrupt events, or even surprises. The term abrupt often refers to time scales faster than the typical time scale of the responsible forcing. However, not all abrupt climate changes need be externally forced. Some changes may be truly unexpected, resulting from a strong, rapidly changing forcing of a nonlinear system.

Abatement: ການຫຼຸດລົງ

ໝາຍເຖິງການຫຼຸດຜ່ອນລະດັບຄວາມເຂັ້ມຂຸ້ນ ຂອງການປ່ອຍທາດອາຍເຮືອນແກ້ວ.
Refers to reducing the degree or intensity of greenhouse-gas emissions.

Accredited Entity(AE): ອົງກອນບໍລິຫານ ແລະ ຄຸ້ມຄອງທຶນ

ແມ່ນອົງກອນຈັດຕັ້ງທີ່ໄດ້ຮັບການຮັບຮອງຈາກຄະນະກຳມະການບໍລິຫານກອງທຶນສາກົນດ້ານການປ່ຽນແປງດິນຟ້າອາກາດ (GCF) ໃຫ້ເປັນກົນໄກຫຼັກໃນການພັດທະນາ ບໍລິຫານຈັດການ ແລະ ຕິດຕາມການດຳເນີນງານໂຄງການ ແລະ ແຜນງານ.

An entity that is accredited by the GCF Board in accordance with the Governing Instrument and relevant Board Decisions.

Adaptation: ການປັບຕົວ

ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແມ່ນການປັບສະພາບຂອງຄົນ, ສັດ,

ພືດ, ລະບົບນິເວດ, ໂຄງລ່າງພື້ນຖານ, ຜັງເມືອງໃນຕົວເມືອງ ແລະ ອື່ນໆ ໃຫ້ມີຄວາມທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໃຫ້ໄດ້ຮັບຜົນກະທົບໜ້ອຍທີ່ສຸດດ້ວຍການດຳເນີນມາດຕະການທີ່ເໝາະສົມໃນການຫຼຸດຜ່ອນຄວາມບອບບາງ, ຄວາມສ່ຽງ ແລະ ຄວາມເສຍຫາຍທີ່ອາດເກີດຂຶ້ນ.

Adaptation refers to the process of adjustment by humans, animals, vegetation, ecosystems, infrastructure, and urban developments to build resilience to climate change and minimize climate impacts by implementing appropriate measures to reduce potential vulnerability, risk, and damage.

Adaptation Assessment: ການປະເມີນການປັບຕົວ

ໝາຍເຖິງ ການກຳນົດບັນດາທາງເລືອກເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການປະເມີນອີງປະກອບຕ່າງໆເຊັ່ນ: ຄວາມພ້ອມ, ຜົນປະໂຫຍດ, ຕົ້ນທຶນ, ປະສິດທິພາບ, ປະສິດທິຜົນ ແລະ ຄວາມເປັນໄປໄດ້.

The practice of identifying options to adapt to climate change and evaluating them in terms of criteria such as availability, benefits, costs, effectiveness, efficiency, and feasibility.

Adaptation Benefits: ຜົນປະໂຫຍດຈາກການປັບຕົວ

ໝາຍເຖິງ ທຶນຄວາມເສຍຫາຍທີ່ສາມາດຫຼີກລຽງໄດ້ ຫຼື ຜົນປະໂຫຍດທີ່ເພີ່ມຂຶ້ນໃນການຈັດຕັ້ງປະຕິບັດຕາມມາດຕະການການປັບຕົວ.

The avoided damage costs or the accrued benefits following the adoption and implementation of adaptation measures.

Adaptation Costs: ຕົ້ນທຶນໃນການປັບຕົວ

ໝາຍເຖິງ ຕົ້ນທຶນການວາງແຜນ, ການກະກຽມ ການອຳນວຍຄວາມສະດວກ ແລະ ການຈັດຕັ້ງປະຕິບັດມາດຕະການປັບຕົວ, ລວມເຖິງຕົ້ນທຶນໃນການປ່ຽນແປງ.

Costs of planning, preparing for facilitating, and implementing adaptation measures, including transition costs

Adaptive Capacity: ຄວາມສາມາດໃນການປັບຕົວ

ໝາຍເຖິງ ຄວາມສາມາດຂອງລະບົບໃນການປັບຕົວ ໃຫ້ເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ (ລວມເຖິງຄວາມຜັນແປ ແລະ ຄວາມຮຸນແຮງຂອງພູມອາກາດ) ເພື່ອຫລຸດຜ່ອນຄວາມເສຍຫາຍທີ່ອາດຈະເກີດຂຶ້ນ ເພື່ອໃຊ້ປະໂຫຍດຈາກໂອກາດທີ່ມີ ຫຼື ເພື່ອຮັບມືກັບຜົນທີ່ຕາມມາ.

The ability of a system to adjust to climate change (including climate variability and extremes) to moderate potential damages, to take advantage of opportunities, or to cope with the consequences

Aerosols: ຝຸ່ນລະອອງຂະໜາດບໍ່ເກີນ 10 ໄມໂຄແມັດ

ໝາຍເຖິງ ການລວມຕົວ(ສະສົມ) ຂອງອະນຸພາກ ຂອງແຂງ ແລະ ຂອງແຫຼວໃນຊັ້ນບັນຍາກາດ ທີ່ມີຂະໜາດຢູ່ໃນລະຫວ່າງ 0.01 ແລະ 10 ໄມໂຄແມັດ (μ m) ລອຍຕົວຢູ່ຊັ້ນບັນຍາກາດເປັນເວລາຫຼາຍຊົ່ວໂມງ. ຝຸ່ນລະອອງອາດເກີດມາຈາກທຳມະຊາດເອງ ຫຼື ກິດຈະກຳຂອງມະນຸດສ້າງຂຶ້ນ. ຝຸ່ນລະອອງ ອາດສົ່ງຜົນຕໍ່ສະພາບການປ່ຽນແປງດິນຟ້າອາກາດຜ່ານຫຼາຍຊ່ອງທາງເຊັ່ນ ການກະຈາຍ ແລະ ດູດຊຶມຜ່ານຄວາມຮ້ອນໂດຍກົງ ແລະ ໂດຍທາງອ້ອມ ຈະເຮັດການຄວບຄຸມຄວາມໜາແໜ້ນຂອງເມກ ຫຼື ປັບຄຸນສົມບັດ ຂອງແສງສະຫວ່າງ ແລະ ຊ່ວງໄລຍະເວລາກໍ່ຕົວຂອງເມກ.

A collection of airborne solid or liquid particles, with a typical size between 0.01 and 10 μm, that reside in the atmosphere for at least several hours. Aerosols may be of either natural or anthropogenic origin. Aerosols may influence climate in several ways: directly through scattering and absorbing radiation, and indirectly by acting as cloud condensation nuclei or modifying the optical properties and lifetime of clouds.

Albedo: ລັງສີຄວາມຮ້ອນຂອງດວງອາທິດທີ່ຖືກສະທ້ອນກັບ

ໝາຍເຖິງ ສັດສ່ວນຂອງລັງສີຄວາມຮ້ອນທີ່ຖືກສະທ້ອນກັບຈາກໜ້າດິນ ຫຼື ວັດຖຸສ່ວນຫຼາຍແມ່ນໄລ່ເປັນເປີເຊັນ. ພື້ນຜິວທີ່ປົກຫຸ້ມດ້ວຍຫິມະ ແມ່ນມີການສະທ້ອນລັງສີຄວາມຮ້ອນສູງ, ການສະທ້ອນລັງສີຄວາມຮ້ອນຂອງດິນ ແມ່ນໄດ້ຈັດເປັນຊ່ວງ ແຕ່ສູງຫາຕ່ຳ ແລະ ສຳລັບພື້ນທີ່ພືດປົກຫຸ້ມ ແລະ ມະຫາສະມຸດ ແມ່ນມີການສະທ້ອນລັງສີຄວາມຮ້ອນຕ່ຳ.

The fraction of solar radiation reflected by a surface or object, often expressed as a percentage. Snow-covered surfaces have a high albedo, the surface albedo of soils ranges from high to low, and vegetation- covered surfaces and oceans have a low albedo. The Earth's planetary albedo varies mainly through varying cloudiness, snow, ice, leaf area, and land cover changes.

Adaptation Options: ບັນດາທາງເລືອກໃນການປັບຕົວ

ໝາຍເຖິງ ບັນດາຍຸດທະສາດ ແລະ ມາດຕະການຕ່າງ ທີ່ມີ ແລະ ເໝາະສົມຕໍ່ກັບການແກ້ໄຂບັນຫາການປັບຕົວ. ແມ່ນປະກອບດ້ວຍຫຼາຍປັດໃຈເຊັ່ນ: ດ້ານໂຄງສ້າງ, ສະຖາບັນການຈັດຕັ້ງ, ນິເວດວິທະຍາ ຫຼື ພຶດຕິກຳ

The array of strategies and measures that are available and appropriate for addressing adaptation. They include a wide range of actions that can be categorized as structural, institutional, ecological or behavioural.

Aggregate Impacts: ຜົນກະທົບລວມ

ໝາຍເຖິງ ຜົນກະທົບທັງໝົດ ທີ່ລວບລວມໄດ້ຈາກ ຂະແໜງການຕ່າງໆ ຫຼື ໃນລະດັບພາກພື້ນ. ຜົນກະທົບລວມ ທີ່ກວມເອົາຫຼາຍພາກສ່ວນແມ່ນມີຄວາມຈຳເປັນຕ້ອງໃຊ້ຄວາມຮູ້ ຫຼື ສົມມຸດຖານ ກ່ຽວກັບຄວາມສຳຄັນຂອງຜົນກະທົບທີ່ມີຄວາມແຕກຕ່າງກັນໃນແຕ່ລະຂະແໜງການ ແລະ ຂົງເຂດຕ່າງໆ, ການວັດແທກຜົນກະທົບລວມ. ຕົວຢ່າງ: ຈຳນວນຄົນທັງຫມົດທີ່ໄດ້ຮັບຜົນກະທົບ ຫຼື ມູນຄ່າເສຍຫາຍທາງດ້ານເສດຖະກິດທັງຫມົດ.

Total impacts integrated across sectors and/or regions. The aggregation of impacts requires knowledge of (or assumptions about) the relative importance of impacts in different sectors and regions. Measures of aggregate impacts include, for example, the total number of people affected, or the total economic costs.

Atmosphere: ຊັ້ນບັນຍາກາດ

ໝາຍເຖິງ ທາດອາຍຕ່າງໆ ເປັນອົງປະກອບຊັ້ນບັນຍາກາດຫໍ່ຫຸ້ມໂລກ. ຊັ້ນບັນຍາປະກອບດ້ວຍທາດໄນໂຕຣເຈນ (N_2) 78.1%, ອົກຊີເຈນ (O_2) 20.9 %, ທາດອາກອນ (Ar) ປະມານ 0.93 %, ທາດອາຍເອລຽມ(He) ແລະ ທາດອາຍເຮືອນແກ້ວ ເຊັ່ນ: ກາກບອນໄດອອກໄຊ 0.035% ແລະ ຊັ້ນໂອໂຊນ. ນອກຈາກນັ້ນ, ຊັ້ນບັນຍາກາດຍັງປະກອບດ້ວຍການລະເຫີຍຂອງອາຍນ້ຳ ປະມານ 1 %, ເມກ ແລະ ຝຸ່ນລະອອງ.

The gaseous envelope surrounding the Earth. The dry atmosphere consists almost entirely of nitrogen (78.1% volume mixing ratio) and oxygen (20.9%

volume mixing ratio), together with a number of trace gases, such as argon (0.93% volume mixing ratio), helium, and radiatively active greenhouse gases such as carbon dioxide (0.035% volume mixing ratio) and ozone. In addition, the atmosphere contains the greenhouse gas water vapor, whose amounts are highly variable but typically around 1% volume mixing ratio. The atmosphere also contains clouds and aerosols.

Adaptation Fund: ກອງທຶນການປັບຕົວ

ກອງທຶນການປັບຕົວ ໄດ້ຖືກສ້າງຕັ້ງຂຶ້ນເພື່ອສະໜອງທຶນໃຫ້ແກ່ໂຄງການການປັບຕົວແລະແຜນງານ ໃນບັນດາປະເທດທີ່ກຳລັງພັດທະນາ ໂດຍສະເພາະປະເທດທີ່ມີຄວາມບອບບາງ ແລະ ເປັນພາຄີຂອງສົນທິສັນຍາກຽວໂຕ. ກອງທຶນດັ່ງກ່າວ ແມ່ນໄດ້ສະໜອງງົບປະມານທີ່ມີສ່ວນແບ່ງມາຈາກລາຍໄດ້ຂອງກິດຈະກຳໂຄງການ ກົນໄກການພັດທະນາສະອາດ (CDM) ແລະ ໄດ້ຮັບງົບປະມານຈາກແຫຼ່ງອື່ນໆ. ຊຶ່ງໄດ້ດຳເນີນການໂດຍ ຄະນະກຳມະການກອງທຶນການປັບຕົວ.

The Adaptation Fund was established to finance concrete adaptation projects and programmes in developing countries that are particularly vulnerable and are Parties to the Kyoto Protocol. The Fund is to be financed with a share of proceeds from clean development mechanism (CDM) project activities and receive funds from other sources. It is operated by the Adaptation Fund Board.

Afforestation: ການປູກໄມ້ໃຫ້ເປັນປ່າໃສ່ດິນທີ່ຖືກເປົ່າຫວ່າງ ມາດົນແລ້ວ

ໝາຍເຖິງ ການປູກໄມ້ ໃສ່ພື້ນທີ່ຊຶ່ງບໍ່ເຄີຍເປັນປ່າໄມ້ມາກ່ອນ ໃນໄລຍະເວລາ 50 ປີ, ຍ້ອນສາເຫດມາຈາກການຫັນປ່ຽນທີ່ດິນປ່າໄມ້ຂອງມະນຸດໃຫ້ກາຍເປັນພື້ນທີ່ປ່າໄມ້ດ້ວຍການປູກຕົ້ນໄມ້, ຂະຫຍາຍແນວພັນ ແລະ ສົ່ງເສີມປະຊາຊົນ ຂະຫຍາຍແນວພັນທີ່ໄດ້ມາຈາກທຳມະຊາດ.

Afforestation is the direct human-induced conversion of land that has not been forested for a period of at least 50 years to forested land through planting, seeding and/or the human-induced promotion of natural seed sources.

Agro-Forestry: ກະສິກຳ-ປ່າໄມ້ ແບບປະສົມປະສານ

ແມ່ນລະບົບການຄຸ້ມຄອງທີ່ດິນ ແບບຍືນຍົງ ຊຶ່ງໂດຍລວມແລ້ວ ເຮັດໃຫ້ຜົນຜະລິດໃນເນື້ອທີ່ດິນນັ້ນເພີ່ມຂຶ້ນ, ການປູກພືດ ແບບປະສົມປະສານ ກັບການປູກປ່າ ຫຼື ການລ້ຽງສັດ ພ້ອມດຽວກັນນັ້ນ ການຄຸ້ມຄອງການການນຳໃຊ້ທີ່ດິນໃນຕອນດຽວກັນ ກໍໃຫ້ເໝາະສົມກັບວັດທະນະທຳຮີດຄອງປະເພນີ ຂອງປະຊາຊົນທ້ອງຖິ່ນ

Agroforestry is a sustainable land management system which increases the overall yield of the land, combines the production of crops, including tree crops and forest plants or animals simultaneously the same unit of the land applies management practices that are compatible with the cultural practices of the local population" (KING & CHANDLER 1978).

Agriculture, Forestry and Other Land Use (AFOLU): ການກະສິກຳ, ປ່າໄມ້ ແລະ ນຳໃຊ້ທີ່ດິນອື່ນໆ

ໝາຍເຖິງ ການປ່ອຍທາດອາຍເຮືອນແກ້ວ ແລະ ການເກັບກັກທາດກາກບອນ ຈາກໂຄງການທີ່ຕິດພັນກັບການນຳໃຊ້ທີ່ດິນ ໂດຍບໍ່ກ່ຽວຂ້ອງກັບຂະແໜງການອື່ນໆ ເຊັ່ນ ອຸດສາຫະກຳ ແລະ ພະລັງງານ.

The category of greenhouse emissions reduction and carbon sequestration activity involving land-based projects and programmes, as opposed to that of the industrial and energy sectors.

Allocation: ການຈັດສັນ

ໝາຍເຖິງ ການຈັດສັນ ການປ່ອຍອາຍເຮືອນແກ້ວ ທີ່ມີການຢັ້ງຢືນ ຫຼື ໄດ້ຮັບອະນຸຍາດໃຫ້ຜູ້ປະກອບການສາມາດປ່ອຍທາດອາຍເຮືອນແກ້ວ ເພື່ອສ້າງຕະຫຼາດ ການຄ້າຂາຍການປ່ອຍທາດອາຍເຮືອນແກ້ວ. ການຈັດສັນ ການປ່ອຍອາຍເຮືອນແກ້ວ ທີ່ມີການຢັ້ງຢືນຫຼືໄດ້ຮັບອະນຸຍາດ ສາມາດປະຕິບັດໂດຍອີງໃສ່ກົດລະບຽບ ໃນໄລຍະຜ່ານມາ (ອີງຕາມການປ່ອຍທາດອາຍເຮືອນແກ້ວໃນອະດີດ) ຫຼື ໃບອະນຸຍາດການປະມູນ.

The allocation of emissions permits or allowances among greenhouse gas emitters to establish an emission trading market. The allocation of emission permits / allowances can be done through grandfathering (based on past emissions) or the auctioning of permits.

Allowance: ການອະນຸຍາດ

ໝາຍເຖິງ ການອະນຸຍາດໃຫ້ປ່ອຍທາດອາຍເຮືອນແກ້ວ ໃນປະລິມານທີ່ກຳນົດໃຫ້ (ຕົວຢ່າງ: 1 ໂຕນ ອາຍກາກໂບນິກທຽບເທົ່າ)

An authorization to emit a fixed amount of a pollutant (e.g. one ton of CO_2e).

Annex-I, Annex-B Countries/Parties: ປະເທດໃນບັນຊີ I, ປະເທດ/ລັດພາຄີໃນບັນຊີ B ຂອງອະນຸສັນຍາກຽວໂຕ

ໝາຍເຖິງ ປະເທດທີ່ໄດ້ລົງນາມ ໃນສົນທິສັນຍາກຽວໂຕ ຊຶ່ງຢູ່ພາຍໃຕ້ ຂໍ້ຈຳກັດການປ່ອຍທາດອາຍເຮືອນແກ້ວ ແລະ ມີເປົ້າໝາຍ ໃນການຫຼຸດຜ່ອນ ບັນດາປະເທດ ທີ່ມີການພັດທະນາ ເສດຖະກິດ.

ປະເທດໃນບັນຊີ I ລວມມີ 36 ປະເທດ ທີ່ມີເປົ້າໝາຍຫຼຸດຜ່ອນ ໃນກອບຂອງສົນທິສັນຍາ ສ ປ ຊ ວ່າດ້ວຍການປ່ຽນແປງ ດິນຟ້າອາກາດ; ສ່ວນປະເທດພາຄີ ໃນບັນຊີ B ປະກອບມີ 39 ປະເທດ ຊຶ່ງກຳນົດຢູ່ພາຍໃຕ້ສົນທິສັນຍາ ກຽວໂຕ ໃນປະຈຸບັນໂດຍປະເທດໃນກຸ່ມນີ້ ໄດ້ມີການປະກາດ ເປົ້າໝາຍຂອງການຫຼຸດຜ່ອນ ທາດອາຍເຮືອນແກ້ວຢ່າງເປັນທາງການແລ້ວ.

The signatory nations to the Kyoto Protocol that are subject to caps on their emissions of greenhouse gases and committed to reduction targets – countries with developed economies. Annex I refers to the 36 countries identified for reduction in the UNFCCC while the Annex B is an adjusted list of 39 countries identified under the more recent Kyoto Protocol. Annex B countries have their reduction targets formally stated.

Annex II Parties: ປະເທດໃນບັນຊີ II ຂອງສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ

ໝາຍເຖິງ ກຸ່ມຍ່ອຍ ບັນດາປະເທດໃນບັນຊີ 1/B, ປະເທດໃນບັນຊີ II ຫຼາຍປະເທດ ໄດ້ລົງນາມໃນກອບຂອງສົນທິສັນຍາ ສປຊ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ເປັນສະມາຊິກຂອງອົງກອນ ເພື່ອການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (OECD) ແມ່ນກຸ່ມປະເທດອຸດສາຫະກຳທີ່ພັດທະນາແລ້ວ. ບັນດາປະເທດດັ່ງກ່າວ ມີຂໍ້ກຳນົດເພີ່ມເຕີມເພື່ອຊ່ວຍພັດທະນາປະເທດອື່ນ ຕ້ານການປ່ຽນແປງດິນຟ້າອາກາດ ໂດຍຜ່ານການຖ່າຍທອດ ທາງດ້ານເຕັກໂນໂລຊີ ແລະ ງົບປະມານ.

A subset of Annex 1/B, Annex II countries is signatory nations to the UNFCCC which are also members of the OECD - the most industrialised economies. They have extra obligations to help developing nations combat climate change via technology transfer and financial help.

Anthropogenic Greenhouse Emissions: ການປ່ອຍທາດອາຍເຮືອນແກ້ວຈາກກິດຈະກໍາຂອງມະນຸດ

ໝາຍເຖິງ ຄວາມແຕກຕ່າງ ການປ່ອຍອາຍເຮືອນແກ້ວ ທີ່ເກີດຂຶ້ນຕາມທໍາມະຊາດ, ທີ່ມີຜົນມາຈາກກິດຈະກໍາຂອງມະນຸດ. (ຊຶ່ງມີສາເຫດຈາກມະນຸດເປັນຜູ້ສ້າງຂຶ້ນ)

The term used to distinguish naturally occurring greenhouse gas emissions from ones that result from human activity. (It is also referred as human induced).

Ad Hoc Working Group on the Paris Agreement (APA): ຄະນະກໍາມະການສະເພາະກິດ ວ່າດ້ວຍສັນຍາປາຣີ

ໝາຍເຖິງຄະນະກໍາມະການສະເພາະກິດວ່າດ້ວຍສັນຍາປາຣີຊຶ່ງຄະນະສະເພາະກິດດັ່ງກ່າວໄດ້ຮັບການສ້າງຕັ້ງຂຶ້ນເພື່ອກະກຽມຄວາມພ້ອມເມື່ອສັນຍາປາຣີ ມີຜົນບັງຄັບໃຊ້ ແລະ ຈັດກອງປະຊຸມຄັ້ງທໍາອິດ ຂອງລັດພາຄີພາຍໃຕ້ສັນຍາປາຣີ.

Ad Hoc Working Group on the Paris Agreement. The APA was established to prepare for the entry into force of the Paris Agreement and for the convening of the first session of the Conference of the Parties serving as the meeting of the Parties to the Paris Agreement (CMA).

Avoided Deforestation: ຫຼີກລ້ຽງການທໍາລາຍປ່າໄມ້

ໝາຍເຖິງ ສະພາບ ກ່ຽວກັບ ທີ່ດິນ ທີ່ສະແດງໃຫ້ເຫັນວ່າມີການຫຼີກລ້ຽງການທໍາລາຍປ່າໄມ້ ເນື່ອງຈາກວ່າມີການປັບປຸງ ທາງດ້ານນະໂຍບາຍ, ການສະໜອງແຫຼ່ງທຶນ, ກິດຈະກໍາ, ເປົ້າໝາຍ ແລະ ອື່ນໆ

This occurs when land that would have been demonstrably deforested is not, because of a change in policy, funding, actions, goals, etc.

Avoiding Unplanned Frontier Deforestation and Degradation (AUFDD): ຫຼີກລ້ຽງການທໍາລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມໃນພື້ນທີ່ປ່າໄມ້

ໝາຍເຖິງ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ດ້ວຍວິທີການຢຸດຕິການທໍາລາຍປ່າໄມ້ຊຸດໂຊມ ສໍາລັບປ່າໄມ້ ທີ່ມີການເຕີບໃຫຍ່ຢູ່ເຂດພື້ນທີ່ປ່າໄມ້. ໄດ້ມີການຂະຫຍາຍ

ຂອບເຂດໃນໄລຍະຜ່ານມາ ຫຼື ຈະຂະຫຍາຍອອກຕື່ມໃນອະນາຄົດ ຊຶ່ງມີສາເຫດມາຈາກການປັບປຸງ ການເຂົ້າເຖິງປ່າໄມ້ ແລະ ການສ້າງເສັ້ນທາງ.

The reduction in GHG emissions by stopping deforestation/degradation of degraded to mature forests at the forest frontier that has been expanding historically, or will expand in the future, as a result of improved forest access, often through construction of roads.

Avoiding Unplanned Mosaic Deforestation and Degradation (AUMDD): ຫຼີກລ້ຽງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມທີ່ ກະແຈກກະຈາຍ ໂດຍບໍ່ມີແຜນ

ໝາຍເຖິງ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍການຢຸດການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ ທີ່ສາມາດຫຼີກລ້ຽງໄດ້ ໃນພື້ນທີ່ປ່າໄມ້ທີ່ຢູ່ແບບກະແຈກກະຈາຍ ດ້ວຍຫຼາຍຮູບແບບ. ເປັນຕົ້ນການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ ແມ່ນພົບເຫັນຢູ່ເຂດທີ່ມີປະຊາຊົນ ແລະ ການນຳໃຊ້ທີ່ດິນ ໃນການສ້າງເສັ້ນທາງ, ເຮັດໃຫ້ປ່າໄມ້ຊຸດໂຊມ, ປ່າໄມ້ປະເພດສອງ ທີ່ມີອາຍຸແຕກຕ່າງກັນ, ປ່າໄມ້ກຳລັງເຕີບໃຫຍ່ ໂດຍສະເພາະ ໃນພື້ນທີ່ປ່າໄມ້ທີ່ສາມາດເຂົ້າເຖິງໄດ້ງ່າຍ ແລະ ອີງກອນທີ່ເຮັດໜ້າທີ່ຄຸ້ມຄອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າ ໄມ້ຊຸດໂຊມ ໄດ້ນຳສະເໜີເພື່ອຄຸ້ມຄອງເຂດພື້ນທີ່ດັ່ງກ່າວ.

The reduction in GHG emissions by stopping deforestation/degradation of degraded to mature forests occurring in a mosaic pattern. Such deforestation/ degradation typically occurs where population pressure and local land use practices produce a patchwork of cleared lands, degraded forests, secondary forests of various ages, and mature forests; where the forests are accessible; and where the agents of deforestation/ degradation typically are present within the region containing the area to be protected.

AWG-KP: ຄະນະກຳມະການສະເພາະກິດ ກ່ຽວກັບ ການຄົ້ນຄ້ວາພັນທະສຳລັບກຸ່ມປະເທດທີ່ພັດທະນາແລ້ວ ໃນບັນຊີ ທີ 1 ພາຍໃຕ້ ອະນຸສັນຍາ ກຽວໂຕ

ໝາຍເຖິງ ຄະນະກຳມະການສະເພາະກິດດ້ານການກຳນົດພັນທະປະເທດພາຄີໃນບັນຊີ 1 ພາຍໃຕ້ ອະນຸສັນຍາກຽວໂຕ ໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ. ຄະນະສະເພາະກິດນີ້ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2005 ໂດຍປະເທດພາຄີພາຍໃຕ້ອະນຸສັນຍາກຽວ

ໂຕ ທີ່ເມືອງ ມອນທຣີໂອ ເພື່ອພິຈາລະນາພັນທະຂອງບັນດາປະເທດອຸດສາຫະກໍາ ພາຍໃຕ້ອະນຸສັນຍາກຽວໂຕ ພາຍຫຼັງປີ 2012.

Ad hoc Working Group on further commitments for Annex I Parties under the Kyoto Protocol. The AWG-KP was established in 2005 by Parties to the Kyoto Protocol in Montreal to consider further commitments of industrialized countries under the Kyoto Protocol for the period beyond 2012.

AWG-LCA: ຄະນະກໍາມະການສະເພາະກິດ ກ່ຽວກັບການຄົ້ນຄ້ວາ ຮ່ວມມືໄລຍະຍາວ ເພື່ອການດໍາເນີນງານ ພາຍໃຕ້ສົນທິສັນຍາ

ໝາຍເຖິງ ຄະນະກໍາມະການສະເພາະກິດ ກ່ຽວກັບການຄົ້ນຄ້ວາ ຮ່ວມມືໄລຍະຍາວ ເພື່ອການດໍາເນີນງານ ພາຍໃຕ້ສົນທິສັນຍາ. ຄະນະກໍາມະການດັ່ງກ່າວໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2007 ທີ່ ບາລີ ເພື່ອດໍາເນີນການເຈລະຈາດ້ານການຮ່ວມມືໄລຍະຍາວ ເພື່ອການສ້າງຄວາມເຂັ້ມແຂງ ໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດໃນເວທີສາກົນ.

Ad hoc Working Group on Long-term Cooperative Action under the Convention. The AWG-LCA was established in Bali in 2007 to conduct negotiations on a strengthened international deal on climate change.

B

Bali Road Map: ແຜນປະຕິບັດງານບາລີ

ແຜນປະຕິບັດງານ ບາລີ ໄດ້ຖືກຮັບຮອງໃນ ກອງປະຊຸມຄັ້ງທີ 13 ຂອງລັດພາຄີ ແລະ ກອງປະຊຸມຄັ້ງທີ 3 ເດືອນ ທັນວາ 2007 ຢູ່ ບາລີ. ແຜນປະຕິບັດງານດັ່ງກ່າວ ແມ່ນແນວທາງການຕັດສິນໃຈ ກ່ຽວກັບ ການນໍາສະເໜີໜ້າວຽກຕໍ່ກັບຄວາມຕ້ອງການ ເພື່ອການເຈລະຈາ ການຕິດຕາມ ແມ່ນມີຄວາມສໍາຄັນ ຕໍ່ການຮັບປະກັນຄວາມໝັ້ນຄົງ ທາງດ້ານສະພາບອາກາດໃນອະນາຄົດ. ຊຶ່ງໄດ້ລວມເອົາ ແຜນການດໍາເນີນງານ ບາລີ ແມ່ນຂອບວຽກໃນຂະບວນການຕໍ່ລອງ ເພື່ອກໍານົດການຕໍ່ສູ້ກັບ ບັນຫາການປ່ຽນແປງດິນຟ້າອາກາດ ໂດຍມີຈຸດປະສົງໃຫ້ສໍາເລັດພາຍໃນເດືອນທັນວາ ປີ 2009. ລວມເອົາການເຈລະຈາ ຂອງ AWG-KP, ການນໍາໃຊ້ກອງທຶນການປັບຕົວ, ຂອບເຂດ ແລະ ເນື້ອໃນຂອງມາດຕາ 9 ໃນການທົບທວນສົນທິສັນຍາ ກຽວໂຕ ລວມທັງ ການຕັດສິນໃຈການຖ່າຍທອດທາງດ້ານເຕັກໂນໂລຊີ ແລະ ການຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການເຮັດໃຫ້ພື້ນທີ່ປ່າໄມ້ເຊື່ອມໂຊມ.

The Bali Road Map was adopted at the 13th Conference of the Parties and the 3rd Meeting of the Parties in December 2007 in Bali. The Road Map is a set of a forward-looking decisions that represent the work that needs to be done under various negotiating "tracks" that is essential to reaching a secure climate future. It includes the Bali Action Plan, which charts the course for a new negotiating process designed to tackle climate change, with the aim of completing this by 2009. It also includes the AWG-KP negotiations, the launch of the Adaptation Fund, the scope and content of the Article 9 review of the Kyoto Protocol, as well as decisions on technology transfer and on reducing emissions from deforestation.

Baseline(reference): ເສັ້ນທຽບຖານ(ຂໍ້ມູນອ້າງອີງ)

ໝາຍເຖິງ ເສັ້ນທຽບຖານ (ຫຼື ຂໍ້ມູນອ້າງອີງ) ແມ່ນສະແດງເຖິງສະພາບ ທີ່ໃຊ້ປຽບທຽບເພື່ອວັດແທກການປ່ຽນແປງ ໂດຍອາດຈະເປັນເສັ້ນທຽບຖານໃນປະຈຸບັນ ຊຶ່ງສະແດງໃຫ້ເຫັນເຖິງເງື່ອນໄຂໃນປະຈຸບັນທີ່ສາມາດສັງເກດເຫັນໄດ້ ຫຼື ອາດຈະເປັນເສັ້ນຖຽບຖານໃນອະນາຄົດ ເຊິ່ງເປັນເງື່ອນໄຂໜຶ່ງ ໃນການຄາດຄະເນໃນອານາຄົດ ໂດຍບໍ່ລວມປັດໃຈຊຸກ

ຍູ້ທາງດ້ານຜົນປະໂຫຍດ. ການອະທິບາຍຄວາມໝາຍແບບຕ່າງໆ ຂອງເງື່ອນໄຂອ້າງອີງສາມາດນຳໄປສູ່ຂໍ້ມູນອ້າງອີງທີ່ມີຫຼາຍຮູບແບບ

The baseline (or reference) is the state against which change is measured. It might be a 'current baseline', in which case it represents observable, present-day conditions. It might also be a 'future baseline', which is a projected future set of conditions excluding the driving factor of interest. Alternative interpretations of the reference conditions can give rise to multiple baselines.

Base year: ປີທຽບຖານ

ໝາຍເຖິງການກຳນົດປີຖານ ໃນການອະນຸຍາດໃຫ້ປ່ອຍທາດອາຍເຮືອນແກ້ວ ຈະສົມທຽບກັບການປ່ອຍ ໃນແຕ່ລະໄລຍະເວລາ.

ປີ 1990 ແມ່ນເປັນປີທຽບຖານ ທີ່ໃຊ້ຢູ່ໃນສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UNFCCC) ແລະ ການຈຳກັດປະລິມານການປ່ອຍທາດອາຍເຮືອນແກ້ວ ແລະ ຂໍ້ຜູກມັດການຫຼຸດຜ່ອນ ການປ່ອຍທາດອາຍເຮືອນແກ້ວ ພາຍໃຕ້ສົນທິສັນຍາກຽວໂຕ (Kyoto Protocol).

ເຖິງຢ່າງໃດກໍ່ຕາມ, ບັນດາປະເທດທີ່ເຫັນວ່າມີການປ່ຽນແປງທາງດ້ານເສດຖະກິດ ໄດ້ເລືອກປີທຽບຖານທີ່ແຕກຕ່າງກັນ ໂດຍຖືເອົາການຕັດສິນໃຈຢູ່ໃນກອງປະຊຸມ ບັນດາປະເທດພາຄີ ຄັ້ງທີ 2 (COP2) ເປັນປີທຽບຖານພາຍໃຕ້ສົນທິສັນຍາ, ພ້ອມດຽວກັນນັ້ນບັນດາປະເທດຮ່ວມພາຄີໃນບັນຊີ 1. ເລືອກເອົາ ປີ 1995 ເປັນປີທຽບຖານໃນການປ່ອຍທາດອາຍເຮືອນແກ້ວ ທີ່ນຳໃຊ້ໃນອຸດສະຫະກຳ 3 ປະເພດ ທີ່ໄດ້ກຳນົດໃນອະນຸສັນຍາຄື: ໄຮໂດຣຟູອໍໂຣກາກບອນ, ເປີຟູອໍໂຣກາກບອນ ແລະ ຊູນເຟີເຮັກຊາອໍລາຍ. ເງື່ອນໄຂນີ້ຍັງນຳໃຊ້ໃນຮູບແບບການລາຍງານແບບສະມັກໃຈ ແລະ ໂດຍທົ່ວໄປແລ້ວ ຍັງໃຊ້ອ້າງອີງເຖິງປີທຳອິດໃນການກະກຽມການສຳຫຼວດທາດອາຍເຮືອນແກ້ວ.

It means setting a base year to allow for emissions to be accurately compared over time.

The year 1990 is the base year used in the UNFCCC and also for most quantified emission limitations and reduction commitments established under the Kyoto Protocol.

However, countries defined as economies in transition that chose a different base year under decision taken at the second Conference Of Parties (COP2) meeting shall use that base year under the Protocol. Also, all Annex I Parties have the option of choosing 1995 as the base year for their emissions of the three industrial gases covered by the Protocol – hydrofluorocarbons, perfluorocarbons and sulphur hexafluoride. The term is also used for voluntary reporting and generally refers to the first year a GHG inventory is prepared.

Baseline Scenario: ສະຖານະການຈຳລອງທຽບຖານ

ແມ່ນກໍລະນີສົມທຽບ ເພື່ອສະແດງໃຫ້ເຫັນລະດັບການປ່ອຍທາດອາຍເຮືອນແກ້ວ ທີ່ຈະເກີດຂຶ້ນໃນອະນາຄົດ ຂ້ອນຂ້າງແນ່ນອນຢູ່ແລ້ວ, ຖ້າຫາກບໍ່ມີການດຳເນີນມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວອັນໃດເລີຍ.

ໃນການຊອກຫາວິທີວັດແທກການປ່ຽນແປງ ຂອງທາດອາຍເຮືອນແກ້ວ ວ່າມີການເພີ່ມຂຶ້ນ ຫຼື ຫຼຸດລົງ ມັນມີຄວາມຈຳເປັນທີ່ຈະຕ້ອງຮູ້ຈຳນວນທີ່ປ່ອຍອອກມາໃນອາດີດ (ຈະເຊື່ອມໂຍງກັບວັນທີ ຫຼື ປີ) ຊຶ່ງການປຽບທຽບຕາມໄລຍະເວລາ. ຊຶ່ງເອີ້ນວ່າ: ສະຖານະການຈຳລອງທຽບຖານ ຫຼື ເສັ້ນບັນທັດຖານ ເຊັ່ນ: ປະລິມານທີ່ຄາດວ່າຈະມີການປ່ອຍທາດອາຍເຮືອນແກ້ວ ຖ້າບໍ່ມີການດຳເນີນກິດຈະກຳ ກ່ຽວກັບການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ, ໃນກໍລະນີຂອງ REDD. ສ່ວນໃຫຍ່ອີງໃສ່ປະຫວັດການປ່ອຍທາດອາຍ ເຮືອນແກ້ວ (ສະເລ່ຍການປ່ອຍ ໃນໄລຍະຜ່ານມາ), ໂດຍການສ້າງແບບຈຳລອງສົມທຽບ (ທາງດ້ານພື້ນທີ່ເຊັ່ນ ການນຳໃຊ້ທີ່ດິນ ຫຼື ແບບຈຳລອງຂະບວນການຜະລິດ, ແບບຈຳລອງທາງເສດຖະກິດ) ແລະ ການເຈລະຈາທຽບຖານ.

Reference case that illustrates future GHG emission levels most likely to occur in the absence of GHG mitigation activities.

In seeking to measure whether greenhouse gases have increased or decreased, it is necessary to have a known previously emitted amount (often connected to a baseline date or year), against which to make a comparison over time. This is often referred to as the baseline scenario or baseline, i.e. expected emissions if the emission reduction activities were not implemented. In the case of REDD, the main options are historical baselines (average emissions during a past period), modelled baselines (spatially explicit - e.g., land use models or none spatially explicit process models e.g., econometric models), and negotiated baselines.

Biodiversity: ຊີວະນາໆພັນ

ໝາຍເຖິງຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນ ຂອງສິ່ງທີ່ມີຊີວິດ ເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີຢູ່ໃນຂອບເຂດທໍາມະຊາດໃດໜຶ່ງ

The total diversity of all organisms and ecosystems at various spatial scales (from genes to entire biomes).

Biofuels: ເຊື້ອໄຟຊີວະພາບ

ໝາຍເຖິງເຊື້ອໄຟທີ່ໄດ້ມາຈາກແຫຼ່ງຊັບພະຍາກອນທົດແທນທາງດ້ານຊີວະວິທະຍາໃນຮູບທີ່ເປັນຂອງແຫຼວ ຫຼື ເປັນກ້ອນການຜະລິດແຫຼ່ງເຊື້ອໄຟຊີວະພາບ ທີ່ເຮັດໃຫ້ປ່າໄມ້ເຊື່ອມໂຊມ ລວມມີ: ການປູກຕົ້ນປາມ, ຕົ້ນອ້ອຍ, ຖົ່ວເຫຼືອງ ແລະ ອື່ນໆ.

Fuel from renewable biological sources in either solid or liquid form. Biofuel crops associated with deforestation include palm oil, sugar cane and soya.

Biomass: ຊີວະມວນ

ໝາຍເຖິງ ມວນຂອງສິ່ງທີ່ມີຊີວິດທັງໝົດທີ່ຢູ່ໃນພື້ນທີ່ ທີ່ໄດ້ກໍານົດ ຫຼື ປະລິມານຂອງຊາກພືດທີ່ຕາຍແລ້ວ ສາມາດນັບລວມເຂົ້າເປັນຊີວະມວນນໍາໄດ້.

The total mass of living organisms in a given area or volume; dead plant material can be included as dead biomass.

Bundling: ການລວມເຂົ້າກັນ

ການລວມເອົາຫຼາຍໆໂຄງການພັດທະນາສະອາດຂະໜາດນ້ອຍເຂົ້າກັນ ໃຫ້ກາຍເປັນໂຄງການໃຫຍ່ໜຶ່ງ ພາຍໃຕ້ກົນໄກການພັດທະນາແບບສະອາດ ເພື່ອຈຸດປະສົງໃນການຫຼຸດຄ່າໃຊ້ຈ່າຍຕົ້ນທຶນທີ່ກ່ຽວພັນກັບ ພາກບໍລິຫານ-ຄຸ້ມຄອງ ຂອງການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ.

A combination of several small-scale project activities to form a single project activity or portfolio under the CDM in order to decrease transaction costs per unit of emission reductions.

Boundaries: ຂອບເຂດ

ໝາຍເຖິງຂອບເຂດການຄຳນວນ ແລະ ລາຍງານ ທາດອາຍເຮືອນແກ້ວ ແມ່ນສາມາດມີຫຼາຍມິຕິ ເຊັ່ນ: ດ້ານໂຄງຮ່າງການຈັດຕັ້ງ, ຂະບວນການດຳເນີນການ, ພູມສັນຖານ, ຫຼືໜ່ວຍທຸລະກິດ ແລະ ຂອບເຂດເປົ້າໝາຍ. ຂອບເຂດການສຳຫຼວດທາດອາຍເຮືອນແກ້ວແມ່ນກຳນົດເອົາ ແຫຼ່ງປ່ອຍ ເພື່ອຄຳນວນ ແລະ ລາຍງານໂດຍອົງກອນ.

GHG accounting and reporting boundaries can have several dimensions, i.e., organizational, operational, geographic, business unit, and target boundaries. The inventory boundary determines which emissions are accounted and reported by the company.

C

Capacity: ຄວາມສາມາດ

ການປະສົມປະສານທັງຄວາມເຂັ້ມແຂງ, ຄຸນລັກສະນະ ແລະ ຄວາມພ້ອມຂອງແຫຼ່ງຊັບພະຍາກອນທີ່ມີຢູ່ທັງໝົດ ແມ່ນສິ່ງຈຳເປັນສຳລັບ ບຸກຄົນ, ຊຸມຊົນ, ສັງຄົມ ຫຼື ອົງກອນເພື່ອນຳໃຊ້ໃຫ້ບັນລຸເປົ້າໝາຍທີ່ຕັ້ງໄວ້.

The combination of all the strengths, attributes, and resources available to an individual, community, society, or organization, which can be used to achieve established goals.

Capacity Building: ການສ້າງຄວາມສາມາດ

ໝາຍເຖິງ ການພັດທະນາທັກສະທາງດ້ານວິຊາການ ແລະ ຄວາມສາມາດຂອງສະຖາບັນຂອງບັນດາປະເທດ ແລະລະບົບເສດຖະກິດເພື່ອຍົກສູງການມີສ່ວນຮ່ວມໃນທຸກດ້ານຂອງການປັບຕົວ, ການຫຼຸດຜ່ອນ ແລະ ການຄົ້ນຄວ້າ ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ ແລະ ເພື່ອເປັນການຈັດຕັ້ງປະຕິບັດຕາມກົນໄກ ຂອງສົນທິສັນຍາກຽວໂຕ ແລະອື່ນໆ

Capacity building is developing the technical skills and institutional capabilities of countries and economies to enable their participation in all aspects of adaptation to, mitigation of, and research on climate change, and in the implementation of the Kyoto Mechanisms

Caps: ກຳນົດລະດັບການປ່ອຍ

ໝາຍເຖິງການກຳນົດປະລິມານການປ່ອຍທາດອາຍເຮືອນແກ້ວ ທີ່ຕິດພັນຕາມກົດໝາຍສຳລັບປະເທດໃດໜຶ່ງ, ຂົງເຂດ ຫຼື ອົງການຈັດຕັ້ງໃດໜຶ່ງ.

Caps can be defined as legally binding limits to emissions from a country, sector, or organization.

Carbon Accounting: ການຄິດໄລ່ຫາ ທາດອາຍກາກບອນ

ການຕິດຕາມການປ່ຽນແປງປະລິມານທາດອາຍກາກບອນ ຈາກແຫຼ່ງຕ່າງໆ ເກີດຈາກການກະທຳຂອງມະນຸດ ແລະ ການຫຼູດປະລິມານລົງ ຂອງທາດອາຍເຮືອນແກ້ວ.

The tracking of changes in carbon pools associated with human-induced sources and sinks of greenhouse gas emissions.

Carbon Benefits: ຜົນປະໂຫຍດຈາກທາດອາຍກາກບອນ

ປະລິມານທາດກາກບອນທີ່ເພີ່ມຂຶ້ນ ຈາກການຫຼີກເວັ້ນການປ່ອຍທາດອາຍເຮືອນແກ້ວ ຫຼື ການເກັບສະສົມ ທາດກາກບອນ ເມື່ອສົມທຽບກັບ ລະດັບທຽບຖານ ຕາມປົກກະຕິ ແມ່ນໃຊ້ຫົວໜ່ວຍວັດແທກເປັນໂຕນກາກບອນທຽບເທົ່າ (t CO_2e).

The quantity of emissions avoided or carbon sequestered above the business-as-usual scenario, after appropriate deductions are made for leakage and impermanence. Usually measured in tons of carbon dioxide equivalent (t CO_2e).

Carbon Bio Sequestration: ການສະສົມທາດອາຍກາກບອນຊີວະພາບ

ແມ່ນການສະສົມທາດກາກບອນໂດຍພືດ, ຕົ້ນໄມ້ ແລະ ພືດຊະນິດອື່ນໆ ຊຶ່ງຈະດູດຊັບທາດອາຍກາກບອນໄດອອກໄຊ ຈາກຊັ້ນບັນຍາກາດ ມາໃຊ້ເຂົ້າໃນຂະບວນການສັງເຄາະແສງ ແລະ ຈະປ່ອຍອອກຊີເຈນ ແລະ ດູດຊັບທາດກາກບອນໄວ້.

The storage of carbon by plants, trees and other flora, which absorb carbon dioxide from the atmosphere while they grow, release oxygen, and store the carbon.

Carbon Carrying Capacity: ຄວາມສາມາດໃນການເກັບກັກທາດອາຍກາກບອນ

ໝາຍເຖິງ ມວນສານຂອງທາດອາຍກາກບອນ ທີ່ໄດ້ເກັບກັກໄວ້ໃນລະບົບນິເວດປ່າໄມ້ພາຍໃຕ້ສະພາບແວດລ້ອມໂດຍທົ່ວໄປ ແລະ ຖືກລົບກວນໂດຍທຳມະຊາດ ແຕ່ບໍ່ລວມເອົາການລົບກວນຂອງມະນຸດ.

The term used to describe the mass of potential carbon stored in a forest ecosystem under prevailing environmental conditions and natural disturbance regimes, but excluding human induced disturbance.

Carbon Credit Note: ເອກະສານຢັ້ງຢືນສິນເຊື່ອທາດອາຍກາກບອນ

ແມ່ນຢູ່ພາຍໃຕ້ຂໍ້ຜູກມັດ (ໃນຮູບແບບບົດບັນທຶກ ຫຼື ຂໍ້ຜູກມັດ) ເພື່ອໃຫ້ສິນເຊື່ອທາດອາຍກາກບອນ (ໄດ້ຢັ້ງຢືນການຫຼຸດຜ່ອນການປ່ອຍທາດອາຍ) ທີ່ຜູ້ຊື້ໄດ້ກຳນົດວັນເວລາໄວ້ໃນອານາຄົດ.

A fully underwritten obligation (in the form of a note or bond) to deliver a carbon credit (Certified Emission Reduction) to the purchaser at a specified future date.

Carbon Cycle: ການໝູນວຽນ ຫຼື ວົງຈອນ ຂອງທາດອາຍກາກບອນ

ໝາຍເຖິງ ການໝູນວຽນຂອງທາດອາຍກາກບອນ (ໃນຫຼາຍຮູບແບບ ຕົວຢ່າງ: ທາດອາຍກາກບອນໄດອອກໄຊ) ໂດຍຜ່ານຊັ້ນບັນຍາກາດ, ມະຫາສະໝຸດ, ເທິງໜ້າດິນ ແລະ ເປືອກໂລກ.

The term used to describe the flow of carbon (in various forms, e.g., carbon dioxide) through the atmosphere, ocean, terrestrial biosphere and lithosphere.

Carbon Dioxide (CO_2): ທາດອາຍກາກບອນໄດອອກໄຊ

ເປັນອາຍທີ່ເກີດຂຶ້ນຢູ່ໃນທຳມະຊາດຂອງຊັ້ນບັນຍາກາດ, ອາຍຊະນິດນີ້ເກີດຈາກການເຜົາໄໝ້ເຊັ່ນ: ການເຜົາໄໝ້ເຊື້ອໄຟ, ການຍ່ອຍສະຫຼາຍ ຫຼື ການເຜົາໄໝ້ຂອງມວນສານຊີວະພາບ, ນອກນັ້ນການປ່ອຍທາດອາຍກາກບອນ ຍັງເກີດມາຈາກການປ່ຽນແປງການນຳໃຊ້ທີ່ດິນ ແລະ ຈາກການຜະລິດ ຂອງໂຮງງານອຸດສະຫະກຳ.

A gas occurring naturally in the atmosphere. This gas is produced as a by-product of combustion when, for example, fossil fuels and biomass decay or burn. Carbon dioxide can also be emitted with changes in land use and during industrial processes.

Carbon Dioxide Equivalent (CO_2e): ທາດອາຍກາກບອນໄດອອກໄຊຫືວ ໜ່ວຍທຽບເທົ່າ (CO_2e):

ໝາຍເຖິງ ບັນດາທາດອາຍເຮືອນແກ້ວຈຳນວນໜຶ່ງ ເຮັດໃຫ້ຊັ້ນບັນຍາກາດຮ້ອນຂຶ້ນຕາມ ປະສິດທິຜົນບໍ່ເທົ່າກັນເຊັ່ນ: ມີເທນ ຈະເຮັດໃຫ້ເກີດມີຜົນກະທົບຂອງພາວະໂລກຮ້ອນ ຫຼາຍ ກວ່າ CO_2 ຫຼື ຜົນກະທົບໂລກຮ້ອນຂຶ້ນ ທຽບໃສ່ທາດອາຍກາກບອນໄດອອກໄຊ ການ ນຳໃຊ້ຫືວໜ່ວຍທຽບ ທາດອາຍກາກບອນໄດອອກໄຊCO_2eສຳລັບທາດອາຍເຮືອນແກ້ວ ຊະນິດອື່ນໆ ໂດຍການປ່ຽນຈາກ ການຄູນປະລິມານ ແລະ ຫືວໜ່ວຍທຽບເທົ່າ CO_2 ເຮັດໃຫ້ການປະເມີນຜົນກະທົບ ແລະ ກຳນົດການຫຼຸດຜ່ອນທາດອາຍເຮືອນແກ້ວຕ່າງໆສາ ມາດປຽບທຽບກັນໄດ້.

Not all greenhouse gases warm the atmosphere equally; some gases (such as methane) have a greater global warming potential, or warming effect, than carbon dioxide. To account for this, the term CO_2 is used and means that greenhouse gases other than carbon dioxide can be converted, or normalized, to the equivalent amount of CO_2, based on their relative contribution to global warming. This provides for a single, uniform means of measuring emissions reductions for multiple greenhouse gases.

CDM Excutive Board: ສະພາບໍລິຫານກົນໄກການພັດທະນາສະອາດສາກົນ

ໝາຍເຖິງສະພາບໍລິຫານທີ່ຖືກແຕ່ງຕັ້ງຂຶ້ນຢ່າງເປັນທາງການ ໂດຍພາຍໃຕ້ສິດອຳນາດແລະ ການແນະນຳຂອງກອງປະຊຸມສຸດຍອດຂອງບັນດາປະເທດພາຄີສົນທິສັນຍາ ວ່າດ້ວຍການ ປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕ ເພື່ອເຮັດໜ້າທີ່ຊີ້ນຳ ການຈັດຕັ້ງປະຕິ ບັດ ແລະ ການຄຸ້ມຄອງບໍລິຫານ ກົນໄກການພັດທະນາສະອາດ.

CDM Executive Board (CDM-EB) means the formal body established under the authority and guidance of the COP/MOP to oversee the implementation and administration of the CDM.

Carbon Footprint: ການປ່ອຍທາດອາຍກາກບອນ ຈາກຂະບວນການຜະລິດ

ໝາຍເຖິງປະລິມານທາດອາຍເຮືອນແກ້ວ ທີ່ປ່ອຍອອກຈາກແຕ່ລະຫົວໜ່ວຍຜະລິດຕະພັນ ຕັ້ງແຕ່ການໄດ້ວັດຖຸດິບ, ການຂົນສົ່ງ, ຂະບວນການປະກອບສິ້ນສ່ວນ, ການນຳໃຊ້ ແລະ ການກຳຈັດຊາກສິ້ນສ່ວນຂອງຜະລິດຕະພັນ ພາຍຫຼັງທີ່ໃຊ້ແລ້ວ ໂດຍການຄິດໄລ່ອອກມາ ໃນຮູບແບບກາກບອນໄດອອກໄຊ ທຽບເທົ່າ.

The carbon footprint takes into account the quantity of greenhouse gas emissions from each production unit for the whole life cycle (cradle to grave) of a particular product. Carbon footprint thus calculates the carbon dioxide equivalent of the emissions issuing from the extraction of raw materials, transportation and parts for assembly all the way to waste management for end of product lift.

Carbon Market: ຕະຫຼາດ ທາດອາຍກາກບອນ

ໝາຍເຖິງ ການດຳເນີນທຸລະກິດ ກ່ຽວກັບການຊື້-ຂາຍ, ການຫຼຸດຜ່ອນ ແລະ ການຊົດເຊີຍ ໄປພ້ອມໆກັນ ໃນຄວາມເປັນຈິງທາດອາຍກາກບອນໄດອອກໄຊ ແມ່ນເປັນພຽງໜຶ່ງໃນ ທາດອາຍເຮືອນແກ້ວ ທີ່ສາມາດຊື້-ຂາຍໄດ້, ຮູບແບບການຊື້-ຂາຍ ໃນຕະຫຼາດສາກົນແມ່ນ ມີຫຼາກຫຼາຍ ແຕ່ສາມາດຈັດແບ່ງອອກໄດ້ 2 ລັກສະນະໃຫຍ່ໆ ຄື: ຕະຫຼາດບັງຄັບແລະ ຕະຫຼາດແບບສະໝັກໃຈ.

Transactions for the sale of permits, reductions or offsets together comprise the carbon market. In fact, Carbon dioxide is only one of the several greenhouse gases that can be 'traded'. There is still no single, unified international market for emission reduction purchases. Instead, there are various markets, in operation around the world, which can be classified as either 'regulatory' or 'voluntary' markets and which interact with one another in different ways.

Carbon Neutral: ບໍ່ມີການມີການປ່ອຍທາດອາຍກາກບອນ / ບໍ່ສ້າງມົນລະພິດ ຫຼື ເຮັດກິດຈະກຳຫຍັງກໍໄດ້ທີ່ບໍ່ມີການປ່ອຍທາດອາຍເຮືອນແກ້ວ

ໝາຍເຖິງ ບຸກຄົນ, ຄົວເຮືອນ ຫຼື ອົງກອນທີ່ຮັບຜິດຊອບໃນການສະກັດກັ້ນການປ່ອຍ ທາດອາຍເຮືອນແກ້ວ ຈາກທຸກໆກິດຈະກຳຈະຖືວ່າເປັນ Carbon neutral ການປ່ອຍ ຕ້ອງຫຼຸດຜ່ອນໃຫ້ໜ້ອຍທີ່ສຸດ ແລະ ການປ່ອຍຈຳເປັນຕ້ອງໄດ້ຊົດເຊີຍ ດ້ວຍການເຮັດກິດ

ຈະກຳທີ່ສາມາດຫລຸດຜ່ອນການປ່ອຍ. ການຊື້ພະລັງງານໄຟຟ້າທີ່ສະອາດ ຈະຊ່ວຍຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກຄົວເຮືອນຫຼືຫ້ອງການ, ໃນຂະນະທີ່ການລົງທຶນເຂົ້າໃນໂຄງການພະລັງງານ ແບບຍືນຍົງ ຫຼື ໂຄງການຟື້ນຟູປ່າຄືນໃໝ່ແມ່ນຕົວຢ່າງຂອງການຊົດເຊີຍ.

An individual, household or organisation that is responsible for no net emissions of greenhouse gases from all its activities is considered "carbon neutral". Emissions must be cut to a minimum and any necessary emissions then offset by emission reducing activities elsewhere. Buying accredited clean electricity helps cut household or office greenhouse emissions, while investing in sustainable energy projects or afforestation schemes are examples of offsets.

Carbon Offset: ການຊົດເຊີຍທາດອາຍກາກບອນ

ໝາຍເຖິງ ສິນເຊື່ອທີ່ໄດ້ຢັ້ງຢືນໃຫ້ ເພື່ອທົດແທນສຳລັບ ການຫລຸດຜ່ອນທາດອາຍກາກບອນໃນຊັ້ນບັນຍາກາດ ດ້ວຍການດຳເນີນໂຄງການຕ່າງໆ ເຊັ່ນ: ການສະໜອງພະລັງງານທົດແທນ ເພື່ອປ່ຽນແທນ ພະລັງງານເຊື້ອເພີງ ຫຼື ການຟື້ນຟູປ່າໃນທີ່ດິນເປົ່າວ່າງ ເພື່ອສ້າງບ່ອນສະສົມທາດອາຍກາກບອນ. ເພື່ອຊົດເຊີຍຕໍ່ກິດຈະກຳ ຫລຸດຜ່ອນການປ່ອຍຂອງເຂົາເຈົ້າ, ສ່ວນບຸກຄົນ ແລະ ອົງກອນ ສາມາດນຳໃຊ້ ຜົນໄດ້ຮັບທາງດ້ານສິນເຊື່ອ ເປັນບ່ອນສະສົມທາດອາຍກາກບອນ ຂອງຕົນເອງ ດ້ວຍຮູບການສະໝັກໃຈ ຫຼື ຢູ່ພາຍໃຕ້ກົດລະບຽບຂອງໂຄງການຕາມຂອບເຂດການຊື້-ຂາຍທາດອາຍກາກບອນ. ການຊົດເຊີຍສິນເຊື່ອທາດອາຍກາກບອນ ແມ່ນທຽບເທົ່າກັບ ການຫລຸດຜ່ອນການປ່ອຍທາດເຮືອນແກ້ວ 1 ໂຕນ ຂອງທາດອາຍກາກບອນໄດອອກໄຊ

Credits issued in return for a reduction of atmospheric carbon emissions through projects such as the provision of renewable energy to replace fossil fuel energy, or reforesting cleared land to create a carbon sink. By paying for such emission reducing activities, individuals and organizations can use the resulting credits to offset their own emissions, either voluntarily or under the rules of most emissions trading schemes. One offset credit is equivalent to an emission reduction of one metric ton of CO_2e.

Carbon Pool (Reservoir): ແຫຼ່ງສະສົມທາດອາຍກາກບອນ

ແມ່ນລະບົບທີ່ມີຄວາມສາມາດສະສົມ ຫຼື ປ່ອຍທາດກາກບອນໄດ້ ເຊັ່ນ: ແຫຼ່ງສະສົມທາດ

ອາຍກາກບອນ ໃນຮູບການ ຊີວະມວນສານຂອງປ່າໄມ້, ຜະລິດຕະພັນປ່າໄມ້, ດິນ ແລະ ອາກາດ. ຫົວໜ່ວຍທີ່ກຳນົດ ແມ່ນ tC

A system which has the capacity to accumulate or release carbon. Examples of carbon pools are forest biomass, wood products, soils, and atmosphere. The units are mass (e.g., t C).

Carbon Price: ລາຄາທາດອາຍກາກບອນ

ໝາຍເຖິງມູນຄ່າທາງເສດຖະກິດ ກ່ຽວກັບການປ່ອຍທາດອາຍເຮືອນແກ້ວ ຂຶ້ນສູ່ຊັ້ນບັນຍາກາດທີ່ເກີດຈາກການກະທຳຂອງມະນຸດ. ມູນຄ່ານີ້ແມ່ນໄດ້ກຳນົດຂຶ້ນ ເພື່ອສ້າງສິ່ງຈູງໃຈ, ຫຼຸດຫຼັ້ງການປ່ອຍທາດອາຍເຮືອນແກ້ວ, ມູນຄ່າທາດອາຍກາກບອນ ແມ່ນເປັນຮູບແບບພາສີທາດອາຍກາກບອນ ຫຼື ໂຄງການຊື້-ຂາຍ ການປ່ອຍທາດອາຍເຮືອນແກ້ວ.

An economic value placed on the emission of greenhouse gases into the atmosphere from human activity. This price is designed to create a disincentive for emissions and incentive to avoid them.

A carbon price takes the form of either a carbon tax or an emissions trading scheme.

Carbon Rights: ກຳມະສິດທາດອາຍກາກບອນ

ໝາຍເຖິງການອ້າງສິດໄດ້ຮັບຜົນປະໂຫຍດຈາກແຫຼ່ງກາກບອນ ເຊັ່ນ: ຜົນປະໂຫຍດຈາກພື້ນທີ່ປ່າໄມ້ໃດໜຶ່ງ, ບ່ອນທີ່ມີຕະຫຼາດຊື້-ຂາຍທາດອາຍເຮືອນແກ້ວເຊິ່ງກຳມະສິດນັ້ນອາດຈະມີມູນຄ່າທາງການເງິນ. ກຳມະສິດທາງດ້ານທາດອາຍກາກບອນ ຍັງອາດຈະກຳນົດຕາມໜ້າທີ່ຮັບຜິດຊອບໃນການຈັດການທີ່ກ່ຽວຂ້ອງກັບພື້ນທີ່ປ່າໄມ້. ບັນຫາທີ່ກ່ຽວຂ້ອງກັບກຳມະສິດທາດອາຍກາກບອນ ແມ່ນລວມມີ: ວິທີການກຳນົດກຳມະສິດ, ວິທີດຳເນີນງານໃນພື້ນທີ່ ທີ່ກຳມະສິດການຖືຄອງທີ່ດິນບໍ່ມີຄວາມຊັດເຈນ ຫຼື ສະຖາບັນທາງກົດໝາຍມີຄວາມເຂັ້ມແຂງພໍທີ່ຈະສາມາດປົກປ້ອງກຳມະສິດໄດ້.

Carbon rights refer to the claims on the benefit streams from carbon pools, for example, the benefit from a specific parcel of forest. Where a market exists for GHG emissions reductions carbon rights may have a financial value. Carbon rights may also define the management responsibilities associated with a specific area of forest. Issues concerning carbon rights include how the rights are defined, how they work in places where land ownership is unclear, and whether legal institutions are strong enough to protect the rights.

Carbon Sequestration: ການເກັບສະສົມທາດອາຍກາກບອນ

ແມ່ນການດູດຊຶມຊັບ ແລະ ການເກັບສະສົມທາດອາຍກາກບອນ ຊຶ່ງຕົ້ນໄມ້ຈະດູດຊຶມຊັບເອົາທາດອາຍກາກບອນໄວ້ ແລະ ປ່ອຍອົກຊີເຈນອອກມາ ໂດຍຜ່ານຂະບວນການສັງເຄາະແສງຂອງພືດ. ນອກຈາກນັ້ນ, ຕົ້ນໄມ້ຍັງສາມາດເກັບສະສົມທາດອາຍກາກບອນໄວ້ຢູ່ໃນພາກສ່ວນຕ່າງໆ ຂອງພວກມັນໃນຮູບຊີວະມວນສານ.

The uptake and storage of carbon. Trees absorb carbon dioxide and release oxygen via photosynthesis. Trees also store carbon in the biomass.

Carbon Sinks: ແຫຼ່ງຊຶມຊັບທາດອາຍກາກບອນ

ໝາຍເຖິງ ປ່າໄມ້, ດິນ, ພືດ ແລະ ຊັບພະຍາກອນນໍ້າ ທີ່ຊຶມຊັບ ແລະ ເກັບກັກເອົາທາດອາຍກາກບອນຈາກຊັ້ນບັນຍາກາດ ໂດຍຜ່ານຂະບວນການສັງເຄາະແສງ.

Carbon sinks are forests, soil, vegetation, and water resources that absorb and retain CO_2 from the atmosphere through photosynthesis.

Carbon Source: ແຫຼ່ງກຳເນີດທາດອາຍກາກບອນ

ແຫຼ່ງເກັບສະສົມທາດອາຍກາກບອນ ສາມາດກາຍເປັນແຫຼ່ງປ່ອຍທາດອາຍກາກບອນຂຶ້ນສູ່ຊັ້ນບັນຍາກາດໄດ້ ຖ້າອັດຕາການດູດຊຶມທາດອາຍກາກບອນ ເຂົ້າມາຫາກໜ້ອຍກວ່າອັດຕາການປ່ອຍທາດອາຍກາກບອນອອກ.

A carbon pool (reservoir) can be a source of carbon to the atmosphere if less carbon is flowing into it than is flowing out of it. It is the opposite of a sink.

Carbon Stock: ປະລິມານສະສົມຂອງທາດອາຍກາກບອນ

ແມ່ນປະລິມານຂອງທາດອາຍກາກບອນ ທີ່ຢູ່ໃນເຂດພື້ນທີ່ແຫຼ່ງກຳເນີດຕ່າງໆ ຂອງທາດອາຍກາກບອນ ທີ່ມີການສະສົມ ແລະ ປ່ອຍທາດອາຍກາກບອນ.

The quantity of carbon in a reservoir/pool having the capacity to accumulate or release carbon.

Carbon Stock Enhancement: ການເພີ່ມປະລິມານສະສົມຂອງທາດອາຍກາກບອນ

ແມ່ນອີງໃສ່ກອບຂອງຍຸດທະສາດ REDD+ ຊຶ່ງລວມມີ ການຟື້ນຟູປ່າໄມ້ ທີ່ຊຸດໂຊມ ແລະ ເພີ່ມເນື້ອທີ່ການປົກຫຸ້ມຂອງປ່າໄມ້ ໂດຍການປູກໄມ້ ແລະ ຟື້ນຟູປ່າໄມ້ທີ່ເໝາະສົມກັບສະພາບແວດລ້ອມ

A component of a REDD Plus strategy that could include both the restoration/improvement of existing but degraded forests and increase of forest cover through environmentally appropriate afforestation and reforestation.

Carbon tax: ພາສີຂອງທາດອາຍກາກບອນ

ແມ່ນການເກັບຄ່າພາສີ ນຳຜູ້ທີ່ປ່ອຍທາດອາຍກາກບອນໄດອອກໄຊຂຶ້ນສູ່ຊັ້ນບັນຍາກາດ.
A surcharge levied on consumers who emit carbon dioxide into the atmosphere.

Carbon Trading or Emissions Trading: ການຄ້າຂາຍທາດອາຍກາກບອນ ຫຼື ການຄ້າຂາຍ ການປ່ອຍທາດອາຍ

ໝາຍເຖິງ ການອະນຸຍາດ ການການຊື້ ຫຼື ຂາຍ (ຈຳນວນທີ່ອະນຸຍາດ AAUs) ໃນການປ່ອຍທາດອາຍເຮືອນແກ້ວຫຼືໃບຢັ້ງຢືນທີ່ພິສູດໃຫ້ເຫັນປະລິມານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍກິດຈະກຳໃດໜຶ່ງເກີນລະດັບທີ່ຄວນຈະເປັນ (ປ່ອຍໃຫ້ດຳເນີນໄປປົກກະຕິ) ຫຼື ໃບຢັ້ງຢືນທີ່ບອກໃຫ້ຮູ້ເຖິງ ປະລິມານການປ່ອຍທາດອາຍເຮືອນແກ້ວຕົວຈິງທີ່ໄດ້ຖືກຊົດເຊີຍ ຈາກບ່ອນອື່ນແລ້ວເຊັ່ນ ຕົວຢ່າງການເກັບສະສົມທາດອາຍກາກບອນ

A sale or purchase of 'permits' or 'allowances' (i.e. AAUs) to emit greenhouse gases (GHGs); or certificates that prove a certain reduction in emissions from a particular activity beyond what would otherwise have been the case (i.e. 'business as usual' emissions); or certificates that indicate a certain amount of actual emissions have been 'offset' somewhere else, through for example, carbon sequestration.

Carbon Capture and Storage (CCS): ການເກັບກັກ ແລະ ການສະສົມທາດອາຍກາກບອນ

ໝາຍເຖິງ ມາດຕະການ ມີສອງຂັ້ນຕອນໃນການສະກັດກັ້ນການປ່ອຍທາດອາຍກາກບອນຈາກການເຜົາໃໝ້ນໍ້າມັນເຊື້ອໄຟ ຂຶ້ນສູ່ຊັ້ນບັນຍາກາດ, ໂດຍສະເພາະຈາກແຫຼ່ງກໍາເນີດ ພະລັງງານ. ແທນທີ່ວ່າ ທາດອາຍກາກບອນຈະຖືກປ່ອຍອອກ ແຕ່ມັນພັດຖືກເກັບສະສົມໄວ້ໃນພື້ນດິນໂດຍຄວາມດັນ, ເຊິ່ງມັນບໍ່ໄດ້ສ້າງຜົນກະທົບຕໍ່ພາວະໂລກຮ້ອນ. ເທັກໂນໂລຊີນີ້ຍັງຢູ່ໃນໄລຍະເລີ່ມຕົ້ນ ທີ່ບໍ່ທັນໄດ້ພິສູດຢ່າງກວ້າງຂວາງ, ນອກຈາກນັ້ນ ຍັງເປັນຮູບແບບໜຶ່ງຂອງການເກັບສະສົມທາດອາຍກາກບອນ.

A two-step measure to prevent carbon dioxide emissions from the burning of fossil fuels entering the atmosphere, particularly from power generation. Instead of CO_2 being vented, it is contained and pumped underground under pressure, where it cannot contribute to global warming. This technology is still in its infancy with results largely unproven. Also known as one form of 'carbon sequestration'.

Certification: ການຢັ້ງຢືນ

ບາດກ້າວຂອງຂະບວນການຢັ້ງຢືນໂຄງການ ພັດທະນາສະອາດ (CDM) ຫຼື (JI) ໃນເມື່ອການອະນຸມັດຖືກຮັບຮອງ ບົນພື້ນຖານການຄິດໄລ່ປະລິມານ ການຫລຸດຜ່ອນການປ່ອຍແຕ່ຕ້ອງໄດ້ຮັບການພິສູດຢັ້ງຢືນຈາກບຸກຄົນທີ່ສາມ.

A phase in the certification process of a CDM or JI Voluntary) project when permits are issued on the basis of calculated emissions reductions, verified by an accredited third party.

Certified Emission Reductions (CERs): ເອກະສານຢັ້ງຢືນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ

ໝາຍເຖິງຜົນໄດ້ຮັບທາງດ້ານເຕັກນິກ ຂອງໂຄງການພັດທະນາທີ່ສະອາດ (CDM), CER ແມ່ນຫົວໜ່ວຍການຫຼຸດຜ່ອນທາດອາຍເຮືອນແກ້ວ (GHG) ທີ່ໄດ້ກໍານົດ ແລະ ຮັບຮອງຕາມບົດບັນຍັດມາດຕາ 12 ຂອງສົນທິສັນຍາກຽວໂຕ ວ່າດ້ວຍກົນໄກການພັດທະນາທີ່ສະອາດ. 1 CER ເທົ່າກັບ ກາກບອນ 1 ໂຕນ. CERs ມີສອງປະເພດທີ່ໄດ້ນໍາໃຊ້ສໍາລັບ

ການກຳຈັດການປ່ອຍທາດອາຍເຮືອນແກ້ວ ຈາກການປູກປ່າຄືນໃໝ່ ແລະ ການຟື້ນຟູປ່າໃນໂຄງການ CDM ມີຄື (i): ການຮັບຮອງການຫຼູດຜ່ອນການປ່ອຍແບບຊົ່ວຄາວ(tCERs) ແລະ ການຮັບຮອງ ການຫຼູດຜ່ອນ ການປ່ອຍ ແບບໄລຍະຍາວ(ICERs). ສຳລັບການຢັ້ງຢືນ ໝາກຜົນຈາກໂຄງການ CDM ມີຫົວໜ່ວຍແມ່ນ TCERS ຫຼື 1 CER ຕາມມາດຕາ 12 ຂອງສົນທິສັນຍາກຽວໂຕ 1CE ເທົ່າກັບ ກາກບອນ 1 ໂຕນ TCER ແມ່ນຫົວໜ່ວຍຢັ້ງ ຢືນຊົ່ວຄາວ LCER ແມ່ນຫົວໜ່ວຍຢັ້ງຢືນໄລຍະຍາວ.

The technical term for the output of CDM projects. A CER is a unit of GHG reductions that has been generated and certified under the provisions of Article 12 of the Kyoto Protocol, the Clean Development Mechanism.

One CER equals one ton of carbon. Two special types of CERs can be issued for net emission removals from afforestation and reforestation CDM projects: (i) temporary certified emission reduction (tCERs); and (ii) long-term certified emission reductions (ICERs)

Clean Development Mechanism (CDM): ກົນໄກການພັດທະນາສະອາດ

ແມ່ນກົນໄກການຮ່ວມມືທີ່ຈັດຕັ້ງຂຶ້ນ ພາຍໃຕ້ອະນຸສັນຍາກຽວໂຕ ແນໃສ່ຊ່ວຍເຫຼືອບັນດາປະເທດພາຄີກຳລັງພັດທະນາ ບັນລຸການພັດທະນາແບບຍືນຍົງ ໂດຍການສົ່ງເສີມການລົງທຶນ ຈາກບັນດາປະເທດພາຄີທີ່ພັດທະນາແລ້ວ ມາຈັດຕັ້ງປະຕິບັດບັນດາກິດຈະກຳຫລືໂຄງການຫລຸດຜ່ອນການປ່ອຍອາຍທາດເຮືອນແກ້ວ, ຊຶ່ງປະກອບດ້ວຍ 6 ທາດອາຍຫລັກທີ່ໄດ້ລະບຸໄວ້ໃນອະນຸສັນຍາກຽວໂຕ ຄື: ທາດອາຍກາກບອນໄດອອກໄຊ (CO_2), ມີເທນ (CH_4), ໄນຕຣັດອອກໄຊ (N_2O),ໄຮໂດຣຟລູໂອໂຣກາກບອນ (HFCs), ເປີຟລູໂອໂຣກາກບອນ (PFCs) ແລະ ຊັນເຟີ ເຮັກຊາຟລູອໍໄຣ (SF_6).

Clean Development Mechanism (CDM) is cooperative mechanism under the Kyoto Protocol designed to help developing countries to achieve sustainable development in the form of promotion of the investment from the developed countries in implementing activities or projects to reduce quantity of their GHGs emissions, which cover the six gases: carbon dioxide (CO_2), methane (CH_4), nitrous oxide (N_2O), hydrofluorocarbons (HFCs), perfluorocarbons (PFCs) and sulphur hexafluoride (SF_6).

Climate: ພູມອາກາດ

ໃນຄວາມໝາຍສະເພາະ ພູມອາກາດໝາຍເຖິງ ຄ່າສະເລ່ຍຂອງອາກາດ ຫຼື ຄວາມໝາຍເລີກໄປກ່ວານັ້ນ ໝາຍເຖິງ ຄໍາອະທິບາຍດ້ານສະຖິຕິແມ່ນເພື່ອກໍານົດຄ່າສະເລ່ຍ ແລະ ຄ່າແຕກຕ່າງ ຂອງປະລິມານ ທີ່ກ່ຽວຂ້ອງ ໃນຊ່ວງໄລຍະເວລາໃດໜຶ່ງ ຕັ້ງແຕ່ເດືອນ ຈົນເຖິງພັນປີ ຫຼື ລ້ານປີ. ຊ່ວງໄລຍະເວລາທີ່ໃຊ້ວັດທົ່ວໄປຄື 30 ປີ ຕາມທີ່ກໍານົດໂດຍ ອົງການອຸຕຸຍົມໂລກ (WMO). ປະລິມານເຫຼົ່ານີ້ ສ່ວນໃຫ່ຍມັກຈະໝາຍເຖິງຕົວແປທີ່ພື້ນ ຜິວໂລກເຊັ່ນ: ອຸນຫະພູມ, ປະລິມານນໍ້າຝົນ ແລະ ລົມ.

ໃນຄວາມໝາຍໂດຍລວມ ພູມອາກາດໝາຍເຖິງ ສະພາບລວມເຖິງຄໍາອະທິບາຍທາງດ້ານ ສະຖິຕິ ຂອງລະບົບພູມອາກາດ

Climate in a narrow sense is usually defined as the 'average weather', or more rigorously, as the statistical description in terms of the mean and variability of relevant quantities over a period of time ranging from months to thousands or millions of years. The classical period of time is 30 years, as defined by the World Meteorological Organisation (WMO). These quantities are most often surface variables such as temperature, precipitation, and wind.

Climate in a wider sense is the state, including a statistical description, of the climate system.

Climate Change: ການປ່ຽນແປງດິນຟ້າອາກາດ ຫຼືການປ່ຽນແປງສະພາບພູມອາກາດ

ການປ່ຽນແປງດິນຟ້າອາກາດ ແມ່ນ ສະພາວະການປ່ຽນແປງຂອງອຸນຫະພູມສະເລ່ຍເທິງ ພື້ນຜິວໂລກ ທີ່ເພີ່ມຂຶ້ນເກີນເກນປົກກະຕິ ໃນໄລຍະຍາວ ຊຶ່ງເກີດມາຈາກການກະທໍາຂອງ ມະນຸດ ໂດຍກົງ ຫຼື ທາງອ້ອມ ຫຼື ເກີດຈາກທໍາມະຊາດ ທີ່ເຮັດໃຫ້ອົງປະກອບຂອງຊັ້ນບັນ ຍາກາດປ່ຽນແປງ.

Climate change means an increase in the average temperatures on Earth's surface, exceeding the normal temperature ranges in the long term, caused by direct or indirect human actions or by nature, and resulting in changes to atmospheric composition.

Climate Change Fund: ກອງທຶນການປ່ຽນແປງດິນຟ້າອາກາດ

ກອງທຶນການປ່ຽນແປງດິນຟ້າອາກາດ ແມ່ນສ່ວນໜຶ່ງຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ.

The Climate Change Fund is part of the Environmental Protection Fund, established pursuant to the Environmental Protection Law.

Climate Extreme: ຄວາມຮຸນແຮງຂອງສະພາບພູມອາກາດ

ໝາຍເຖິງ ຄ່າຜັນແປຂອງພູມອາກາດແມ່ນເກີດຂຶ້ນຢູ່ລະດັບສູງກວ່າ ຫຼື ຕ່ຳກວ່າຄ່າສະເລ່ຍທຽບຖານຂອງຄ່າສັງເກດການ. ເພື່ອງ່າຍຕໍ່ການເອີ້ນຊື່ຂອງທັງສອງຄຳສັບ ຄື: ເຫດການຄວາມຮຸນແຮງ ຂອງສະພາບອາກາດ ແລະ ເຫດການຄວາມຮຸນແຮງພູມອາກາດ ເອີ້ນລວມກັນວ່າ: ສະພາບພູມອາກາດ ຮຸນແຮງ

The occurrence of a value of a weather or climate variable above (or below) a threshold value near the upper (or lower) ends of the range of observed values of the variable. For simplicity, both extreme weather events and extreme climate events are referred to collectively as 'climate extremes'.

Climate Finance: ການເງິນດ້ານການປ່ຽນແປງດິນຟ້າອາກາດ

ໝາຍເຖິງກົນໄກ ສະໜັບສະໜູນ ແຫຼ່ງທຶນ ເພື່ອນຳໃຊ້ໃນກິດຈະກຳ ໃນວຽກງານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ລວມເຖິງກົນໄກການດຳເນີນງານ ໃນການເສີມສ້າງປະສິດທິພາບການຖ່າຍທອດເທັກໂນໂລຊີ ແລະ ການພັດທະນາທາງເສດຖະກິດ ເພື່ອຫັນເປັນປະເທດໄປສູ່ການປ່ອຍກາກບອນຕ່ຳ ແລະ ໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໄປສູ່ການພັດທະນາແບບຍືນຍົງ.

Refers to climate specific supports and financial mechanisms for climate change mitigation and adaptation activities to enable the transitions towards low-carbon, climate-resilient growth and sustainable development through capacity building, technology transfer, and economic development.

Climate Modeling: ແບບຈຳລອງສະພາບພູມອາກາດ

ໝາຍເຖິງ ການຄິດໄລ່ທາງດ້ານສະຖິຕິ ທີ່ອີງໃສ່ຄຸນລັກສະນະທາງດ້ານຟີຊິກ, ເຄມີ ແລະ

ຊີວະ ຊຶ່ງເປັນອົງປະກອບໃນການຄົ້ນຄວ້າ ແລະ ສຶກສາຂະບວນການປ່ຽນແປງດິນຟ້າອາກາດ ແລະ ຍັງເປັນເປົ້າໝາຍນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ເພື່ອປະເມີນ ແລະ ຄາດຄະເນສະພາບດິນຟ້າອາກາດ ແຕ່ລະໄລຍະ.

Climate modeling means using statistical analysis of physical, chemical, and biological datasets to research and study climate change, including periodic assessment and prediction of climate impacts

Climate Prediction: ການຄາດຄະເນສະພາບພູມອາກາດໄລຍະສັ້ນ

ໝາຍເຖິງ ການຄາດຄະເນສະພາບພູມອາກາດ ຫຼື ການພະຍາກອນສະພາບພູມອາກາດແມ່ນຜົນທີ່ຈະຄາດຄະເນວິວັດທະນາການຕົວຈິງ ຂອງສະພາບພູມອາກາດ ໃນອານາຄົດ ເຊັ່ນ: ລະດູການ, ແຕ່ລະປີ ຫຼື ໄລຍະຍາວ. ເບິ່ງເພີ່ມເຕີມ ທີ່ການຄາດຄະເນສະພາບອາກາດ ແລະ ການຈໍາລອງ (ການປ່ຽນແປງ) ສະພາບພູມອາກາດ

A climate prediction or climate forecast is the result of an attempt to produce an estimate of the actual evolution of the climate in the future, e.g., at seasonal, interannual or long-term time scales. See also climate projection and climate (change) scenario.

Climate Projection: ການຄາດຄະເນສະພາບພູມອາກາດ ໄລຍະຍາວ

ການຕອບສະໜອງທີ່ຄິດຄໍານວນໄວ້ແລ້ວ ຂອງລະບົບສະພາບພູມອາກາດ ຕໍ່ການປ່ອຍທາດອາຍເຮືອນແກ້ວ ຫຼື ການຈໍາລອງຄວາມເຂັ້ມຂຸ້ນ ຂອງທາດອາຍເຮືອນແກ້ວ ທີ່ຈະເກີດຂຶ້ນໃນອານາຄົດ ກ່ຽວກັບ ການປ່ອຍອາຍເຮືອນແກ້ວ ແລະ ຝຸ່ນລະອອງ ຫຼື ພາບຈໍາລອງແຮງແຜ່ລັງສີ ສ່ວນຫຼາຍແມ່ນອີງໃສ່ ແບບຈໍາລອງສະພາບອາກາດ.

ໃນການຄາດຄະເນສະພາບພູມອາກາດ ແມ່ນແຕກຕ່າງຈາກການພະຍາກອນພູມອາກາດຢູ່ບ່ອນວ່າ ການຄາດຄະເນສະພາບອາດ ຈະຂຶ້ນກັບການປ່ອຍທາດອາຍເຮືອນແກ້ວ/ຄວາມເຂັ້ມຂຸ້ນ / ການແຜ່ລັງສີ ທີ່ໃຊ້ເປັນປັດໃຈຫຼັກໃນການຄາດຄະເນ ສະນັ້ນ, ການສົມມຸດຕິຖານ ທີ່ບໍ່ແນ່ນອນແມ່ນຂຶ້ນກັບການພັດທະນາເສດຖະກິດ-ສັງຄົມ ແລະ ການພັດທະນາເທັກໂນໂລຊີໃນອານາຄົດ.

The calculated response of the climate system to emissions or concentration scenarios of greenhouse gases and aerosols, or radiative forcing scenarios, often based on simulations by climate models.

Climate projections are distinguished from climate predictions, in that the former critically depend on the emissions/concentration/radiative forcing scenario used, and therefore on highly uncertain assumptions of future socio-economic and technological development.

Climate Sensitivity: ຄວາມອ່ອນໄຫວຕໍ່ສະພາບພູມອາກາດ

ໝາຍເຖິງ ການປ່ຽນແປງອຸນຫະພູມສະເລ່ຍປະຈຳປີ ເທິງໜ້າໂລກ ເນື່ອງມາຈາກການປ່ຽນແປງປະລິມານຄວາມເຂັ້ມຂຸ້ນ ຂອງທາດກາກບອນໄດອອກໄຊ ໃນຊັ້ນບັນຍາກາດ ຫຼືການແຜ່ຄວາມຮ້ອນ.

Climate sensitivity refers to the change in the annual global mean surface temperature in response to a change in the atmospheric CO_2 concentration or other radiative forcing.

Climate Services: ການບໍລິການ ຂໍ້ມູນສະພາບພູມອາກາດ

ໝາຍເຖິງ ຂໍ້ມູນ ຫຼື ຜະລິດຕະພັນທີ່ຊ່ວຍເພີ່ມຄວາມຮູ້ ແລະ ຄວາມເຂົ້າໃຈໃຫ້ແກ່ຜູ້ໃຊ້ບໍລິການ ກ່ຽວກັບ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ/ຫຼື ການປ່ຽນແປງຂອງພູມອາກາດ ເພື່ອຊ່ວຍໃຫ້ບຸກຄົນ ຫຼື ອົງກອນ ໃນການຕັດສິນໃຈ ແລະ ສາມາດກຽມຄວາມພ້ອມລ່ວງໜ້າຕໍ່ກັບການປ່ຽນແປງດິນຟ້າອາກາດ. ຊຶ່ງຜະລິດຕະພັນປະກອບດ້ວຍຜະລິດຕະພັນຂໍ້ມູນດ້ານສະພາບພູມອາກາດ.

Climate services refers to information and products that enhance users' knowledge and understanding about the impacts of climate change and/or climate variability so as to aid decision-making of individuals and organizations and enable preparedness and early climate change action. Products can include climate data products.

Climate-Smart Agriculture (CSA): ການຜະລິດກະສິກຳ ທີ່ແທດເໝາະກັບສະພາບການປ່ຽນແປງດິນຟ້າອາກາດ

ໝາຍເຖິງ ກະສິກຳທີ່ມີຄວາມທົນທານຕໍ່ກັບການປ່ຽນແປງສະພາບພູມອາກາດ ທີ່ຊ່ວຍແນະນຳໃນການດຳເນີນການທີ່ຈຳເປັນເພື່ອປ່ຽນແປງແລະປັບປຸງພັດທະນາລະບົບກະສິກຳຢ່າງມີປະສິດທິພາບ ແລະ ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານຕໍ່ສະພາບຂອງ

ການປ່ຽນແປງດິນຟ້າອາກາດ. ຈຸດປະສົງຫຼັກຂອງກະສິກຳ ທີ່ທົນທານຕໍ່ກັບການປ່ຽນແປງສະພາບພູມອາກາດແມ່ນເພື່ອແນໃສ່ແກ້ໄຂ 3 ຈຸດປະສົງຄື: ການເພີ່ມຜະລິດຕະພັນ ແລະ ລາຍໄດ້ທາງດ້ານກະສິກຳແບບຍືນຍົງ, ສ້າງຄວາມທົນທານ ແລະ ປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ພ້ອມທັງຊອກຫາວິທີທາງຫຼຸດຜ່ອນການປ່ອຍ ຫຼື ດູດຊຶມ ທາດອາຍເຮືອນແກ້ວເທົ່າທີ່ເປັນໄປໄດ້.

Climate-smart agriculture (CSA) is an approach that helps to guide actions needed to transform and reorient agricultural systems to effectively support development and ensure food security in a changing climate. CSA aims to tackle three main objectives: sustainably increasing agricultural productivity and incomes, adapting and building resilience to climate change, and reducing and/or removing greenhouse gas emissions, where possible

Climate Scenario: ການຈຳລອງສະພາບ ພູມອາກາດ ທີ່ຄາດວ່າຈະເກີດຂຶ້ນໃນອະນາຄົດ

ໝາຍເຖິງການອະທິບາຍໃຫ້ເຂົ້າໃຈໄດ້ງ່າຍ ແລະ ໜ້າເຊື່ອຖືຂອງສະພາບດິນຟ້າອາກາດໃນອານາຄົດ ບົນພື້ນຖານຄວາມສຳພັນ ຂອງສະພາບພູມອາກາດວິທະຍາ ແລະ ຂໍ້ສົມມຸດຕິຖານ ຂອງການແຜ່ລັງສີຄວາມຮ້ອນ ໂດຍທົ່ວໄປມັກຈະຖືກສ້າງຂຶ້ນເພື່ອນຳໃຊ້ເປັນຂໍ້ມູນສຳລັບແບບຈຳລອງ ຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ.

A plausible and often simplified representation of the future climate, based on an internally consistent set of climatological relationships and assumptions of radiative forcing, typically constructed for explicit use as input to climate change impact models.

Climate System: ລະບົບພູມອາກາດ

ໝາຍເຖິງການກຳນົດໂດຍການເຄື່ອນທີ່ຂອງວັດຖຸ ແລະ ການເຮັດປະຕິກິລິຍາ ຂອງ 5 ອົງປະກອບຫຼັກຄື: ຊັ້ນບັນຍາກາດ, ຊັ້ນນ້ຳ, ຊັ້ນນ້ຳກ້ອນ, ໜ້າດິນ ແລະ ລະບົບນິເວດທັງໝົດ. ການປ່ຽນແປງຂອງລະບົບດິນຟ້າອາກາດ ແມ່ນຖືກຂັບເຄື່ອນຈາກສິ່ງຊຸກດັນພາຍໃນ ແລະ ພາຍນອກເຊັ່ນ: ການລະເບີດຂອງພູເຂົາໄຟ, ການແຜ່ຄວາມຮ້ອນ ຂອງແສງອາທິດ ຫຼື ການປ່ຽນແປງທີ່ເກີດຈາກມະນຸດ ຕໍ່ກັບຄວາມດຸ່ນດ່ຽງໃນການແຜ່ຄວາມຮ້ອນຂອງດາວເຄາະ, ຕົວຢ່າງ: ການປ່ອຍທາດອາຍເຮືອນແກ້ວຂອງມະນຸດ ຫຼື ການປ່ຽນແປງການນຳໃຊ້ທີ່ດິນ.

The climate system is defined by the dynamics and interactions of five major components: atmosphere, hydrosphere, cryosphere, land surface, and biosphere. Climate system dynamics are driven by both internal and external forcing, such as volcanic eruptions, solar variations, or human-induced modifications to the planetary radiative balance, for instance via anthropogenic emissions of greenhouse gases and/or land-use changes.

Climate-Resilient Health Systems: ລະບົບສາທາລະນະສຸກທີ່ມີຄວາມທົນທານຕໍ່ສະພາບພູມອາກາດ

ໝາຍເຖິງຄວາມສາມາດ ໃນການປ້ອງກັນ, ຕອບໂຕ້, ຮັບມື, ຟື້ນຕົວ ແລະ ປັບຕົວເຂົ້າກັບເຫດການຄວາມສ່ຽງທີ່ກ່ຽວຂ້ອງກັບພູມອາກາດ ເພື່ອເຮັດໃຫ້ສຸຂະພາບຂອງພົນລະເມືອງມີການປັບປຸງທີ່ຍືນຍົງ, ເຖິງວ່າຈະມີຄວາມຮຸນແຮງຂອງສະພາບອາກາດກໍ່ຕາມ

Climate-resilient health systems have the ability to anticipate, respond to, cope with, recover from and adapt to climate-related shocks and stresses, so as to bring sustained improvements in population health, despite an unstable climate.

Climate-Related Risks: ຄວາມສ່ຽງຕ່າງໆ ທີ່ເກີດຂຶ້ນຈາກການປ່ຽນແປງຂອງສະພາບ ພູມອາກາດ

ໝາຍເຖິງ ຄວາມສ່ຽງທີ່ເພີ່ມຂຶ້ນມາຕະຫຼອດຮອດ ການດໍາລົງຊີວິດ ແລະ ຊັບສິນຂອງປະຊາຊົນ ທີ່ປະເຊີນກັບຄວາມສ່ຽງ ເນື່ອງຈາກການປ່ຽນແປງດິນຟ້າອາກາດ. ບັນດາຄວາມສ່ຽງເຫຼົ່ານີ້ ອາດສົ່ງຜົນກະທົບໂດຍກົງເຊັ່ນ: ການປະເຊີນກັບຄື້ນຄວາມຮ້ອນ, ນໍ້າຖ້ວມ, ສ່ວນການປະເຊີນໄພໂດຍທາງອ້ອມ ແມ່ນຜົນກະທົບດ້ານລົບ ຂອງໄພແຫ້ງແລ້ງຕໍ່ກັບການຕອບສະໜອງດ້ານສະບຽງອາຫານ (ລາຄາອາຫານ) ແລະ ສົ່ງຜົນກະທົບຕໍ່ການດໍາລົງຊີວິດ ແລະ ໂພສະນາການ.

Climate-related risks are additional (exacerbated) risks that people and their livelihoods and assets face due to climate change. ese risks can be direct, such as in exposure to more frequent heat waves or floods; or indirect, such as when a drought negatively impacts food supplies (and prices) and in effect livelihoods and nutrition.

Climate Sensitive Health Outcome: ຄວາມອ່ອນໄຫວດ້ານສຸຂະພາບ ຕໍ່ສະພາບພູມອາກາດ

ໝາຍເຖິງທຸກໆຜົນໄດ້ຮັບທາງດ້ານສຸຂະພາບ ໃນພື້ນທີ່ ທີ່ແຕກຕ່າງກັນ, ຊຶ່ງຄວາມຮຸນແຮງຂອງການແຜ່ລະບາດພະຍາດໂດຍທາງກົງແລະທາງອ້ອມທີ່ກ່ຽວຂ້ອງກັບສະພາບອາກາດຫຼືພູມອາກາດ.

Climate-sensitive health outcomeis any health outcome whose geographic range, incidence or intensity of transmission is directly or indirectly associated with weather or climate.

Climate Variability: ຄວາມຜັນແປຂອງສະພາບພູມອາກາດ

ໝາຍເຖິງການປ່ຽນແປງທາງດ້ານຄ່າສະເລ່ຍ ແລະ ທາງສະຖິຕິອື່ນໆເຊັ່ນ (ຄ່າຜັນປ່ຽນມາດຕະຖານ, ຄ່າກະຕວງທາງກະສະຖິຕິ ແລະ ອື່ນໆ ຂອງດິນຟ້າອາກາດຕະຫຼອດເວລາ ແລະ ສະເພາະຂອບເຂດໃດໜຶ່ງທີ່ມີການປ່ຽນແປງຂອງດິນຟ້າອາກາດ, ການປ່ຽນແປງອາດເກີດຂະບວນການພາຍໃນຂອງທຳມະຊາດໃນລະບົບພູມອາກາດ (ການປ່ຽນແປງພາຍໃນ) ຫຼື ການປ່ຽນແປງທີ່ເກີດຈາກທຳມະຊາດ ຫຼື ຈາກການກະທຳຂອງມະນຸດ(ການປ່ຽນແປງພາຍນອກ)

Climate variability refers to variations in the mean state and other statistics (such as standard deviations, statistics of extremes, etc.) of the climate on all temporal and spatial scales beyond that of individual weather events. Variability may be due to natural internal processes within the climate system (internal variability), or to variations in natural or anthropogenic external forcing (external variability).

Coupled Model Intercomparison Project (CMIP): ການປຽບທຽບແບບຈຳລອງສະພາບພູມອາກາດ

ໝາຍເຖິງ ກິດຈະກຳຈຳລອງພູມອາກາດ ຈາກໂປຣແກຣມການວິໄຈພູມອາກາດໂລກ (WCRP) ເຊິ່ງປະສານສົມທົບ ແລະ ລວບລວມຜົນໄດ້ຮັບຂອງຕົວແບບຈຳລອງພູມອາກາດຈາກກຸ່ມແບບຈຳລອງຂອງທົ່ວໂລກ. ຊຸດຂໍ້ມູນແບບຈຳລອງພູມອາກາດ 3 (CMIP3) ແມ່ນລວມທັງການຄາດຄະເນ ທີ່ນຳໃຊ້ແບບຈຳລອງພູມອາກາດ. ສ່ວນຊຸດຂໍ້ມູນແບບຈຳລອງພູມອາກາດ 5 (CMIP5) ແມ່ນກ່ຽວຂ້ອງກັບການນຳໃຊ້ແບບຈຳລອງປະລິມານຄວາມເຂັ້ມຂຸ້ນໃນຊັ້ນບັນຍາກາດ. ສ່ວນແບບຈຳລອງພູມອາກາດ 6 (CMIP6) ແມ່ນ ລວມທັງ

ໝົດແບບຈຳລອງໄດ້ຜ່ານການທົດລອງ ແລະ ຮັບຮອງ.

The Coupled Model Intercomparison Project (CMIP) is a climate modelling activity from the World Climate Research Programme (WCRP) which coordinates and archives climate model simulations based on shared model inputs by modelling groups from around the world. The CMIP3 multimodel data set includes projections using SRES scenarios. The CMIP5 data set includes projections using the Representative Concentration Pathways (RCPs). TheCMIP6 phase involves a suite of common model experiments as well as an ensemble of CMIP-endorsed model intercomparison projects (MIPs).

Compliance (Regulatory) Market: ການປະຕິບັດຕາມກົນໄກຕະຫຼາດກາກບອນ

ໝາຍເຖິງຕະຫຼາດຊື້ຂາຍກາກບອນໃຊ້ເພື່ອບັນລຸເປົ້າໝາຍການປ່ອຍທາດອາຍເຮືອນແກ້ວພາຍໃຕ້ລະບຽບການ

The market for carbon credits used to reach emissions targets under a regulatory regime.

Conditional Mitigation Scenario: ແບບຈຳລອງການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂ

ແມ່ນການສະແດງຄວາມພະຍາຍາມ ໃນການຫລຸດຜ່ອນ ການປ່ອຍທາດອາຍເຮືອນແກ້ວເພີ່ມເຕີມ ທີ່ປະເທດໃດໜຶ່ງ ສາມາດບັນລຸເປົ້າໝາຍໄດ້ຂຶ້ນຢູ່ກັບການເພີ່ມລະດັບການສະໜັບສະໜູນທາງການເງິນຈາກປະເທດພາຄີທີ່ພັດທະນາແລ້ວ.

Conditional mitigation scenario that represents additional GHG emission reductions efforts that country could achieve, contingent upon increased levels of financial support from developed country Parties

Conference of the Parties (COP): ກອງປະຊຸມລັດພາຄີສົນທິສັນຍາ

ໝາຍເຖິງ ອົງປະກອບສູງສຸດຂອງກອງປະຊຸມລັດພາຄີ. ປັດຈຸບັນກອງປະຊຸມດັ່ງກ່າວຈັດປີລະຄັ້ງ ເພື່ອທົບທວນຄວາມຄືບໜ້າ ເນື້ອໃນຂອງການຈັດຕັ້ງປະຕິບັດສົນທິສັນຍາ. ຄຳວ່າ "ກອງປະຊຸມ (Conference)" ບໍ່ໄດ້ໃຊ້ໃນແບບ "ກອງປະຊຸມ (meeting)" ແຕ່ທີ່ຈິງແມ່ນ "ກຸ່ມ ຫຼື ການລວມກັນ". ກອງປະຊຸມ (Conference) ແມ່ນການພົບກັນເປັນແຕ່

ໄລຍະ, ຍົກຕົວຢ່າງ "ກອງປະຊຸມຄັ້ງທີຊາວສີ່ຂອງລັດພາຄີສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (COP)".

The supreme body of the Convention. It currently meets once a year to review the Convention's progress. The word "conference" is not used here in the sense of "meeting" but rather of "association". The "Conference" meets in sessional periods, for example, the "Twenty–fourth session of the Conference of the Parties."

Concept Note: ເອກະສານແນວຄວາມຄິດ

ໝາຍເຖິງ ເອກະສານທີ່ຈະປະກອບດ້ວຍຂໍ້ມູນທີ່ຈຳເປັນ ກ່ຽວກັບ ຂໍ້ສະເໜີໂຄງການເພື່ອຂໍຄວາມຄິດເຫັນວ່າແນວຄວາມຄິດໂຄງການນີ້ສອດຄ່ອງກັບຈຸດປະສົງ, ນະໂຍບາຍ ແລະ ມາດຖານຂອງການລົງທຶນຂອງກອງທຶນ.

A document which provides essential information about a proposal to seek feedback on whether the concept is aligned with the objectives, policies and investment criteria.

Coping: ການຮັບມື

ໝາຍເຖິງ ການນຳໃຊ້ທັກສະ, ຊັບພະຍາກອນ ແລະ ໂອກາດ ທີ່ມີຢູ່ ເພື່ອແກ້ໄຂ, ຄຸ້ມຄອງ ແລະ ຮັບມືກັບບັນຫາຕ່າງໆ ແລະ ພ້ອມບັນລຸເປົ້າໝາຍຂັ້ນພື້ນຖານໃນໄລຍະສັ້ນຫາໄລຍະກາງ.

The use of available skills, resources, and opportunities to address, manage, and overcome adverse conditions, with the aim of achieving basic functioning in the short to medium term.

Coping Capacity: ຄວາມສາມາດໃນການຮັບມື

ໝາຍເຖິງ ຄວາມສາມາດ ແລະ ຊັບພະຍາກອນທີ່ມີ ຂອງບຸກຄົນ ຫຼື ອົງກອນໃດນຶ່ງສາມາດຮັບມື ແລະ ປະເຊີນໜ້າກັບສິ່ງທີ່ບໍ່ດີຕາມມາ ແລະ ອາດຈະນຳໄປສູ່ການເກີດໄພພິບັດໄດ້ໂດຍທົ່ວໄປແລ້ວ ບັນຫານີ້ ແມ່ນກ່ຽວຂ້ອງກັບການບໍລິຫານຈັດການຊັບພະຍາກອນໃນເວລາປົກກະຕິ ແລະ ກໍລະນີສຸກເສີນ ຫຼື ໃນສະພາບວິກິດ, ການເພີ່ມທະວີຄວາມສາມາດ

ໃນການຮັບມື ແມ່ນການເຮັດໃຫ້ສະພາບຕ່າງໆກັບຄືນສູ່ສະພາບປົກກະຕິ ແລະ ສາມາດຮັບມືກັບຜົນກະທົບ ແລະ ໄພອັນຕະລາຍ ທີ່ເກີດຂຶ້ນຈາກທຳມະຊາດ ແລະ ການກະທຳຂອງມະນຸດ.

The means by which people or organisations use available resources and abilities to face adverse consequences that could lead to a disaster. In general, this involves managing resources, both in normal times as well as during crises or adverse conditions. The strengthening of coping capacities usually builds resilience to withstand the effects of natural and human-induced hazards.

Country Programme: ແຜນງານ ແຫ່ງຊາດ

ໝາຍເຖິງການຈັດລຽງວຽກງານທີ່ເປັນບູລິມະສິດຕໍ່ວຽກງານການປ່ຽນແປງດິນຟ້າອາກາດຂອງປະເທດ ເພື່ອສະເໜີຕໍ່ກອງທຶນ GCF ເຊິ່ງລວມເຖິງແນວທາງຂອງໂຄງການທີ່ປະເທດຕ້ອງການພັດທະນາຮ່ວມກັບກອງທຶນ ໂດຍກຳນົດແຜນຈັດຕັ້ງປະຕິບັດພ້ອມລາຍລະອຽດຂອງໂຄງການ ຫຼື ແຜນງານທີ່ຕ້ອງການພັດທະນາອີງກອນທີ່ຈະເຂົ້າຮ່ວມເປັນຄູ່ຮ່ວມງານ ແລະ ຄວາມຕ້ອງການສະໜັບສະໜູນ ໃນການກະກຽມໂຄງການ ແລະ ກຽມຄວາມພ້ອມ.

Country Programme is a living document that presents a country's climate change priorities with the GCF, including a pipeline of projects that the country would like to develop with the Fund. It provides an action plan that details how projects and programmes are to be developed, the type of entity to partner with, and the readiness and project preparation support needs required.

Cross-Cutting Issues: ບັນຫາທີ່ພົວພັນກັບຫຼາຍຂະແໜງການ

ໝາຍເຖິງຫົວຂໍ້ ທີ່ຖືກພິຈາລະນາວ່າໜ້າສົນໃຈ ຫຼື ພົວພັນກັບຫຼາຍໝວດວິຊາທີ່ສຳຄັນ ແລະ ກວ້າງຂວາງ, ເຊິ່ງບໍ່ໄດ້ຈຳກັດວ່າຈະຕ້ອງ ກ່ຽວກັບ ສາຂາວິຊາໃດໜຶ່ງ ຫຼື ພື້ນທີ່ຮັບຜິດຊອບໃດໜຶ່ງ. ຕົວຢ່າງ: ການປ່ຽນແປງສະພາບດິນຟ້າອາກາດ, ບົດບາດຍິງ-ຊາຍ ແລະ ເຮັສໄອວີ/ໂລກເອດ.

Topics considered to be of common interest or relevant across a wide range of subjects, not limited to a single discipline or area of responsibility. Examples include climate change, gender and HIV/AIDS.

Cross-Sector Calculation Tool: ເຄື່ອງມືການຄິດໄລ່ທາດອາຍເຮືອນແກ້ວທີ່ກອມລວມ

ໝາຍເຖິງເຄື່ອງມືການຄຳນວນການປ່ອຍທາດອາຍເຮືອນແກ້ວໃນແຫຼ່ງທົ່ວໄປ ແລະ ຂອງຂະແໜງການຕ່າງໆ ເຊັ່ນ: ການປ່ອຍທາດອາຍເຮືອນແກ້ວຈາກການເຜົາໄໝ້ແບບຄົງທີ່ ຫຼື ເຄື່ອນທີ່.

A GHG calculation tool that addresses GHG sources common to various sectors, e.g., emissions from stationary or mobile combustion.

D

Deforestation: ການທຳລາຍປ່າ

ໝາຍເຖິງ ການທຳລາຍປ່າຈາກມະນຸດໂດຍກົງ ລວມມີ: ການຫັນປ່ຽນເນື້ອທີ່ດິນປ່າໄມ້ໄປເປັນເນື້ອທີ່ປະເພດອື່ນ ຫຼື (ການເຮັດໃຫ້ຄວາມປົກຫຸ້ມຂອງເຮືອນຍອດໜ້ອຍກວ່າ 20%).

Deforestation, as defined is the direct human-induced conversion of forested land to non-forested land (with less than 20% canopy cover).

Degradation or Forest Degradation: ການຊຸດໂຊມ ຫລື ການເຮັດໃຫ້ປ່າໄມ້ຊຸດໂຊມ

ແມ່ນຄຳທີ່ໃຊ້ອະທິບາຍເຖິງ ສະພາບຂອງປ່າໄມ້ທີ່ຫຼຸດລົງຕ່ຳກວ່າຄວາມສາມາດປົກກະຕິຕາມທຳມະຊາດຂອງມັນ, ແຕ່ຄວາມປົກຫຸ້ມຂອງເຮືອນຍອດແມ່ນຍັງຫລາຍກວ່າ 20 %.

The term describes the condition of a forest that has been reduced below its natural capacity, but not below the 20 percent crown cover threshold that qualifies as deforestation.

Delivery Partners: ຄູ່ຮ່ວມພັດທະນາ

ໝາຍເຖິງສະຖາບັນ ທີ່ໄດ້ຖືກຄັດເລືອກ ຈາກຈຸດປະສານງານແຫ່ງຊາດ ຕໍ່ກອງທຶນສີຂຽວ ດ້ານການປ່ຽນແປງດິນຟ້າອາກາດສາກົນ ເພື່ອຈັດຕັ້ງປະຕິບັດກິດຈະກຳລວມ ທີ່ໄດ້ຮັບອະນຸມັດພາຍໃຕ້ແຜນງານສະໜັບສະໜູນການກະກຽມ ແລະ ສ້າງຄວາມພ້ອມ ເຊິ່ງໜ່ວຍງານຮ່ວມດຳເນີນງານ ໃນການໃຫ້ບໍລິການທາງດ້ານຕ່າງໆເຊັ່ນ: ການພັດທະນາບົດສະເໜີໂຄງການກຽມຄວາມພ້ອມການຈັດຕັ້ງປະຕິບັດ ແລະ ການໃຫ້ຄຳປຶກສາ, ການຄຸ້ມຄອງການບໍລິຫານດ້ານການເງິນ, ການລາຍງານຄວາມຄືບໜ້າ ແລະ ການປະເມີນ, ສະຫຼຸບຜົນຂອງໂຄງການ ເຊິ່ງຄູ່ຮ່ວມພັດທະນານີ້ ອາດເປັນອົງການຄຸ້ມຄອງບໍລິຫານທຶນ AE ຫຼື ອົງກອນອື່ນໆ ທີ່ໄດ້ຮັບການປະເມີນໂດຍ ກອງທຶນ GCF ວ່າມີຄຸນນະພາບໃນການບໍລິຫານຄຸ້ມຄອງດ້ານການເງິນ.

Institutions selected by the National Designated Authority or focal point to implement activities approved under the Readiness and Preparatory Support Programme. Delivery partners provide services such as: development of readiness request proposals; implementation and supervision; fiduciary management; progress reporting; and project completion and evaluation. Delivery partners may be AEs or other institutions assessed to meet the financial management capacities requirements of the Fund.

Designated National Authority (DNA): ຈຸດປະສານງານແຫ່ງຊາດ ສຳລັບກົນໄກການພັດທະນາສະອາດ

ໝາຍເຖິງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໃນນາມຕາງໜ້າ ລັດຖະບານ ຮັບຜິດຊອບ ການພິຈາລະນາ ຮັບຮອງເອົາໂຄງການກົນໄກການພັດທະນາສະອາດ ຢູ່ ສປປ ລາວ ໂດຍແມ່ນ ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເຮັດໜ້າທີ່ເປັນເສນາທິການ ໃຫ້ແກ່ ກຊສ ຕໍ່ກັບວຽກງານດັ່ງກ່າວ;

Designated National Authority (DNA) means the Ministry of Natural Resources and Environment (MONRE) and particularly the Department of Climate Change (DCC) in the name of the Lao government to be in charge of the consideration of proposed CDM project approval in Lao PDR.

Designated Operational Entity (DOE): ອົງກອນດຳເນີນງານສາກົນ

ໝາຍເຖິງ ການຈັດຕັ້ງໜຶ່ງທີ່ເອກະລາດ, ໄດ້ຮັບການສ້າງຕັ້ງຂຶ້ນໂດຍຖືກຕ້ອງຕາມກົດໝາຍ ພາຍໃຕ້ການແນະນຳ ຂອງສະພາບໍລິຫານກົນໄກການພັດທະນາສະອາດສາກົນ ແລະ ຕາມການຕົກລົງເຫັນດີຂອງ ກອງປະຊຸມລັດພາຄີສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕ ເພື່ອເຮັດໜ້າທີ່ເປັນຜູ້ຢັ້ງຢືນຄວາມຖືກຕ້ອງຄົບຖ້ວນ ຂອງໂຄງການກົນໄກການພັດທະນາສະອາດ ທີ່ກຳລັງສະເໜີ ແລະ ຢັ້ງຢືນການຫຼຸດລົງ ທາດອາຍເຮືອນແກ້ວ ຈາກການຈັດຕັ້ງປະຕິບັດບັນດາກິດຈະກຳຂອງໂຄງການ ກົນໄກ ການພັດທະນາສະອາດນັ້ນ.

Designated Operational Entity (DOE) means an independent legal entity recommended by CDM Executive Board and designated by the COP/MOP that can validate the proposed CDM project activities and verify emission reductions.

Disaster: ໄພພິບັດ

ໄພພິບັດ ແມ່ນເຫດການທີ່ເປັນອັນຕະລາຍຮ້າຍແຮງທີ່ເກີດຂຶ້ນຈາກທຳມະຊາດ ແລະ/ ຫຼື ມະນຸດສ້າງຂຶ້ນ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດ ແລະ ການດຳລົງຊີວິດຂອງຄົນໃນສັງຄົມ ທັງໃນໄລຍະສັ້ນ ແລະ ໄລຍະຍາວ.

Disaster is a man-made or natural catastrophe that causes severe danger and extensive damage to health, life, assets, the economy and livelihoods of the people in society, both in short-term and long-term horizons.

Disaster Control: ການຄວບຄຸມໄພພິບັດ

ການຄວບຄຸມໄພພິບັດແມ່ນການຈຳກັດໄພພິບັດທີ່ພວມເກີດຂຶ້ນບໍ່ໃຫ້ສ້າງຜົນກະທົບຮ້າຍແຮງ ຫຼື ຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ ສຸຂະພາບ, ຊີວິດ, ຊັບສິນຂອງລັດ, ລວມໝູ່ ແລະ ຂອງປະຊາຊົນ ຊຶ່ງຕ້ອງປະຕິບັດເປັນຕົ້ນ: ການຮັບປະກັນຄວາມປອດໄພ, ການຊ່ວຍເຫຼືອສຸກເສີນ, ການຊອກຄົ້ນ ຫຼື ຄົ້ນຫາ ແລະ ກູ້ໄພ, ການປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຮີບດ່ວນເບື້ອງຕົ້ນ, ການສ້ອມແປງໂຄງລ່າງພື້ນຖານທີ່ຈຳເປັນ, ການປະກາດເປັນເຂດປະສົບໄພພິບັດ, ການປະກາດຍົກເລີກເຂດປະສົບໄພພິບັດ.

Disaster control means to restrict the impact of disasters that occur, to avoid severe impacts or significant damage and loss to health, life, asset of the state, communal and people's assets, including through the following activities: Safety assurance; Emergency relief; Search and rescue; Rapid damage and needs assessment; Repairing of essential infrastructure; Declaration of disaster affected area; Declaration for cancellation of the disaster affected area.

Disaster Management: ການຄຸ້ມຄອງໄພພິບັດ

ການຄຸ້ມຄອງໄພພິບັດ ແມ່ນການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດ ໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມກົດໝາຍ.

Disaster management is the implementation of outlined principles, regulations and measures related to effective prevention, control and recovery after disaster incidents that are in compliance with the law.

Disaster Prevention: ການປ້ອງກັນໄພພິບັດ

ການປ້ອງກັນໄພພິບັດ ແມ່ນການກຳນົດແຜນການ, ມາດຕະການ ເພື່ອສະກັດກັ້ນ ແລະ ຫລຸດຜ່ອນຄວາມສ່ຽງຈາກໄພພິບັດເປັນຕົ້ນ: ການເກັບກຳຂໍ້ມູນ ແລະ ການຂຶ້ນບັນຊີເຂດຄວາມສ່ຽງ, ການກຳນົດເຂດຄວາມສ່ຽງ, ການສ້າງແຜນທີ່ຄວາມສ່ຽງ, ການສ້າງລະບົບຂໍ້ມູນຂ່າວສານກ່ຽວກັບຄວາມສ່ຽງ, ການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນຂ່າວສານການປະເມີນຄວາມສ່ຽງ, ການຫລຸດຜ່ອນຄວາມສ່ຽງ, ການກຽມຄວາມພ້ອມຕອບໂຕ້ເຫດການໄພພິບັດ, ການເຕືອນໄພລ່ວງໜ້າ, ການປະກາດການຍົກຍ້າຍ.

Disaster prevention is the outlining of plans, measures for preventing and reducing disaster risk, which shall include the following actions: Data collection and risk inventories; Identification of risk areas; Risk Mapping; Establishment of a risk information system; Accessibility and application of information and data; Risk assessment; Risk reduction; Disaster preparedness and response; Early warning; Evacuation notice.

Disaster Preventive Measures: ບັນດາມາດຕະການປ້ອງກັນໄພພິບັດ

ໝາຍເຖິງ ຂະແໜງການທີ່ກ່ຽວຂ້ອງ ຕ້ອງມີມາດຕະການປ້ອງກັນ ເປັນຕົ້ນ ການສ້າງລະບົບ

ເຕືອນໄພລ່ວງໜ້າ, ປ້ອງກັນການເຊາະເຈື່ອນຂອງດິນ, ຕ້ານໄພນ້ຳຖ້ວມ, ໄພແຫ້ງແລ້ງ ເພື່ອຫລຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດ.

The concerned sectors shall put preventive measures in place, especially establishment of the Early Warning System, as well as prevention of soil erosion, anti-flooding, drought mitigation and other methods to reduce impacts from natural disaster.

Disaster Risk: ຄວາມສ່ຽງໄພພິບັດ

ໝາຍເຖິງ ຄວາມເປັນໄປໄດ້ຂອງເຫດການທີ່ອາດເກີດຂຶ້ນ ຈາກທຳມະຊາດ ແລະ/ຫຼື ມະນຸດສ້າງຂຶ້ນ ທີ່ຈະພາໃຫ້ເກີດຄວາມເສຍຫາຍ;

Disaster Risk refers to the possibility of the occurrence of a natural and/or man-made event leading to loss;

Disaster Risk Assessment: ການປະເມີນຄວາມສ່ຽງໄພພິບັດ

ການປະເມີນຄວາມສ່ຽງໄພພິບັດ ແມ່ນ ການຕີລາຄາລະດັບຄວາມສ່ຽງ, ຄວາມເສຍຫາຍ ຄວາມເປັນອັນຕະລາຍ, ໄພພິບັດທີ່ເຄີຍເກີດຂຶ້ນແລະຄາດຄະເນຄວາມສ່ຽງທີ່ອາດເກີດຂຶ້ນ ຊຶ່ງຈະນຳຜົນເສຍຫາຍຕໍ່ ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດ ແລະ ສິ່ງ ແວດລ້ອມ.

Disaster risk assessment is to evaluate the level of risk, damages, danger, historical disaster occurrence and prediction of potential risk, which could damage health, life, assets, the economy and the environment.

Disaster Risk Management (DRM): ການຄຸ້ມຄອງຄວາມສ່ຽງໄພພິບັດ

ໝາຍເຖິງ ຂະບວນການທີ່ເປັນລະບົບໃນການນຳໃຊ້ທິດຊີ້ນຳດ້ານການບໍລິຫານ, ດ້ານອົງການຈັດຕັ້ງ ແລະ ຄວາມຊຳນິຊຳນານດ້ານການປະຕິບັດງານ ແລະ ຄວາມສາມາດເພື່ອຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ ແລະ ປັບປຸງຄວາມສາມາດໃນການຮັບມືເພື່ອຫລຸດຜ່ອນຜົນກະທົບທາງດ້ານລົບຂອງໄພອັນຕະລາຍໃຫ້ນ້ອຍທີ່ສຸດ ແລະ ຄວາມເປັນໄປໄດ້ຂອງໄພພິບັດທີ່ຈະເກີດຂຶ້ນ

The systematic process of using administrative directives, organizations, and operational skills and capacities to implement strategies, policies and improved coping capacities in order to lessen the adverse impacts of hazards and the possibility of disaster.

Disaster Risk Reduction (DRR): ການຫລຸດຜ່ອນຄວາມສ່ຽງໄພພິບັດ

ການຫຼຸດຜ່ອນຄວາມສ່ຽງໄພພິບັດ ແມ່ນມາດຕະການ ແລະ ການເຄື່ອນໄຫວ ເພື່ອສະກັດກັ້ນ ແລະ ປ້ອງກັນທຸກເຫດ ການທີ່ຈະເກີດຈາກທໍາມະຊາດ ແລະຫຼື ມະນຸດສ້າງຂຶ້ນ, ຊຶ່ງອາດສົ່ງຜົນກະທົບ ແລະ ສ້າງຄວາມເສຍຫາຍຕໍ່ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມຕາມຍຸດທະສາດ, ແຜນທີ່ຄວາມສ່ຽງໄພພິບັດ ເປັນຕົ້ນ ການນໍາໃຊ້ເຕັກນິກວິສາວະກໍາກໍ່ສ້າງໂຄງລ່າງພື້ນຖານ ໃຫ້ມີຄວາມທົນທານຕໍ່ໄພພິບັດ ແລະ ການປູກຈິດສໍານຶກໃຫ້ສັງຄົມ.

Disaster risk reduction includes measures and mobilization to prevent or protect against possible events, whether natural and/or man-made, which may result in impacts and damage to health, lives, assets, the economy or the environment, which are based on the strategies and maps of identified disaster risks, and include the application of engineering techniques for infrastructure con-struction that is resilient to disasters, as well as public awareness campaigns.

Disaster Preparedness and Response: ການກຽມພ້ອມ ແລະ ການຕອບໂຕ້ເຫດການໄພພິບັດ

ການກຽມຄວາມພ້ອມຕອບໂຕ້ເຫດການໄພພິບັດ ແມ່ນຂະບວນການກະກຽມ, ສ້າງແຜນການ ແລະ ກໍານົດມາດຕະການ ໃນການສະກັດກັ້ນ, ຕອບໂຕ້ກັບເຫດການໄພພິບັດເພື່ອຫລຸດຜ່ອນຄວາມເສຍຫາຍຕ່າງໆ ດ້ວຍການເຝົ້າລະວັງ, ແຈ້ງເຕືອນໄພ, ຄຸ້ມຄອງບັນຊາ, ສັ່ງການ, ຊອກຄົ້ນ ຫຼື ຄົ້ນຫາ ແລະ ກູ້ໄພ, ລະບົບສາງເກັບມ້ຽນເຄື່ອງຊ່ວຍເຫຼືອ, ການບັນເທົາທຸກສຸກເສີນ, ຊ່ວຍເຫຼືອທາງດ້ານທີ່ພັກເຊົາຊົ່ວຄາວ, ການແພດ, ການນໍາໃຊ້ກໍາລັງທະຫານ, ຕໍາຫຼວດ ແລະ ພົນລະເຮືອນ, ອຸປະກອນ, ພາຫະນະຂົນສົ່ງ, ການສື່ສານ, ສິ່ງອໍານວຍຄວາມສະດວກ, ການປະສານງານ ແລະ ຮ່ວມມືກັບທຸກພາກສ່ວນ, ການຮ້ອງຂໍການຊ່ວຍເຫຼືອ ຈາກບັນດາປະເທດໃນພາກພື້ນ ແລະ ສາກົນ ຕາມຂອບການຮ່ວມມືຂອງລັດຖະບານ.

Disaster preparedness and response is a process of preparing, planning and setting up measures for preventing and/or responding to a disaster event to reduce damage through actions such as sur-veillance, danger warning, overseeing and commanding operations, search and rescue, warehousing systems for storage of supportive equipment, providing emergency relief, temporary shelters, medi-cal services, using the military forces, police and civilian, equipment, transportation equipment, communications and facilities, coordinating and cooperating with all stakeholders, and requesting assistance from other countries based on regional and international cooperation frameworks of the Government.

Disease Prevention: ການປ້ອງກັນພະຍາດລະບາດ

ການປ້ອງກັນພະຍາດລະບາດ ໝາຍເຖິງການນຳໃຊ້ມາດຕະການ ແລະ ຂະບວນການທີ່ມີປະສິດທິພາບ ເພື່ອປ້ອງກັນ ການເກີດພະຍາດລະບາດ ຫຼື ເພື່ອຈຳກັດ ແລະ ຫລຸດຜ່ອນການແຜ່ລະບາດ ທີ່ມີຄວາມຮ້າຍແຮງ ແລະ ອັນຕະລາຍ.

Disease prevention refers to the application of efficient measures and procedures to prevent the occurrence of diseases or to restrict their spread and reduce their severity and danger.

Direct Access Entity (DAE): ອົງກອນເຂົ້າຫາກອງທຶນໂດຍກົງ

ເປັນໜ່ວຍງານ ຫຼື ອົງກອນ ທັງພາກລັດ ແລະ ເອກະຊົນລະດັບທ້ອງຖິ່ນ, ລະດັບປະເທດ ທີ່ໄດ້ຮັບການ ສະເໜີຊື່ຈາກ NDA ແລະ ຜ່ານການຮັບຮອງຈາກ GCF ພາຍໃຕ້ຮູບແບບ DIRECT ACCESS ການເຂົ້າຫາທຶນໂດຍກົງ

Institutions that apply for accreditation through the direct access modality. They are regional, national and sub-national institutions that are nominated by NDA or focal point. They can be public, private or non- governmental institutions.

Direct GHG Emissions: ການປ່ອຍທາດອາຍເຮືອນແກ້ວໂດຍກົງ

ໝາຍເຖິງ ບັນດາແຫຼ່ງປ່ອຍທາດອາຍເຮືອນແກ້ວ ທີ່ມາຈາກຜູ້ກໍ່ໃຫ້ເກີດ ຫຼື ຄວບຄຸມແຫຼ່ງປ່ອຍ ແລະ ລາຍງານ ໂດຍກົງຈາກອົງກອນ.

Emissions from sources that are owned or controlled by the reporting company.

Downscaling: ການຫຼຸດຈາກມາດຕາສ່ວນໃຫຍ່ ມາເປັນເປັນມາດຕາສ່ວນນ້ອຍ

ໝາຍເຖິງ ວິທີການຈໍາລອງມາດຕາສ່ວນໃນລະດັບ ພາກພື້ນ ຫາ ປະເທດ (100 ຫາ 10 ກິໂລແມັດ) ທາງດ້ານຂໍ້ມູນຈາກແບບຈໍາລອງມາດຕາສ່ວນທີ່ໃຫຍ່ ຫຼື ການວິເຄາະຂໍ້ມູນ

A method that derives regional - to local-scale (100 to 10 km) information from larger-scale models or data analyses.

Double Counting: ການນັບຊໍ້າຊ້ອນກັນ

ໝາຍເຖິງ ການລາຍງານທີ່ຊໍ້າຊ້ອນ ຂອງບໍລິສັດ ສອງ ຫຼື ຫຼາຍກວ່າ ທີ່ສະແດງໃຫ້ເຫັນເຖິງຄວາມເປັນເຈົ້າການໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ.

Two or more reporting companies take ownership of the same emissions or reductions

Drought: ໄພແຫ້ງແລ້ງ

ໝາຍເຖິງປະກົດການທີ່ເກີດຂື້ນ ເມື່ອປະລິມານນໍ້າຝົນຕົກ ຕໍ່າກວ່າລະດັບປົກກະຕິ ທີ່ໄດ້ບັນທຶກໄວ້ ເປັນສາເຫດຂອງ ຄວາມບໍ່ສົມດຸນຂອງນໍ້າເຊິ່ງເປັນຜົນກະທົບດ້ານລົບ ຕໍ່ທີ່ດິນ ແລະ ລະບົບການຜະລິດ.

The phenomenon that exists when precipitation Is significantly below normal recorded levels, causing serious hydrological imbalances that often adversely affect land resources and production systems.

E

Early Warning: ການເຕືອນໄພລ່ວງໜ້າ

ການເຕືອນໄພລ່ວງໜ້າ ແມ່ນການອອກແຈ້ງການ ແລະ ການປະກາດເຂດເຝົ້າລະວັງໂດຍຜ່ານສື່ມວນຊົນ ຫຼື ວິທີການອື່ນ ຢ່າງວ່ອງໄວ, ຊັດເຈນ ແລະ ທັນການ ເພື່ອໃຫ້ປະຊາຊົນ ຊຸມຊົນ,ການຈັດຕັ້ງແລະທຸກພາກສ່ວນໄດ້ມີເວລາໃນການກຽມຄວາມພ້ອມລ່ວງໜ້າເພື່ອ

ຮັບມືກັບໄພພິບັດທີ່ອາດເກີດຂຶ້ນ.

Giving an early warning means to issue a notification and declaration of a surveillance area through media broadcasting and other means quickly, accurately and in a timely manner to allow the people, communities, organizations and all parties to have enough time to prepare in advance to respond to potential disasters.

Ecophysiological Process: ຂະບວນການທາງດ້ານຊີວະວິທະຍາ

ໝາຍເຖິງ ສິ່ງທີ່ມີຊີວິດແຕ່ລະອັນ ມີການຕອບສະໜອງຕໍ່ການປ່ຽນແປງທາງດ້ານສະພາບແວດລ້ອມ ທີ່ຫຼາກຫຼາຍ ເຊັ່ນ: ການປ່ຽນແປງດິນຟ້າອາກາດ ໂດຍຜ່ານຂະບວນການທາງດ້ານຊີວະວິທະຍາ ຊຶ່ງໄດ້ດຳເນີນຢ່າງຕໍ່ເນື່ອງ, ມາດຕາສ່ວນທີ່ນ້ອຍທີ່ສຸດ ຫຼື ອະໄວຍະວະທີ່ນ້ອຍ. ກົນໄກທາງດ້ານຊີວະວິທະຍາ ໄດ້ສະໜັບສະໜູນຄວາມທົນທານຂອງສິ່ງທີ່ມີຊີວິດ ຕໍ່ການກົດດັນຂອງສະພາບແວດລ້ອມ ແລະ ກວມເອົາການສະໜອງຫຼາຍດ້ານ ເຊິ່ງໄດ້ກຳນົດຂໍ້ຈຳກັດ ຂອງຄວາມທົນທານ ທີ່ແນ່ນອນ ຂອງແຕ່ລະພາກສ່ວນ ຕໍ່ເງື່ອນໄຂສະພາບແວດລ້ອມ, ຂະບວນການທາງດ້ານຊີວະວິທະຍາ ອາດຈະເຮັດໃຫ້ມີການເພີ່ມຂຶ້ນຂອງການ ຄວບຄຸມພັນພືດຕາມລັກສະນະທາງພູມມີສາດທີ່ຫຼາກຫຼາຍ.

Individual organisms respond to environmental variability, such as climate change, through ecophysiological processes which operate continuously, generally at a microscopic or sub- organ scale.

Ecophysiological mechanisms underpin individual organism's tolerance to environmental stress, and comprise a broad range of responses defining the absolute tolerance limits of individuals to environmental conditions. Ecophysiological responses may scale up to control species geographic ranges.

Ecosystem: ລະບົບນິເວດ

ໝາຍເຖິງ ການພົວພັນຊຶ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ ແລະ ປັດໃຈສິ່ງແວດລ້ອມ ທາງດ້ານກາຍະພາບ ແລະ ເຄມີ ຢູ່ໃນພື້ນທີ່ໃດໜຶ່ງ. ພື້ນທີ່ລະບົບນິເວດ ອາດຈະສາມາດຈັດແບ່ງຕາມພື້ນທີ່ໄດ້ຫຼາຍໆ ຂົງເຂດໃນທົ່ວໂລກ, ລະບົບນິເວດສະເພາະ ໃນລະດັບໂລກ ຫຼື ຂະໜາດນ້ອຍ, ພື້ນທີ່ຂະໜາດນ້ອຍທີ່ມີຂໍ້ມູນອະທິບາຍແບບລະອຽດ.

The interactive system formed from all living organisms and their physical and chemical environment within a given area. Ecosystems cover a hierarchy of spatial scales and can comprise the entire globe, biomes at the continental scale or small, well-circumscribed systems such as a small pond.

Ecosystem-based adaptation: ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໂດຍອີງໃສ່ລະບົບນິເວດ

ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍອີງໃສ່ລະບົບນິເວດແມ່ນ ການນໍາໃຊ້ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນແລະການບໍລິການຂອງລະບົບນິເວດເປັນສ່ວນໜຶ່ງ ຂອງຍຸດທະສາດການປັບຕົວ ເພື່ອຊ່ວຍໃຫ້ຄົນສາມາດປັບຕົວ ເຂົ້າກັບຜົນກະທົບທາງລົບ ຈາກການປ່ຽນແປງດິນຟ້າອາກາດ

Ecosystem-based adaptation is the use of biodiversity and ecosystem services as part of an overall adaptation strategy to help people to adapt to the adverse effects of climate change.

Ecosystem Approach: ຕາມວິທີການ ຂອງ ລະບົບນິເວດ

ໝາຍເຖິງ ຍຸດທະສາດ ໃນການຄຸ້ມຄອງທີ່ດິນ, ນໍ້າ ແລະ ຊັບພະຍາກອນທີ່ມີຊີວິດ ທີ່ສົ່ງເສີມໃຫ້ມີການອະນຸລັກ ແລະ ການນໍາໃຊ້ແບບຍືນຍົງ ຢ່າງເທົ່າທຽມກັນ. ຫຼັກການລະບົບນິເວດ ແມ່ນອີງຕາມ ວິທີການຄົ້ນຄ້ວາທາງວິທະຍາສາດທີ່ເໝາະສົມ ເພື່ອສຸມໃສ່ການສຶກສາລະດັບໂຄງສ້າງທາງດ້ານຊີວະວິທະຍາ, ເຊິ່ງປະກອບດ້ວຍໂຄງສ້າງທີ່ຈໍາເປັນ, ຂະບວນການ, ໜ້າທີ່ ແລະ ການເຮັດປະຕິກິລິຍາ ລະຫວ່າງສິ່ງທີ່ມີຊີວິດ ແລະ ສະພາບແວດລ້ອມຂອງພວກມັນ.ເປັນທີ່ຍອມຮັບກັນວ່າມະນຸດແລະຄວາມຫຼາກຫຼາຍທາງດ້ານວັດທະນະທໍາແມ່ນອົງປະກອບທີ່ສໍາຄັນ ຂອງລະບົບນິເວດຫຼາຍຢ່າງ. ຫຼັກການລະບົບນິເວດ ຈໍາເປັນຕ້ອງມີການຄຸ້ມຄອງການການປັບຕົວ ເພື່ອໃຫ້ເຂົ້າກັບລະບົບນິເວດ ທາງທໍາມະຊາດ ທີ່ມີຄວາມຫຼາກຫຼາຍ ແລະ ມີຄວາມຊັບຊ້ອນ ແລະ ຍັງຂາດຄວາມຮູ້ ແລະຄວາມເຂົ້າໃຈກ່ຽວກັບໜ້າທີ່ຂອງມັນ. ເປົ້າໝາຍບູລິມະສິດຕົ້ນຕໍ ແມ່ນການອະນຸລັກຊີວະນາໆພັນ ໂຄງສ້າງ ແລະ ຫນ້າທີ່ ຂອງລະບົບນິເວດ ເພື່ອຮັກສາການບໍລິການລະບົບນິເວດ.

The ecosystem approach is a strategy for the integrated management of land, water and living resources that promotes conservation and sustainable use in an equitable way.

An ecosystem approach is based on the application of appropriate scientific methodologies focused on levels of biological organisation, which encompass the essential structure, processes, functions and interactions among organisms and their environment. It recognises that humans, with their cultural diversity, are an integral component of many ecosystems. The ecosystem approach requires adaptive management to deal with the complex and dynamic nature of ecosystems and the absence of complete knowledge or understanding of their functioning. Priority targets are conservation of biodiversity and of the ecosystem structure and functioning, in order to maintain ecosystem services.

Ecosystem Services: ການບໍລິການດ້ານລະບົບນິເວດ

ໝາຍເຖິງ ຜົນປະໂຫຍດຂອງລະບົບນິເວດ ທີ່ມີຕໍ່ມະນຸດ ເຊັ່ນ: ປ່າໄມ້ໃຫ້ອາຫານ, ນໍ້າ, ໄມ້ທ່ອນ ແລະ ເສັ້ນໄຍ. ລະບົບນິເວດຊ່ວຍຄວບຄຸມອຸນຫະພູມ, ອຸທົກກະໄພ, ເຊື້ອໂລກ ແລະ ຄຸນນະພາບຂອງນໍ້າ ແລະ ມັນຍັງເປັນບ່ອນພັກຜ່ອນຍ່ອນໃຈ, ໃຫ້ຄວາມສວຍງາມ ແລະ ມີຜົນປະໂຫຍດທາງດ້ານຈິດໃຈ.

The benefits that an ecosystem provides to humans. For example, forests provide food, water, timber and fibre. They regulate climate, floods, disease and water quality. They also provide recreational, aesthetic and spiritual benefits.

El Niño: ປະກົດການໄພແຫ້ງແລ້ງ

ເຫດການ El Niño ແມ່ນການໄຫຼເປັນໄລຍະ ຂອງກະແສນໍ້າອຸ່ນ ຈາກມະຫາສະໝຸດປາຊີຟິກໃຕ້ ໄປຕາມແຄມຝັ່ງຂອງປະເທດອີກົວດໍ ແລະ ປະເທດເປຣູ ເຊິ່ງສົ່ງຜົນກະທົບຕໍ່ການປະມົງໃນທ້ອງຖິ່ນ. ເຫດການທີ່ເກີດຂຶ້ນຢູ່ໃນມະຫາສະມຸດດັ່ງກ່າວ ແມ່ນກ່ຽວພັນກັບການປ່ຽນແປງຂຶ້ນລົງ ຂອງຄວາມກົດອາກາດຮ້ອນ ເທິງຜິວນໍ້າທະເລ ໃນມະຫາສະໝຸດປາຊີຟິກ ແລະ ການຫມູນວຽນຂອງອາກາດໃນມະຫາສະມຸດປາຊີຟິກ ແລະ ມະຫາສະມຸດອິນເດຍ, ຊຶ່ງເອີ້ນວ່າ ການປ່ຽນ ແປງອາກາດຮ້ອນ-ເຢັນ ທາງພາກໃຕ້ ຊາຍຝັ່ງທະເລ (Southern Oscillation). ປະກົດການຂອງຊັ້ນບັນຍາກາດ ທາງມະຫາສະໝຸດນີ້ ເອີ້ນວ່າ: ElNino-Southern Oscillation.

ໃນຊ່ວງເຫດການ El Niño ກະແສລົມແຮງມີການຫຼຸດກໍາລັງແຮງຂອງລົມຫຼຸດລົງ ແລະມີການເພີ່ມຄວາມຜັນຜວນຂອງອາກາດໃນເຂດເສັ້ນສູນສູດ ເຊິ່ງເຮັດໃຫ້ເກີດມີອາກາດຮ້ອນເທິງໜ້ານໍ້າມະຫາສະໝຸດ ຢູ່ເຂດອິນໂດເນເຊຍ ພັດເຂົ້າໄປກະທົບກັບອາກາດເຢັນ ຂອງກະແສນໍ້າຢູ່ປະເທດ ເປຣູ. ເຫດການດັ່ງກ່າວຈະສົ່ງຜົນກະທົບຫຼາຍຕໍ່ກະແສລົມ, ອຸນຫະພູມ ເທິງໜ້ານໍ້າທະເລ ແລະ ການກະແຈກຢາຍປະລິມານນໍ້າຝົນ ເຂດອາກາດຮ້ອນຊຸ່ມ

ປາຊີຟິກ. ຊຶ່ງມີຜົນກະທົບຕໍ່ສະພາບອາກາດ ຢູ່ເຂດປາຊີຟິກ ແລະ ຂົງເຂດອື່ນຂອງໂລກ, ເຫດການກົງກັນຂ້າມເຫດການ ElNino ເອີ້ນວ່າເຫດການ La Niña

El Niño, in its original sense, is a warm-water current that periodically flows along the coast of Ecuador and Peru, disrupting the local fishery. This oceanic event is associated with a fluctuation of the inter-tropical surface pressure pattern and circulation in the Indian and Pacific Oceans, called the Southern Oscillation. This coupled atmosphere-ocean phenomenon is collectively known as El Niño-Southern Oscillation (ENSO).

During an El Niño event, the prevailing trade winds weaken and the equatorial countercurrent strengthens, causing warm surface waters in the Indonesian area to flow

eastward to overlie the cold waters of the Peru Current. This event has great impact on the wind, sea surface temperature, and precipitation patterns in the tropical Pacific. It has climatic effects throughout the Pacific region and in many other parts of the world. The opposite of an El Niño event is called La Niña.

Emissions: ການປ່ອຍ

ໝາຍເຖິງ ການປ່ອຍທາດອາຍເຮືອນແກ້ວຂຶ້ນສູ່ບັນຍາກາດ

The release of GHGs into the atmosphere.

Emission Factor: ຕົວຄູນການປ່ອຍ

ໝາຍເຖິງ ຕົວປະກອບໜຶ່ງ ສໍາລັບການຄາດຄະເນການປ່ອຍທາດອາຍເຮືອນແກ້ວ ຈາກຂໍ້ມູນກິດຈະກໍາທີ່ມີຢູ່ (ຕົວຢ່າງ: ໂຕ່ນຕໍ່ການນໍາໃຊ້ນໍ້າມັນ, ໂຕ່ນຕໍ່ຜະລິດຕະພັນທີ່ຜະລິດໄດ້) ແລະ ການປ່ອຍທາດອາຍເຮືອນແກ້ວທີ່ຊັດເຈນ.

A factor allowing GHG emissions to be estimated from a unit of available activity data (e.g., tons of fuel consumed, tons of product produced) and absolute GHG emissions.

Emission Reduction Purchase Agreement (ERPA): ຂໍ້ຕົກລົງການ ຊື້ຂາຍການຫຼຸດຜ່ອນການປ່ອຍ

ໝາຍເຖິງ ການລົງນາມລະຫວ່າງຜູ້ຊື້ ແລະ ຜູ້ຂາຍ ສິນເຊື່ອກາກບອນ.

A binding purchase agreement signed between buyers and sellers of carbon credits

Emissions Scenario: ການຈຳລອງ ການປ່ອຍທາດອາຍເຮືອນແກ້ວ ໃນອະນາຄົດ

ໝາຍເຖິງ ການນຳສະເໜີຄວາມເປັນໄປໄດ້ ກ່ຽວກັບ ການພັດທະນາໂດຍມີການປ່ອຍທາດອາຍເຮືອນແກ້ວ ໃນອະນາຄົດ ເຊິ່ງມີຄວາມເປັນໄປໄດ້ໃນການສາຍລັງສີ (ຕົວຢ່າງທາດອາຍເຮືອນແກ້ວ, ສານລະເຫີຍ) ໂດຍອີງຕາມຄວາມເຂົ້າໃຈ ແລະ ຄວາມໝັ້ນຄົງໃນການຕັ້ງສົມມຸດຕິຖານ ຕໍ່ກັບການຊຸກດັນໃຫ້ເກີດຄວາມຂັບເຄື່ອນ (ເຊັ່ນ: ການພັດທະນາ ທາງດ້ານປະຊາກອນ ແລະ ເສດຖະກິດ-ສັງຄົມ, ການປ່ຽນແປງທາງດ້ານເຕັກໂນໂລຊີ) ແລະ ຄວາມສຳພັນຂອງພວກມັນ. ໃນປີ 1992 ຄະນະກຳມະການສາກົນກ່ຽວກັບ ການປ່ຽນແປງ ດິນຟ້າອາກາດ (IPCC) ໄດ້ນຳສະເໜີ ສະຖານະການຈຳລອງການປ່ອຍທາດອາຍເຮືອນແກ້ວ ໃນອະນາຄົດ ທີ່ໄດ້ນຳໃຊ້ເປັນພື້ນຖານ ໃຫ້ແກ່ການຄາດຄະເນການປ່ຽນແປງດິນຟ້າອາກາດ ຢູ່ໃນບົດລາຍງານການປະເມີນ ຄັ້ງທີສອງ. ບັນດາການຈຳລອງ ການປ່ອຍທາດອາຍເຮືອນແກ້ວເຫຼົ່ານີ້ ແມ່ນໝາຍເຖິງເຫດການໃນອະນາຄົດ IS92. ໃນບົດລາຍງານພິເສດ ຂອງຄະນະກຳມະການສາກົນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ໃນການປ່ອຍທາດອາຍເຮືອນແກ້ວ ໃນອານາຄົດ (SRES), (ນັກວິໄຈທ່ານ Nakióenovi ແລະ ທ່ານອື່ນໆ, 2000), ການຈຳລອງ ການປ່ອຍທາດອາຍເຮືອນແກ້ວ ຊະນິດໃໝ່ ເອີ້ນວ່າ SRES ກໍ່ໄດ້ຖືກຈັດພິມ.

A plausible representation of the future development of emissions of substances that are potentially radiatively active (e.g., greenhouse gases, aerosols), based on a coherent and internally consistent set of assumptions about driving forces (such as demographic and socio-economic development, technological change) and their key relationships.

In 1992, the IPCC presented a set of emissions scenarios that were used as a basis for the climate projections in the Second Assessment Report. These emissions scenarios are referred to as the IS92 scenarios. In the IPCC Special Report on Emissions Scenarios (SRES) (Nakićenović et al., 2000), new emissions scenarios – the so-called SRES scenarios–were published.

Emissions Trading: ການຊື້-ຂາຍ ກາກບອນ

ໝາຍເຖິງ ໜຶ່ງໃນສາມຂອງກົນໄກອະນຸສັນຍາກຽວໂຕ ໂດຍປະເທດໃນກຸ່ມ ບັນຊີ I ສາມາດ ຊື້-ຂາຍ ກາກບອນເຄຣດິດ ກັບປະເທດອື່ນໆ ໃນກຸ່ມປະເທດຢູ່ໃນບັນຊີ I ເພື່ອໃຫ້ບັນລຸເປົ້າໝາຍ ຫລຸດການປ່ອຍທາດອາຍເຮືອນແກ້ວ.

One of the three Kyoto mechanisms, by which an Annex I Party may transfer Kyoto Protocol units to, or acquire units from, another Annex I Party. An Annex I Party must meet specific eligibility requirements to participate in emissions trading.

Emission Uncertainty: ຄວາມຄາດເຄື່ອນໃນການຄິດໄລ່ການປ່ອຍທາດອາຍເຮືອນແກ້ວ

ໝາຍເຖິງຄວາມຄາດເຄື່ອນທີ່ສາມາດເກີດຂຶ້ນໄດ້ໃນການຄຳນວນການປ່ອຍທາດອາຍເຮືອນແກ້ວ ແມ່ນຖືກຄຳນວນປະລິມານການປ່ອຍ, ເນື່ອງຈາກຄວາມຄາດເຄື່ອນ ໃນການປ້ອນຂໍ້ມູນ ແລະ ວິທີການຄິດໄລ່ ເພື່ອຄຳນວນປະລິມານການປ່ອຍທາດອາຍເຮືອນແກ້ວ.

Uncertainty that arises whenever GHG emissions are quantified, due to uncertainty in data inputs and calculation methodologies used to quantify GHG emissions.

Energy Efficiency: ພະລັງງານທີ່ມີປະສິດທິພາບ

ໝາຍເຖິງ ການຫຼຸດຜ່ອນປະລິມານການນຳໃຊ້ພະລັງງານການເພື່ອຜະລິດສິນຄ້າ ຫຼື ນຳໃຊ້ເຂົ້າໃນຂະບວນການດຳເນີນງານ ໂດຍທີ່ບໍ່ເຮັດໃຫ້ຄຸນນະພາບ ຫຼື ການບໍລິການຫຼຸດລົງ ຫຼື ເປັນການຜະລິດກະແສໄຟຟ້າທີ່ມີປະສິທິພາບສູງ.

Reducing the amount of energy used to operate a product or to carry out a process, without reducing the quality or level of service, or making the actual generation of electricity more efficient.

Enhancing Carbon Sinks: ການເພີ່ມແຫຼ່ງຊຶມຊັບທາດກາກບອນ

ໝາຍເຖິງ ການກຳນົດມາດຕະການ ຫຼື ທາງເລືອກທີ່ເໝາະສົມໃນການເພີ່ມ ຫຼື ຮັກສາແຫຼ່ງຊຶມຊັບ ແລະ ເກັບກັກເອົາທາດອາຍກາກບອນຈາກຊັ້ນບັນຍາກາດ ໂດຍຜ່ານຂະບວນການສັງເຄາະແສງ ເປັນຕົ້ນ: ປ່າໄມ້, ດິນ, ພືດ, ຊັບພະຍາກອນນໍ້າ.

Enhancing carbon sinks involves the determination of appropriate measures to increase or conserve carbon sinks, enabling the absorption of carbon from the atmosphere through photosynthesis, particularly by forests, soil, vegetation, and water resources.

Evaporation: ການລະເຫີຍອາຍ

ໝາຍເຖິງຂະບວນການປ່ຽນແປງຈາກຂອງແຫຼວເປັນອາຍ.

The transition process from liquid to gaseous state.

Evapotranspiration: ປະກົດການຂອງການລະເຫີຍອາຍ

ໝາຍເຖິງຂັ້ນຕອນເຊື່ອມຕໍ່ ຂອງການລະເຫີຍອາຍ ຂອງນໍ້າຈາກຜິວໂລກ ແລະ ການລະເຫີຍອາຍຈາກພືດ.

The combined process of water evaporation from the Earths surface and transpiration from vegetation.

Exposure: ການປະເຊີນຕໍ່ການປ່ຽນແປງດິນຟ້າອາກາດ

ໝາຍເຖິງ ລັກສະນະພູມອາກາດ ໃນປະຈຸບັນ ແລະ ອະນາຄົດ ທີ່ມີການປ່ຽນແປງ ແລະ ແປປວນ ໃນລະດັບທີ່ຮຸນແຮງ ຊຶ່ງກະທົບຕໍ່ລະບົບໃດໜຶ່ງ.

The nature and degree to which a system is exposed to significant historical and projection of climatic variations

Extreme Weather Event: ເຫດການຄວາມຮຸນແຮງຂອງສະພາບອາກາດ

ໝາຍເຖິງ ເຫດການທີ່ບໍ່ມັກເກີດຂຶ້ນ ໂດຍທຽບກັບຂໍ້ມູນອ້າງອີງທາງດ້ານສະຖິຕິ ທີ່ເກີດຂຶ້ນຢູ່ສະຖານທີ່ໃດໜຶ່ງສະເພາະ. ຄວາມໝາຍຂອງຄຳວ່າບໍ່ມັກເກີດຂຶ້ນ ອາດມີຄວາມໝາຍ

ຕ່າງ, ແຕ່ວ່າເຫດການສະພາບອາກາດທີ່ຮຸນແຮງ ອາດເກີດຂຶ້ນຍາກ ຫຼື ຍາກກວ່າ 10 ເທື່ອ ຫຼື 90 ເທື່ອ ຂອງຄ່າຕົວປ່ຽນ. ໂດຍການໃຫ້ຄວາມໝາຍຂອງຄຳວ່າ ອາກາດທີ່ຮຸນແຮງອາດມີການໃຫ້ຄວາມໝາຍແຕກຕ່າງກັນໃນແຕ່ລະສະຖານທີ່. ເຫດການສະພາບອາກາດທີ່ຮຸນແຮງອາດລວມມີໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ.

An event that is rare within its statistical reference distribution at a particular place. Definitions of 'rare' vary, but an extreme weather event would normally be as rare as or rarer than the 10th or 90th percentile. By definition, the characteristics of what is called 'extreme weather'may vary from place to place. Extreme weather events may typically include floods and droughts.

Extratropical Cyclone: ພະຍຸໝູນຢູ່ນອກເຂດຮ້ອນ

ໝາຍເຖິງ ທຸກຂະໜາດພະຍຸໝູນ ມັນບໍ່ແມ່ນພະຍຸໝູນເຂດຮ້ອນ. ປົກກະຕິແລ້ວໝາຍເຖິງລະບົບພະຍຸເສັ້ນຂະໜານປານກາງ ຫຼື ເສັ້ນຂະໜານສູງໃນບໍລິເວນ ທີ່ມີຄວາມກົດດັນຕໍ່າໃນພື້ນທີ່ສ່ວນໃຫຍ່ຂອງໂລກ. ບາງຄັ້ງເອີ້ນວ່າ ພະຍຸນອກເຂດຮ້ອນ ຫຼື ພະຍຸເຂດພື້ນ ທີ່ມີຄວາມກົດດັນຕໍ່າ.

Any cyclonic-scale storm that is not a tropical cyclone. Usually refers to a middle- or high-latitude migratory storm system formed in regions of large horizontal temperature variations. Sometimes called extratropical storm or extratropical low.

F

Financial Mechanism: ກົນໄກດ້ານການເງິນ

ໝາຍເຖິງ ການອຳນວຍຄວາມສະດວກ ເງື່ອນໄຂຂອງກົນໄກດ້ານການເງິນ ການປ່ຽນແປງດິນຟ້າອາກາດ. ສົນທິສັນຍາ ໄດ້ສ້າງກົນໄກທາງການເງິນ ເພື່ອຈັດສັນງົບປະມານໃຫ້ບັນດາປະເທດກຳລັງພັດທະນາ. ກົນໄກການເງິນດັ່ງກ່າວ ຍັງໄດ້ນຳໃຊ້ເພື່ອຈັດຕັ້ງປະຕິບັດອະນຸ

ສັນຍາ ກຽວໂຕ ອີກດ້ວຍ. ສົນທິສັນຍາ ລະບຸໄວ້ວ່າ ການດຳເນີນການຈັດຕັ້ງປະຕິບັດ ກົນໄກການເງິນສາມາດດຳເນີນການ ຜ່ານອົງກອນສາກົນທີ່ມີຢູ່ ໜຶ່ງໜ່ວຍງານ ຫຼື ຫຼາຍ ກວ່ານັ້ນ. ກອງທຶນສິ່ງແວດ ລ້ອມໂລກ (GEF) ໄດ້ຮັບມອບໝາຍໜ້າທີ່ເປັນໜ່ວຍງານ ຈັດຕັ້ງປະຕິບັດກົນໄກການເງິນດັ່ງກ່າວມາຫຼາຍປີ ແລະ ໃນກອງປະຊຸມ COP 17 ປີ 2011, ບັນດາປະເທດພາຄີ ຍັງມອບໝາຍໜ້າທີ່ອຳນາດ ໃຫ້ກັບກອງທຶນສີຂຽວ ສຳລັບ ການປ່ຽນແປງດິນຟ້າອາກາດ ເປັນໜ່ວຍງານຈັດຕັ້ງປະຕິບັດ ກົນໄກການເງິນອີກດ້ວຍ. ກົນໄກການເງິນດັ່ງກ່າວມີໜ້າທີຮັບຜິດ ຊອບຕໍ່ກອງປະຊຸມ COP, ເຊິ່ງການພິຈາລະນາ ອະນຸມັດທຶນ ແມ່ນອີງຕາມນະໂຍບາຍ, ແຜນງານບຸລິມະສິດ ແລະ ກຳນົດເງື່ອນໄຂຕ່າງໆ.

To facilitate the provision of climate finance, the Convention established a financial mechanism to provide funds to developing country Parties. The financial mechanism also serves the Kyoto Protocol. The Convention states that the operation of the financial mechanism can be entrusted to one or more existing international entities. The Global Environment Facility (GEF) has served as an operating entity of the financial mechanism for many years and at COP 17 in 2011, Parties also decided to designate the Green Climate Fund (GCF) as an operating entity of the financial mechanism. The financial mechanism is accountable to the COP, which decides on its policies, programme priorities and eligibility criteria for funding.

Fiduciary Standards: ມາດຕະຖານການຄຸ້ມຄອງການເງິນ

ໝາຍເຖິງ ຂໍ້ກຳນົດທົ່ວໄປ ແລະ ຂໍ້ກຳນົດສະເພາະ ຂອງກອງທຶນສີຂຽວ ສຳລັບ ການປ່ຽນ ແປງດິນຟ້າອາກາດ GCF ທີ່ໜ່ວຍງານຈັດຕັ້ງປະຕິບັດ ທີ່ໄດ້ຮັບການຮັບຮອງ ຫຼື ໜ່ວຍ ງານຮ່ວມດຳເນີນການຕ້ອງປະຕິບັດຕາມ ເຊິ່ງຂຶ້ນຢູ່ກັບ ລັກສະນະ ຂອງກິດຈະກຳທີ່ໄດ້ ຮັບການສະໜັບສະໜູນຈາກກອງທຶນ GCF.

Refers to the basic and specialized fiduciary requirements of the GCF that accredited entities and readiness partners need to comply with depending on the nature of the activities funded by the GCF.

Flood: ໄພນ້ຳຖ້ວມ

ໝາຍເຖິງ ກະແສນ້ຳທີ່ໄຫຼແຮງລົ້ນອອກຈາກຕາຝັ່ງຫ້ວຍນ້ຳ ຫຼື ຈຳນວນທີ່ໄຫຼໂຮມເຂົ້າກັນ ຖ້ວມພື້ນທີ່ໃດໜຶ່ງ ທີ່ບໍ່ເຄີຍມີນ້ຳຖ້ວມມາກ່ອນ. ໄພນ້ຳຖ້ວມປະກອບມີ: ນ້ຳຖ້ວມລົ້ນຕາ

ຝັ່ງ (river floods), ນ້ຳຖ້ວມຊຸ (flash floods), ນ້ຳຖ້ວມຂັງໃນຕົວເມືອງ (urban floods), ນ້ຳຖ້ວມໃນພື້ນທີ່ໃດໜຶ່ງຍ້ອນຝົນຕົກໜັກເກີນໄປ ຊຶ່ງດິນບໍ່ສາມາດດູດຊຶມໄດ້ທັນ (pluvial floods) ຫຼື ບໍ່ສາມາດລະບາຍນ້ຳໄດ້ດີ (sewer floods), ນ້ຳຖ້ວມແຄມຝັ່ງທະເລ (coastal floods), ແລະ ນ້ຳຖ້ວມ ທີ່ເກີດຈາກ ການເປື່ອຍ ຂອງຖານນ້ຳກ້ອນ (glacial lake outburst floods). ການປ່ຽນແປງດິນຟ້າອາກາດ ແມ່ນຄາດຄະເນ ຈາກການເພີ່ມຂຶ້ນຂອງປະລິມານນ້ຳຝົນ ຢູ່ໃນເຂດແມ່ນ້ຳຂອງ ແລະ ລວມທັງການຄາດຄະເນການເພີ່ມຂຶ້ນ ຂອງປະລິມານຝົນທີ່ຕົກ. ສະນັ້ນ, ໂອກາດຈະເກີດມີໄພນ້ຳຖ້ວມຖີ່ຂຶ້ນ ແລະ ຄວາມເສຍຫາຍ ທີ່ຮຸນແຮງ ຫຼາຍຂຶ້ນ.

The overflowing of the normal confines of a stream or other body of water, or the accumulation of water over areas that are not normally submerged. Floods include river (fluvial) floods, flash floods, urban floods, pluvial floods, sewer floods, coastal floods, and glacial lake outburst floods. Climate change is projected to increase the rainfall in much of the Mekong Region as well as expected to increase rainfall intensity. Floods would therefore potentially become more frequent and more severe.

Focal Point: ຈຸດປະສານງານ

ບຸກຄົນ ຫຼື ໜ່ວຍງານ ທີ່ໄດ້ຮັບການມອບໝາຍຈາກ ປະເທດທີ່ກຳລັງພັດທະນາຢູ່ພາຍໃຕ້ອະນຸສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UNFCCC) ເພື່ອເຮັດໜ້າທີ່ຊົ່ວຄາວ ໃນຖານະເປັນຈຸດປະສານງານແຫ່ງຊາດ (NDA) ຈົນກ່ວາຈະມີການແຕ່ງຕັ້ງໃຫ້ເປັນ NDA ຢ່າງເປັນທາງການ.

An individual or authority designated by a developing country party to the United Nations Framework Convention on Climate Change (UNFCCC) to fulfil all functions of a National Designated Authority (NDA) on a temporary basis, until it has designated an NDA.

Food and Nutrition Security: ການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ

ໝາຍເຖິງ ການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການຈະເກີດຂຶ້ນໄດ້ກໍ່ຕໍ່ເມື່ອທຸກໆຄົນ, ທຸກໆເວລາ ມີຄວາມສາມາດເຂົ້າເຖິງສະບຽງອາຫານ ບໍ່ວ່າຈະເປັນທາງດ້ານຮ່າງກາຍ, ສັງຄົມ ແລະ ເສດຖະກິດເຊິ່ງໄດ້ບໍລິໂພກອາຫານຕາມຄຸນນະພາບ ແລະປະລິມານທີ່ພຽງພໍ

ກັບຄວາມຕ້ອງການ ຂອງຄາບອາຫານ ແລະ ຄຸນລັກສະນະການກິນອາຫານ ແລະ ໄດ້ຮັບການສົ່ງເສີມຈາກສະພາບແວດລ້ອມທີ່ມີສຸຂະອານາໄມພຽງພໍ, ການບໍລິການ ແລະ ການເບິ່ງແຍງດ້ານສຸຂະພາບສຳລັບຊີວິດທີ່ແຂງແຮງ ແລະ ສຸຂະພາບດີ

Food and nutrition security exists when all people, at all times, have physical, social and economic access to food which is consumed in sufficient quantity and quality to meet their dietary needs and food preferences, and is supported by an environment of adequate sanitation, health services and care, allowing for a healthy and active life.

Food Security: ການຄ້ຳປະກັນດ້ານສະບຽງອາຫານ

ໝາຍເຖິງ ສະພາບການໃດໜຶ່ງທີ່ເກີດຂຶ້ນເມື່ອທຸກໆຄົນ, ທຸກເວລາ, ມີຄວາມສາມາດເຂົ້າເຖິງສະບຽງອາຫານຢ່າງພຽງພໍ ມີຄວາມປອດໄພ ແລະ ມີໂພສະນາການ ບໍ່ວ່າຈະເປັນທາງຮ່າງກາຍ, ສັງຄົມ ແລະ ເສດຖະກິດ ທີ່ຕ້ອງການຕອບສະໜອງຕາມຄວາມຕ້ອງການດ້ານໂພຊະນາການ ແລະ ຄຸນລັກສະນະການກິນອາຫານ ເພື່ອໃຫ້ມີການດຳລົງຊີວິດ ແລະ ສຸຂະພາບດີ. ແນວໃດກໍ່ຕາມ ການວັດແທກໂດຍກົງ ກ່ຽວກັບ ການຄ້ຳປະກັນສະບຽງອາຫານແມ່ນມີຄວາມຫຍຸ້ງຍາກສັບສົນ ແລະ ເປັນບັນຫາທີ່ຕ້ອງການໄດ້ແກ້ໄຂ. ການຄ້ຳປະກັນສະບຽງອາຫານ ສ່ວນໃຫ່ຍແມ່ນຂຶ້ນກັບ ສະພາບການເກີດຂຶ້ນ ຂອງການບໍ່ຄ້ຳປະກັນສະບຽງອາຫານ.

A situation that exists when all people, at all times, have physical, social and economic access to sufficient, safe and nutritious food that meets their dietary needs and food preferences for an active and healthy life" (SOFI, 2001). However, direct measurement of food security is complex and problematic. Food security is most frequently based upon the absence of food insecurity

Forest Carbon: ກາກບອນປ່າໄມ້

ໂດຍທົ່ວໄປແລ້ວໝາຍເຖິງ ກາກບອນທີ່ເກັບກັກໄວ້ໃນປ່າ ຕາມປົກກະຕິໝາຍເຖິງ ໂຄງການບັນເທົາຜົນກະທົບການປ່ຽນແປງດິນຟ້າອາກາດ, ທີ່ມີຈຸດປະສົງ ເພື່ອເພີ່ມການເກັບກັກກາກບອນ ຫຼື ຫຼຸດຜ່ອນການປ່ອຍທາດກາກບອນຈາກປ່າໄມ້.

Forest carbon generally refers to the carbon stored in forests; usually in reference to climate change mitigation projects which aim to increase carbon sequestration in or decrease carbon dioxide emissions from forests.

Forest Carbon Index (FCI): ດັດສະນີກາກບອນປ່າໄມ້

ໝາຍເຖິງ ແບບຈຳລອງ ກ່ຽວກັບກາກບອນປ່າໄມ້ ສຳລັບການສ້າງໂຄງການ REDD ໂດຍອີງໃສ່ຊັບພະຍາກອນກອນ ທີ່ມີໃນອະນາຄົດ ແລະ ຄຳແນະນຳຂອງຊ່ຽວຊານ ດ້ານການປ່ຽນແປງດິນຟ້າອາກາດ ແມ່ນເຜີຍແຜ່ໃນເດືອນ ທັນວາ ປີ2009 ໂດຍມີການກວດສອບມູນຄ່າ ແລະ ຕົ້ນທຶນ ຂອງການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວໃນອານາຄົດ.

A forest carbon model for REDD produced by Resources for the Future and Climate Advisers that was publically launched in December 2009 examining future volumes and costs of emission reductions

Fossil Fuels: ນ້ຳມັນເຊື້ອໄຟ

ໝາຍເຖິງ ແກັດ, ຖ່ານຫີນ, ນ້ຳມັນ ແລະ ນ້ຳມັນທີ່ໄດ້ຈາກຂະບວນການຜະລິດ ເຊັ່ນ: ນ້ຳມັນກາຊວນເຊື້ອໄຟຈະຖືກເຜົາໄໝ້ເພື່ອກຳເນີດແຫຼ່ງພະລັງງານຕອບສະໜອງຄວາມຮ້ອນ ເພື່ອໃຫ້ພະລັງງານທຸກຮູບແບບ ສຳລັບການຂົນສົ່ງ ແລະ ເພື່ອນຳໃຊ້ເຂົ້າໃນຂະບວນການຜະລິດອຸດສະຫະກຳ ເຊັ່ນ: ການຂຸດຄົ້ນບໍ່ແຮ່ ແລະ ການດຳເນີນກິດຈະກຳຂອງໂຮງຈັກ, ໂຮງງານ.

Gas, coal, oil and oil-derived products such as diesel. Fossil fuels are combusted to create electricity, to provide heating, to power all forms of transportation and to power industrial processes, like mining and manufacturing activities.

Fugitive Emissions: ແຫຼ່ງທາດອາຍເຮືອນແກ້ວຈາກການລະເຫີຍອາຍ

ໝາຍເຖິງ ແຫຼ່ງທາດອາຍເຮືອນແກ້ວຈາກຝຸ່ນ ຊຶ່ງບໍ່ໄດ້ຖືກຄວບຄຸມທາງກາຍຍະພາບ ແຕ່ມາຈາກກິດຈະກຳ ທີ່ປ່ອຍທາດອາຍເຮືອນແກ້ວ ແບບຕັ້ງໃຈ ຫຼື ບໍ່ໄດ້ຕັ້ງໃຈ. ໂດຍສ່ວນໃຫຍ່ແລ້ວ ແມ່ນເກີດມາຈາກຂະບວນການຜະລິດ, ຂະບວນການຈັດເກັບ, ໃຊ້ນ້ຳມັນເຊື້ອໄຟ, ຫຼື ເຄມີ ຕ່າງໆເປັນຕົ້ນ.

Emissions that are not physically controlled but result from the intentional or unintentional releases of GHGs. They commonly arise from the production, processing transmission storage and use of fuels and other chemicals, often through joints, seals, packing, gaskets, etc.

Fugitive Fuel Emissions: ການປ່ອຍທາດອາຍເຮືອນແກ້ວຈາກນ້ຳມັນເຊື້ອໄຟ

ການປ່ອຍທາດອາຍເຮືອນແກ້ວ ຈາກການຜະລິດ ຫຼື ສິ່ງເສດເຫຼືອ ຫຼື ການສູນເສຍຈາກຂະບວນການຜະລິດນ້ຳມັນ, ຈັດເກັບ, ຂົນສົ່ງ ເຊັ່ນ: ການປ່ອຍທາດມີເທນ ລະຫວ່າງການຂຸດເຈາະນ້ຳມັນ, ແກັດ ແລະ ການກັ່ນຕອງ ຫຼື ການຮົ່ວໄຫຼຈາກທໍ່ສົ່ງແກັດທຳມະຊາດ.

Greenhouse-gas emissions as by-products or waste or loss in the process of fuel production, storage, or transport, such as methane given off during oil and gas drilling and refining, or leakage of natural gas from pipelines.

G

Global Environment Facility (GEF): ກອງທຶນສິ່ງແວດລ້ອມໂລກ

ໝາຍເຖິງ ອົງກອນອິດສະຫຼະ ທາງດ້ານການເງິນ ເພື່ອໃຫ້ການສະໜັບສະໜູນທາງດ້ານການເງິນໃຫ້ແກ່ບັນດາປະເທດກຳລັງພັດທະນາ ສຳລັບ ໂຄງການເພື່ອແກ້ໄຂບັນຫາສິ່ງແວດລ້ອມໂລກ ແລະ ສົ່ງເສີມ ວິຖີຊີວິດແບບຍືນຍົງ ຂອງຊຸມຊົນ. ບັນດາປະເທດພາຄີ ຂອງສົນທິສັນຍາ ໄດ້ມອບໝາຍການຈັດຕັ້ງປະຕິບັດ ກົນໄກທາງດ້ານການເງິນ ໃຫ້ກັບກອງທຶນສິ່ງແວດລ້ອມໂລກ ຢ່າງຕໍ່ເນື່ອງຕະຫຼອດມາ, ມີການທົບທວນປະເມີນທຸກໆ 4 ປີ. ກົນໄກການເງິນດັ່ງກ່າວ ຍັງຮັບຜິດຊອບຕໍ່ກອງປະຊຸມ COP ອີກດ້ວຍ.

The GEF is an independent financial organization that provides grants to developing countries for projects that benefit the global environment and promote sustainable livelihoods in local communities. The Parties to the Convention assigned operation of the financial mechanism to the GEF on an on-going basis, subject to review every four years. The financial mechanism is accountable to the COP.

Glacier: ຊັ້ນນ້ຳກ້ອນ

ເຂດທີ່ເປັນນ້ຳກ້ອນຂະໜາດໃຫຍ່ ໄດ້ໄຫຼລົງສູ່ຮ່ອມພູ (ໂດຍມີການປ່ຽນຮູບຮ່າງພາຍໃນ ໂຕ ແລະ ໄຫຼໄປຕາມຖານ) ແລະ ຖືກຈຳກັດໂດຍລັກສະນະພູມີປະເທດ ທີ່ຢູ່ອ້ອມຮອບ (ຕົວຢ່າງ: ດ້ານຂ້າງຂອງຮ່ອມພູ ຫຼື ສິ່ງທີ່ຢູ່ອ້ອມຮອບຈອມພູ) ເຂດທີ່ເປັນນ້ຳກອນ ແມ່ນ ຖືກກັກເກັບໄວ້ ໂດຍການເພີ່ມຂຶ້ນ ຂອງຫິມະຢູ່ເສັ້ນຂະໜານລະດັບສູງ ເຮັດໃຫ້ເກີດມີ ຄວາມດຸ່ນດ່ຽງ ການລະລາຍນ້ຳກ້ອນຢູ່ເສັ້ນຂະໜານລະດັບຕ່ຳ ຫຼື ໄຫຼລົງສູ່ທະເລ.

A mass of land ice flowing downhill (by internal deformation and sliding at the base) and constrained by the surrounding topography (e.g., the sides of a valley or surrounding peaks). A glacier is maintained by accumulation of snow at high altitudes, balanced by melting at low altitudes or discharging into the sea.

Global Warming: ພາວະໂລກຮ້ອນ

ພາວະໂລກຮ້ອນ ໝາຍເຖິງ ການເພີ່ມຂຶ້ນເທື່ອລະໜ້ອຍ ທີ່ເກັບກຳໄດ້ຈາກການສັງເກດ ການ ຫຼື ຄາດຄະເນ ກ່ຽວກັບ ອຸນຫະພູມເທິງພື້ນຜິວໜ້າໂລກ ເປັນຫນຶ່ງໃນຈຳນວນຜົນ ທີ່ຕາມມາຂອງການແຜ່ລັງສີ ຊຶ່ງມີສາຍເຫດມາຈາກການປ່ອຍທາດອາຍເຮືອນແກ້ວຈາກ ການກະທຳຂອງມະນຸດ.

Global warming refers to the gradual increase, observed or projected, in global surface temperature, as one of the consequences of radiative forcing caused by anthropogenic emissions.

Global Warming Potential (GWP): ຕົວຊີ້ບອກຄຸນລັກສະນະ ທີ່ກໍ່ໃຫ້ເກີດພາລະໂລກຮ້ອນ

ໝາຍເຖິງ ຕົວຊີ້ບອກອັນໜຶ່ງຂຶ້ນກັບຄຸນລັກສະນະການແຜ່ລັງສີ ຂອງການປະສົມຂອງ ບັນດາທາດອາຍເຮືອນແກ້ວ, ການວັດແທກການແຜ່ລັງສີ ຂອງຫົວໜ່ວຍມວນສານ ທີ່ປະ ສົມກັນຂອງທາດອາຍເຮືອນແກ້ວທີ່ມີຢູ່ໃນຊັ້ນບັນຍາກາດ ໃນປະຈຸບັນທຽບໃສ່ກັບໄລຍະ ເວລາທີ່ໄດ້ຮັບການຄັດເລືອກໄວ້ ກ່ຽວກັບ ທາດອາຍກາກບອນໄດອອກໄຊການນຳສະເໜີ ຄວາມເປັນໄປໄດ້ພາວະໂລກຮ້ອນທີ່ເກີດຂຶ້ນ ໂດຍມີການເຊື່ອມໂຍງຕໍ່ກັບຜົນກະທົບຕາມ ໄລຍະເວລາທີ່ແຕກຕ່າງກັນ ບັນດາທາດອາຍເຮືອນແກ້ວເຫຼົ່ານີ້ຍັງຄົງມີໃນຊັ້ນບັນຍາກາດ

ແລະ ຜົນກະທົບໃນການດູດຊຶມເອົາການແຜ່ລັງສີຄວາມຮ້ອນ ຊຶ່ງສົນທິສັນຍາກຽວໂຕ ແມ່ນອີງໃສ່ຄວາມເປັນໄປໄດ້ ພາວະໂລກຮ້ອນທີ່ເກີດຂຶ້ນ ຈາກການປ່ອຍທາດອາຍເຮືອນແກ້ວ ໃນຂອບໄລຍະເວລາ 100 ປີ

An index, based upon radiative properties of well mixed greenhouse gases, measuring the radiative forcing of a unit mass of a given well mixed greenhouse gas in today's atmosphere integrated over a chosen time horizon, relative to that of carbon dioxide.

The GWP represents the combined effect of the differing times these gases remain in the atmosphere and their relative effectiveness in absorbing outgoing thermal infrared radiation. The Kyoto Protocol is based on GWPs from pulse emissions over a 100-year time frame.

Global Surface Temperature: ອຸນຫະພູມເທິງພື້ນຜິວໂລກ

ອຸນຫະພູມ ເທິງພື້ນຜິວໂລກ ແມ່ນການປະມານຄ່າສະເລ່ຍ ອຸນຫະພູມອາກາດ ຂອງໂລກ ເຖິງແນວໃດກໍ່ຕາມ, ການປ່ຽນ ແປງຕະຫຼອດເວລາ, ຄວາມຜິດປົກກະຕິ, ຄວາມແຕກຕ່າງທາງດ້ານອາກາດນັ້ນຖືກນຳໃຊ້ ແຕ່ໂດຍສ່ວນໃຫຍ່ແລ້ວແມ່ນໄດ້ອີງໃສ່ ຄ່າສະເລ່ຍຜິດປົກກະຕິ ຂອງອຸນຫະພູມຂອງໜ້ານ້ຳທະເລ ແລະ ອຸນຫະພູມໜ້າດິນ.

The global surface temperature is an estimate of the average global temperature. However, for changes over time, only anomalies, as departures from a climatology, are used, most commonly based on the area-weighted global average of the sea surface temperature anomaly and land surface air temperature anomaly.

Green Climate Fund (GCF): ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ

ໝາຍເຖິງກອງປະຊຸມ COP 16 ທີ່ເມືອງຄັນຄູນ ປະເທດເມກຊິໂກ ປີ 2010, ບັນດາລັດພາຄີໄດ້ຕົກລົງສ້າງກອງທຶນສີຂຽວ ດ້ານການປ່ຽນແປງດິນຟ້າອາກາດ ໃນນາມເປັນໜ່ວຍງານຄຸ້ມຄອງການຈັດຕັ້ງປະຕິບັດ ກົນໄກທາງການເງິນ ຂອງສົນທິສັນຍາ ຕາມມາດຕາທີ 11. ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ ຈະໃຫ້ການສະໜັບສະໜູນໂຄງການ, ແຜນງານ, ນະໂຍບາຍ ແລະ ກິດຈະກຳອື່ນໆ ຂອງກຸ່ມປະເທດກຳລັງພັດທະນາກອງທຶນດັ່ງກ່າວຈະໄດ້ຮັບການຄຸ້ມຄອງໂດຍສະພາບໍລິຫານ ຂອງກອງທຶນ GCF.

At COP 16 in Cancun in 2010, Governments established a Green Climate Fund as an operating entity of the financial mechanism of the Convention under Article 11. The GCF will support projects, programmes, policies and other activities in developing country Parties. The Fund will be governed by the GCF Board.

Greenhouse Effect: ປະກົດການທາດອາຍເຮືອນແກ້ວ

ແມ່ນຂະບວນການ ທີ່ທາດອາຍເຮືອນແກ້ວ ໃນຊັ້ນບັນຍາກາດດູດຊັບລັງສີ ອິນຟາເຣດ ຈາກດວງຕາເວັນ ຊຶ່ງມັນຈະເກັບກັກບາງສ່ວນໄວ້ໃນ ແລະ ບາງສ່ວນກໍ່ປ່ອຍອອກ, ຂະບວນການ ທາງທຳມະຊາດ ນີ້ແມ່ນເຮັດໃຫ້ອຸ່ນຫະພູມຢູ່ໃນໂລກ ແລະ ຊັ້ນບັນຍາກາດມີຄວາມສົມດູນ, ແຕ່ເຖິງຢ່າງໃດກໍ່ຕາມ ກິດຈະກຳຂອງມະນຸດ ກໍ່ສາມາດປ່ຽນແປງຄວາມເຂັ້ມຂຸ້ນ ຂອງທາດອາຍເຮືອນແກ້ວ ໃນຊັ້ນບັນຍາກາດໄດ້ ເຮັດໃຫ້ເກີດຜົນກະທົບຂອງທາດອາຍເຮືອນແກ້ວເພີ່ມຂຶ້ນ.

The process by which greenhouse gases in the earth's atmosphere absorb infrared radiation from the sun, reflect some of it back into space and emit some of it towards the earth. This natural process provides for relatively stable and mild temperatures on earth and in the atmosphere. However, human activity can change the concentration of greenhouse gases in the atmosphere, which can amplify the greenhouse effect.

Greenhouse Intensity: ຄວາມໜາແໜ້ນ ຂອງທາດອາຍເຮືອນແກ້ວ

ໝາຍເຖິງ ອັດຕາສ່ວນ ຂອງການປ່ອຍທາດອາຍເຮືອນແກ້ວໃນປະເທດຕໍ່ GDP ຂອງຕົນ ຫຼື ປະລິມານການປ່ອຍອາຍຕໍ່ຫົວໜ່ວຍ ຈາກຜົນໄດ້ຮັບທາງເສດຖະກິດ, ຄວາມເຂັ້ມຂຸ້ນຂອງທາດອາຍເຮືອນແກ້ວ ຂອງປະເທດອາດຈະເພີ່ມຂຶ້ນ ເນື່ອງຈາກວ່າ ການຂະຫຍາຍຕົວທາງເສດຖະກິດ, ການວັດແທກຄວາມເຂັ້ມຂຸ້ນ ຂອງອາຍເຮືອນແກ້ວ ແມ່ນຍັງໄດ້ນຳໃຊ້ໃນບໍລິສັດ, ເຕົາປະຕິກອນ ຫລື ຂະແໜງອຸດສະຫະກຳຕ່າງໆ.

Refers to the ratio of a nation's greenhouse gas emissions to its GDP, or the volume of emissions per unit of economic output. A country's greenhouse intensity may often be falling yet overall emissions are rising due to an expanding economy. Greenhouse intensity measures are also used at a company, plant or industry sector level.

Greenhouse Gases (GHGs): ທາດອາຍເຮືອນແກ້ວ

ໝາຍເຖິງ ບັນດາທາດອາຍ ເປັນຕົ້ນ: ກາກບອນໄດອອກໄຊ (CO_2), ມີເທນ (CH_4), ໄນຕຣັດອອກໄຊ(N_2O), ໄຮໂດຣຟຣູໂອໂຣກາກບອນ(HFCs), ເປີຟຣູໂອໂຣກາກບອນ (PFCs), ເຮັກຊາຟຣູອໍໄລ (SF_6) ທີ່ຖືກປ່ອຍອອກຈາກທຳມະຊາດ ຫຼື ເກີດຂຶ້ນຈາກ ການກະທຳຂອງມະນຸດ ຂຶ້ນສູ່ຊັ້ນບັນ ຍາກາດກໍ່ຕົວເປັນຊັ້ນອາຍເຮືອນແກ້ວ ຊຶ່ງເປັນສາ ເຫດເຮັດໃຫ້ໂລກຮ້ອນ ຫຼື ການປ່ຽນແປງດິນຟ້າອາກາດ ເປັນຕົ້ນການເຜົາໄໝ້ນ້ຳມັນເຊື້ອ ໄຟ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້, ການສ້າງ ແລະ ທຳລາຍສິ່ງເສດເຫຼືອ.

Greenhouse gases mean gases, including carbon dioxide (CO_2), methane (CH_4), nitrous oxide (N_2O), hydrofluorocarbons (HFCs), perfluorocarbons (PFCs), and sulfur hexafluoride (SF_6), that are emitted into the atmosphere from the natural environment or human actions and which result in global warming and climate change. Greenhouse gases are particularly emitted from fuel consumption, forest and land use changes, and waste production and disposition.

Greenhouse Gas Capture: ການເກັບກັກທາດອາຍເຮືອນແກ້ວ

ເປັນການສັງລວມການປ່ອຍທາດອາຍເຮືອນແກ້ວ ຈາກແຫຼ່ງປ່ອຍ ເພື່ອການດູດຊັບ.

Collection of GHG emissions from a GHG source for storage in a sink.

Greenhouse Gas Inventory: ການສຳຫຼວດການປ່ອຍທາດອາຍເຮືອນແກ້ວ

ການສຳຫຼວດການປ່ອຍທາດອາຍເຮືອນແກ້ວ ແມ່ນໜ້າທີ່ ຂອງຂະແໜງການ ຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງສຳ ຫຼວດ, ເກັບກຳຂໍ້ມູນແຫຼ່ງກຳເນີດ ແລະ ແຫຼ່ງຊຶມຊັບທາດອາຍກາກບອນ ເປັນຕົ້ນທາດ ອາຍກາກບອນໄດອອກໄຊ (CO_2), ມີເທນ (CH_4), ໄນຕຣັດອອກໄຊ (N_2O), ໄຮ ໂດຣຟຣູໂອໂຣກາກບອນ (HFCs), ເປີຟຣູໂອໂຣກາກບອນ (PFCs), ເຮັກຊາຟຣູອໍໄລ (SF_6) ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ການກຳນົດທາງເລືອກໃນການຫຼຸດຜ່ອນການປ່ອຍ ທາດອາຍເຮືອນແກ້ວ.

Greenhouse gas inventory is the madate of t he natural resources and environment sectors, in coordination with relevant sectors, shall survey and collect data on sources and sinks of greenhouse gases, particularly carbon dioxide

(CO_2), methane (CH_4), nitrous oxide (N_2O), hydrofluorocarbons (HFCs), perfluorocarbons (PFCs), and sulfur hexafluoride (SF_6), as an information base for greenhouse gas emission reduction options.

Green Power: ພະລັງງານສີຂຽວ (ພະລັງງານສະອາດ)

ໝາຍເຖິງ ແຫຼ່ງພະລັງງານທົດແທນ ແລະ ເຕັກໂນໂລຊີພະລັງງານສະອາດ ສະເພາະທີ່ມີການປ່ອຍທາດອາຍເຮືອນແກ້ວຕໍ່າ ຊຶ່ງໄດ້ສະໜອງພະລັງງານເຂົ້າໃນລະບົບຕາຄ່າຍພະລັງງານໄຟຟ້າເຊັ່ນ: ແຜ່ນໄຟຟ້າແສງຕາເວັນ, ພະລັງງານຄວາມຮ້ອນຈາກແສງຕາເວັນ, ພະລັງງານໄຟຟ້າຄວາມຮ້ອນ, ແກັດຈາກສະໜາມຂີ້ເຫຍື້ອ, ພະລັງງານນໍ້າ ແລະ ພະລັງລົມ.

A generic term for renewable energy sources and specific clean energy technologies that emit fewer GHG emissions relative to other sources of energy that supply the electric grid. Includes solar photovoltaic panels, solar thermal energy, geothermal energy, landfill gas, low-impact hydropower, and wind turbines.

Greenhouse Gas Removal (GGR): ການດູດຊັບທາດອາຍເຮືອນແກ້ວ

ການດູດຊັບທາດາຍອາຍເຮືອນແກ້ວຈາກຊັ້ນບັນຍາກາດ

Withdrawal of a GHG and/or a precursor from the atmosphere by a sink.

Greenhouse Gas Sink: ແຫຼ່ງຊຶມຊັບທາດອາຍເຮືອນແກ້ວ

ແມ່ນຂະບວນການ ຫຼື ກົນໄກທີ່ກຳຈັດທາດອາຍເຮືອນແກ້ວ, ລະອອງ ຫຼື ສານຕົ້ນຕໍຂອງທາດອາຍເຮືອນແກ້ວຈາກຊັ້ນບັນຍາກາດ.

Any process or mechanism which removes a greenhouse gas, an aerosol, or a precursor of a greenhouse gas from the atmosphere.

Greenhouse Gas Source: ແຫຼ່ງການປ່ອຍທາດອາຍເຮືອນແກ້ວ

ປັດໃຈທີ່ໃຊ້ອະທິບາຍ ຜົນກະທົບຈາກພະລັງງານຄວາມຮ້ອນ (ລະດັບຄວາມອັນຕະລາຍຕໍ່ກັບຊັ້ນບັນຍາກາດ) ແມ່ນໜຶ່ງຫົວໜ່ວຍ ຂອງທາດອາຍເຮືອນແກ້ວ ຕໍ່ຫົວໜ່ວຍຂອງກາກ

ບອນໄດອອກໄຊ

A factor describing the radiative forcing impact (degree of harm to the atmosphere) of one unit of a given GHG relative to one unit of CO_2.

H

Hazard: ໄພອັນຕະລາຍ

ປະກົດການທີ່ເປັນອັນຕະລາຍ, ສານພິດ, ການກະທຳຂອງມະນຸດ ຫຼື ເງື່ອນໄຂທີ່ອາດເປັນສາເຫດຂອງການສູນເສຍຊີວິດ, ການບາດເຈັບ ຫຼື ຜົນກະທົບຕໍ່ສຸຂະພາບ, ການທຳລາຍຊັບສິນ, ຄວາມເສຍຫາຍທາງດ້ານຊີວິດການເປັນຢູ່ ແລະ ການໃຫ້ບໍລິການ, ສັງຄົມ ແລະ ເສດຖະກິດຖົດຖອຍ, ຜົນກະທົບຕໍ່ສະພາບແວດລ້ອມ

A dangerous phenomenon, substance, human activity or condition that may cause loss of life, injury or other health impacts, property damage, loss of livelihoods and services, social and economic disruption, or environmental damage.

Heatwave: ຄື້ນຄວາມຮ້ອນ

ໝາຍເຖິງຊ່ວງໄລຍະຮ້ອນຜິດປົກກະຕິຂອງສະພາບອາກາດ. ຄື້ນຄວາມຮ້ອນແລະຄວາມຮ້ອນ ແມ່ນມີຄວາມໝາຍທີ່ແຕກຕ່າງກັນ ແລະ ມີຫຼາຍກໍລະນີມີຄວາມໝາຍຊໍ້າຊ້ອນກັນ

A period of abnormally hot weather. Heatwaves and warm spells have various and, in some cases, overlapping definitions.

Hydrological Cycle (also referred to as water cycle): ວັດທະຈັກຂອງອຸທົກກະສາດ (ເອີ້ນວ່າວັດທະຈັກ ນໍ້າ)

ວັດທະຈັກຂອງນໍ້າ ແມ່ນການລະເຫີຍອາຍນໍ້າຈາກມະຫາສະໝຸດ ແລະ ພື້ນຜິວດິນ ໄປສູ່ຊັ້ນບັນຍາກາດຂອງໂລກ ແລ້ວລະເຫີຍເປັນອາຍນໍ້າ, ອາຍນໍ້າໃນຊັ້ນບັນຍາກາດໄດ້ປະຕິກິ

ລະຍາກັບຄວາມເຢັນ ແລ້ວປ່ຽນສະພາບກາຍເປັນເມກ ແລ້ວກາຍເປັນນ້ຳຝົນ ແລະ ຫິມະ ຕົກລົງມາຄືນ, ປະລິມານຝົນຈຳນວນໜຶ່ງຖືກດູດຊຶມຈາກຕົ້ນໄມ້, ພືດ, ຈຳນວນໜຶ່ງ ໄຫຼລົງເປັນນ້ຳໜ້າດິນ, ຊຶມລົງດິນ, ໄຫລຊຶມເປັນນ້ຳໃຕ້ດິນ, ແລະ ໄຫຼກັບຄືນສູ່ແມ່ນ້ຳແລ້ວໄຫຼອອກສູ່ມະຫາສະໝຸດ ແລະ ສຸດທ້າຍກັບຄືນລະເຫີຍຈາກມະຫາສະໝຸດ ແລະ ໜ້າດິນ. ບັນດາລະບົບການຕ່າງໆທີ່ກ່ຽວກັບ ວັດທະຈັກຂອງອຸທົກກະສາດນັ້ນ ເອີ້ນວ່າ ລະບົບອຸທົກກະສາດ (ວັດທະຈັກນ້ຳ).

The cycle in which water evaporates from the oceans and the land surface, is carried over the Earth in atmospheric circulation as water vapor, condenses to form clouds, precipitates again as rain or snow, is intercepted by trees and vegetation, provides runoff on the land surface, infiltrates into soils, recharges groundwater, and/or discharges into streams and flows out into the oceans, and ultimately evaporates again from the oceans or land surface. The various systems involved in the hydrological cycle are usually referred to as hydrological systems.

I

Impacts: ຜົນກະທົບ

ຜົນກະທົບຕໍ່ກັບລະບົບທຳມະຊາດ ແລະ ມະນຸດ. ຄຳສັບທີ່ວ່າ ຜົນກະທົບໃນທີ່ນີ້ ໝາຍເຖິງຜົນກະທົບຈາກໄພທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ທີ່ມີຕໍ່ລະບົບທຳມະຊາດ ແລະ ກາຍຍະພາບຂອງມະນຸດ.

Effects on natural and human systems. In this report, the term 'impacts' is used to refer to the effects on natural and human systems of physical events, of disasters, and of climate change.

Indirect Emissions: ການປ່ອຍທາດອາຍເຮືອນແກ້ວໂດຍທາງອອ້ມ

ໝາຍເຖິງ ການປ່ອຍທາດອາຍເຮືອນແກ້ວທີ່ບໍ່ໄດ້ເກີດຂຶ້ນຈາກການດຳເນີນການຂອງອົງ

ກອນ ແຕ່ເກີດຂຶ້ນຈາກກິດຈະກໍາອົງການອື່ນ ເຊັ່ນ: ການປ່ອຍທາດອາຍເຮືອນແກ້ວຈາກການນໍາເຂົ້າໄຟຟ້າ, ພະລັງງານຄວາມຮ້ອນ, ພະລັງງານອາຍນໍ້າ

Emissions that are a consequence of the operations of the reporting company, but occur from sources owned or controlled by another company, e.g., as a consequence of the import of electricity, heat, or steam.

Intensity Ratios: ອັດຕາສ່ວນຄວາມໜາແໜ້ນ

ອັດຕາສ່ວນ ທີ່ສະແດງຜົນກະທົບຂອງທາດອາຍເຮືອນແກ້ວ ຕໍ່ຫົວໜ່ວຍ ຂອງກິດຈະກໍາທາງກາຍະພາບ ຫຼື ຫົວໜ່ວຍ ຂອງມູນຄ່າດ້ານເສດຖະກິດເຊັ່ນ: ຫົວໜ່ວຍໂຕນຂອງການປ່ອຍກາກບອນໄດອອກໄຊ ຕໍ່ການຜະລິດໄຟຟ້າ. ອັດຕາສ່ວນຄວາມເຂັ້ມຂຸ້ນຂອງ ການປ່ອຍ ແມ່ນດ້ານກົງກັນຂ້າມຂອງອັດຕາສ່ວນ ຜົນຜະລິດ ຫຼື ຄວາມມີປະສິດທິພາບ.

Ratios that express GHG impact per unit of physical activity or unit of economic value (e.g., tons of CO_2 emissions per electricity generated). Intensity ratios are the inverse of productivity/efficiency ratios.

Intergovernmental Panel on Climate Change (IPCC): ຄະນະກໍາມະການສາກົນ ກ່ຽວກັບ ການປ່ຽນ ແປງດິນຟ້າອາກາດ

ແມ່ນແຜນງານຮ່ວມດ້ານສິ່ງແວດລ້ອມ ຂອງສະຫະປະຊາຊາດ / ອົງການອຸຕຸນິຍົມໂລກ ເພື່ອຕອບສະໜອງຂໍ້ມູນທາງດ້ານວິທະຍາສາດ ແລະ ເຕັກນິກທາງວິຊາການ ໃຫ້ແກ່ກອບວຽກຂອງສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ.

A joint UN Environment Programme/World Meteorological Organisation body responsible for providing the scientific and technical foundations for the UN Framework Convention on Climate Change.

Inventory: ການສໍາຫຼວດ

ລາຍການປະລິມານ ແຫຼ່ງປ່ອຍທາດອາຍເຮືອນແກ້ວຂອງອົງກອນໜຶ່ງ

A quantified list of an organization’s GHG emissions and sources.

Inventory Boundary: ຂອບເຂດການສຳຫຼວດ

ໝາຍເຖິງ ຂອບເຂດການຈຳລອງທີ່ລວມເອົາ ການປ່ອຍທາດອາຍເຮືອນແກ້ວໂດຍກົງ ແລະ ທາງອ້ອມ ເຂົ້າໃນຂະບວນການສຳຫຼວດ, ຜົນການສຳຫຼວດ ແມ່ນມາຈາກການຄັດເລືອກຈາກ ຂອບເຂດບໍລິເວນຂອງອົງກອນ ແລະ ການດຳເນີນການ.

An imaginary line that encompasses the direct and indirect emissions included in the inventory. It results from the chosen organizational and operational boundaries.

Inventory Quality: ຄຸນນະພາບຂອງການສຳຫຼວດ

ໝາຍເຖິງ ຕ້ອງຮັບປະກັນໃຫ້ການສຳຫຼວດທາດອາຍເຮືອນແກ້ວ ມີຄວາມເຊື່ອຖືໄດ້ຄວາມ ຖືກຕ້ອງ ແລະ ຄວາມສົມເຫດສົມຜົນ ຂອງການຄຳນວນການປ່ອຍທາດອາຍເຮືອນແກ້ວ ຂອງອົງກອນ

The extent to which an inventory provides a faithful, true, and fair account of an organization's GHG emissions.

J

Joint Implementation (JI): ການຈັດຕັ້ງປະຕິບັດຮ່ວມກັນພາຍໃຕ້ອະນຸສັນຍາກຽວໂຕ

ໝາຍເຖິງ ສິ່ງອຳນວຍຄວາມສະດວກ ທີ່ກຳນົດຂຶ້ນພາຍໃຕ້ອະນຸສັນຍາກຽວໂຕ ທີ່ອະນຸຍາດໃຫ້ປະເທດພາຄີ (ບັນຊີ I) ຕອບສະໜອງເງິນທຶນ ຫຼື ດຳເນີນໂຄງການຫຼຸດຜ່ອນການປ່ອຍໃນປະເທດພາຄີ ບັນຊີ I. ປະເທດທີ່ໃຫ້ການສະໜັບສະໜູນດ້ານເງິນທຶນ ສາມາດດຳເນີນການຫຼຸດຜ່ອນ ການປ່ອຍທີ່ປະເທດຕົນໄດ້ສ້າງຂຶ້ນ ເພື່ອບັນລຸເປົ້າໝາຍການປ່ອຍພາຍໃຕ້ສົນທິສັນຍາກຽວໂຕ (ກໍ່ຄືການຕ້ານໂຄງການ ທີ່ບໍ່ອະນຸຍາດໃຫ້ປະເທດທີ່ຢູ່ໃນບັນຊີ I ຂອງກົນໄກພັດທະນາທີ່ສະອາດ).

A facility created under the Kyoto Protocol, which allows an Annex I party to fund and/or run a project to reduce emissions in another Annex I party. The funding country can then apply the emissions reductions generated to help it to meet its own emissions target under the Kyoto Protocol (as opposed to projects located in non-Annex I countries as in the CDM).

Joint Crediting Mechanism (JCM): ກົນໄກການຮ່ວມມືສອງຝ່າຍໃນການຫຼຸດຜ່ອນທາດອາຍເຮືອນແກ້ວ

ໝາຍເຖິງ ກົນໄກເພື່ອອຳນວຍຄວາມສະດວກ ໃນການນຳໃຊ້ເຕັກໂນໂລຊີ, ຜະລິດຕະພັນ ການບໍລິການ ແລະ ການດຳເນີນການດ້ານໂຄງລ່າງພື້ນຖານ ເພື່ອຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ປະກອບສ່ວນເຂົ້າໃນການພັດທະ ນາທີ່ຍືນຍົງຂອງບັນດາປະເທດກຳລັງພັດທະນາ.

The Joint Crediting Mechanism (JCM) facilitates diffusion of leading low carbon technologies, products, systems, services, and infrastructure as well as implementation of mitigation actions, and contributes to sustainable development of developing countries.

K

Kyoto Protocol: ອະນຸສັນຍາກຽວໂຕ ວ່າດ້ວຍ ການດ້ວຍການຄວບຄຸມການປ່ອຍທາດອາຍເຮືອນແກ້ວ

ໝາຍເຖິງການຄວບຄຸມການປ່ອຍທາດອາຍເຮືອນແກ້ວພາຍໃຕ້ສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ທີ່ເປັນເຄື່ອງມືທາງດ້ານນິຕິກຳ ກຳນົດພັນທະ ສຳລັບບັນດາປະເທດອຸດສາຫະກຳ ກໍຄືບັນດາປະເທດພັດທະນາ ຕ້ອງຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃຫ້ໄດ້ໂດຍສະເລັ່ຍ 5,2% ໃນຊ່ວງປີ 2008-2012 ທຽບໃສ່ ລະດັບການປ່ອຍທາດອາຍເຮືອນແກ້ວຂອງປະເທດຕົນ ໃນປີ 1990. ອະນຸສັນຍາດັ່ງກ່າວ ໄດ້ຜ່ານການຮັບຮອງຢູ່ກອງປະຊຸມລັດພາຄີ ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ຄັ້ງທີ 3 ໃນເດືອນ ທັນວາ ປີ 1997 ແລະ ໄດ້ມີຜົນບັງຄັບໃຊ້ ໃນວັນທີ 16 ເດືອນ ກຸມພາປີ 2005;

Kyoto Protocol (KP) means the Protocol to the UNFCCC, which creates legally binding obligations for industrial countries to reduce their GHG emissions by a target of 5.2% below 1990 levels by 2008-2012. The Kyoto Protocol was adopted at the 3rd Conference of Parties in December 1997 and entered into force on 16 February 2005.

Kyoto Mechanisms: ກົນໄກຈັດຕັ້ງປະຕິບັດພາຍໃຕ້ອະນຸສັນຍາກຽວໂຕ

ສາມກົນໄກສ້າງຂຶ້ນພາຍໃຕ້ອະນຸສັນຍາກຽວໂຕເພື່ອເພີ່ມຄວາມຢືດຢຸ່ນແລະຫຼຸດຜ່ອນຄ່າໃຊ້ຈ່າຍໃນການຫລຸດຜ່ອນທາດອາຍເຮືອນແກ້ວ ເຊັ່ນ: ກົນໄກການພັດທະນາສະອາດ,ກົນໄກການຊື້-ຂາຍ ກາກບອນເຄຣດິດ ແລະ ກົນໄກການດຳເນີນການຮ່ວມ.

Three procedures established under the Kyoto Protocol to increase the flexibility and reduce the costs of making greenhouse-gas emissions cuts. They are the Clean Development Mechanism, Emissions Trading and Joint Implementation.

L

Landslide: ດິນເຈື່ອນ

ໝາຍເຖິງ ມວນສານຂອງດິນລົງມາຕາມເປີ້ນພູ ດ້ວຍອິດທິພົນແຮງໂນ້ມຖ່ວງຂອງໂລກ, ໂດຍປົກກະຕິແລ້ວ ນ້ຳມີສ່ວນກ່ຽວຂ້ອງເຮັດໃຫ້ດິນເຈື່ອນ ໃນເມື່ອມວນສານຂອງດິນອີ່ມຕົວດ້ວຍນ້ຳ. ການເຄື່ອນຕົວຂອງມວນສານດິນ, ຫີນ ຫຼື ສິ່ງເສດເຫຼືອ ທີ່ຢູ່ບ່ອນຄ້ອຍຊັນ ສາມາດເກີດດິນເຈື່ອນຂຶ້ນແບບກະທັນຫັນ ຫຼື ອາດເຄື່ອນຕົວເທື່ອລະນ້ອຍ.

A mass of material that has moved downhill by gravity, often assisted by water when the material is saturated. The movement of soil, rock, or debris down a slope can occur rapidly, or may involve slow, gradual failure.

Land surface Air Temperature: ອຸນຫະພູມອາກາດເທິງໜ້າດິນ

ໝາຍເຖິງ ອຸນຫະພູມອາກາດທີ່ວັດໄດ້ຈາກພື້ນທີ່ມີອາກາດຖ່າຍເທດີ ສູງຈາກໜ້າດິນ 1.5 ຫາ 2 ແມັດ

The air temperature as measured in well-ventilated screens over land at 1.5 to 2 m above the ground.

Land Use and Land Use Change: ການນຳໃຊ້ທີ່ດິນ ແລະ ການປ່ຽນແປງການນຳໃຊ້ທີ່ດິນ

ໝາຍເຖິງຂະບວນການວາງແຜນ, ກິດຈະກຳ ແລະ ປັດໃຈຕ່າງໆ ທັງໝົດ ທີ່ດຳເນີນສະເພາະປະເພດທີ່ດິນ (ກິດຈະກຳຂອງມະນຸດ). ຄຳສັບການນຳໃຊ້ທີ່ດິນ ຍັງຖືກນຳໄປໃຊ້ໃນເປົ້າໝາຍທາງດ້ານເສດຖະກິດ-ສັງຄົມ ເຊັ່ນ: ການປູກຫຍ້າລ້ຽງສັດ, ການຂຸດຄົ້ນໄມ້ ແລະ ການອະນຸລັກ. ການປ່ຽນແປງການນຳໃຊ້ທີ່ດິນໝາຍເຖິງ ການປ່ຽນແປງການນຳໃຊ້ ຫຼື ການຄຸ້ມຄອງການນຳໃຊ້ດິນ ທີ່ອາດຈະນຳໄປສູ່ການປ່ຽນແປງການປົກຫຸ້ມທີ່ດິນ. ການປ່ຽນແປງການປົກຫຸ້ມທີ່ດິນ ແລະ ການປ່ຽນແປງການນຳໃຊ້ທີ່ດິນ ອາດຈະສົ່ງຜົນທົບຕໍ່ກັບການສະທ້ອນກັບຂອງພະລັງງານແສງອາທິດ, ການລະເຫີຍ, ແຫຼ່ງຊຶມຊັບທາດອາຍເຮືອນແກ້ວ ຫຼື ຕໍ່ລະບົບພູມອາກາດ ແລະ ອາດສົ່ງຜົນກະທົບຕໍ່ການແຜ່ລັງສີຄວາມ ຮ້ອນ ຫຼື ຜົນກະທົບຕໍ່ສະພາບອາກາດໃນລະດັບປະເທດ ຫຼື ໃນລະດັບໂລກ.

Land use refers to the total of arrangements, activities, and inputs undertaken in a certain land cover type (a set of human actions). The term land use is also used in the sense of the social and economic purposes for which land is managed (e.g., grazing, timber extraction, and conservation). Land use change refers to a change in the use or management of land by humans, which may lead to a change in land cover. Land cover and land use change may have an impact on the surface albedo, evapotranspiration, sources and sinks of greenhouse gases, or other properties of the climate system and may thus have radiative forcing and/or other impacts on climate, locally or globally.

Land Use, Land-Use Change and Forestry (LULUCF): ການນຳໃຊ້ທີ່ດິນ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້

ໝາຍເຖິງ ການຈຳແນກປະເພດຂອງກິດຈະກຳ ທີ່ສາມາດປະກອບສ່ວນເຂົ້າໃນການປ່ອຍ ແລະ ກຳຈັດການປ່ອຍທາດອາຍເຮືອນແກ້ວ. ສ່ວນປະເພດຕົ້ນຕໍໃນຂະແໜງການອື່ນມີພະລັງງານທີ່ພົວພັນເຖິງການປ່ອຍອາຍທາດອາຍເຮືອນແກ້ວ (ມີການຜະລິດ ແລະ ການນຳໃຊ້), ການກະສິກຳ ແລະ ກິດຈະກຳທີ່ກ່ຽວຂ້ອງກັບຂີ້ເຫຍື້ອ.

This is an identified category of activities that can contribute to both greenhouse gas emissions and emissions removals. The other main categories are energy-related emissions (both production and consumption), agriculture and waste-related activities.

Least Developed Countries (LDCs): ບັນດາປະເທດດ້ອຍພັດທະນາ

ໝາຍເຖິງ ຕົວຊີ້ວັດທີ່ຄະນະກຳມະການດ້ານເສດຖະກິດ ແລະ ສັງຄົມ ໃຊ້ເພື່ອກຳນົດສະຖານະພາບປະເທດດ້ອຍພັດທະນາ ຫຼື ປະເທດທີ່ທຸກຍາກທີ່ສຸດຂອງໂລກ ປະກອບດ້ວຍລາຍຮັບຕ່ຳ, ຄຸນນະພາບຂອງຊັບພະຍາກອນມະນຸດ ແລະ ຄວາມອ່ອນໄຫວດ້ານເສດຖະກິດ ແລະ ສັງຄົມ. ປັດຈຸບັນມີ 48 ປະເທດ ທີ່ອົງການສະຫະປະຊາຊາດ ກຳນົດໃນລາຍການ ປະເທດດ້ອຍພັດທະນາ.

The world's poorest countries. The criteria currently used by the Economic and Social Council (ECOSOC) for designation as an LDC include low income, human resource weakness and economic vulnerability. Currently 48 countries have been designated by the UN General Assembly as LDCs.

Least Developed Country Fund (LDCF): ກອງທຶນສຳລັບປະເທດດ້ອຍພັດທະນາ

ໝາຍເຖິງ ກອງທຶນໜຶ່ງທີ່ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອສະໜັບສະໜູນໃນການຈັດຕັ້ງປະຕິບັດແຜນງານ ເພື່ອຊ່ວຍເຫຼືອ ບັນດາປະເທດດ້ອຍພັດທະນາ ໃນການດຳເນີນການກະກຽມ ແລະ ຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດ ໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (NAPAs). ກອງທຶນສິ່ງແວດລ້ອມໂລກ ໃນນາມໜ່ວຍງານໃນການຈັດຕັ້ງປະຕິບັດກົນໄກການເງິນ ຂອງສົນທິສັນຍາ ແລະ ຖືກມອບໝາຍໜ້າທີໃຫ້ດຳເນີນການຈັດຕັ້ງປະຕິບັດຂອງກອງທຶນດັ່ງກ່າວ.

The LDCF is a fund established to support a work programme to assist Least Developed Country Parties to carry out, inter alia, the preparation and implementation of national adaptation programmes of action (NAPAs). The Global Environment Facility, as the entity that operates the financial mechanism of the Convention, has been entrusted to operate this fund.

Local Disaster Risk Management (LDRM): ການຄຸ້ມຄອງຄວາມສ່ຽງໄພພິບັດໃນຂັ້ນທ້ອງຖິ່ນ

ໝາຍເຖິງ ຂະບວນການຜູ້ທີມີສ່ວນຮ່ວມໃນລະດັບທ້ອງຖິ່ນ (ພົນລະເມືອງ, ຊຸມຊົນ, ລັດ

ຖະບານ, ອົງກອນທີ່ບໍ່ຫວັງຜົນກຳໄລ, ສະຖາບັນ ແລະ ບັນດາທຸລະກິດຕ່າງໆ) ໃຫ້ການສະໜັບສະໜູນ ແລະ ເປັນເຈົ້າການໃນການກຳນົດ, ວິເຄາະ, ປະເມີນຜົນ, ຕິດຕາມກວດກາ ຈັດການຄວາມສ່ຽງໄພພິບັດ ແລະ ໄພພິບັດຕ່າງໆ ໂດຍຜ່ານມາດຕະການຕ່າງໆ ເຊິ່ງຫລຸດຜ່ອນ ຫຼື ປ້ອງກັນໄພອັນຕະລາຍລ່ວງໜ້າ, ການປະເຊີນໄພອັນຕະລາຍ, ຫຼື ຄວາມບອບບາງ, ການຖ່າຍໂອນຄວາມສ່ຽງ, ປັບປຸງແຜນການຕອບໂຕ້ ແລະ ຟື້ນຟູ ແລະ ສົ່ງເສີມການເພີ່ມຄວາມອາດສາມາດໃຫ້ໃນການຮັບມື. ໂດຍທົ່ວໄປແລ້ວ ການຄຸ້ມຄອງຄວາມສ່ຽງໄພພິບັດທ້ອງຖິ່ນ ຕ້ອງການການປະສານງານ ພ້ອມດ້ວຍການສະໜັບສະໜູນຈາກພາຍນອກ ຂອງຜູ້ມີສ່ວນຮ່ວມໃນລະດັບພາກພື້ນ, ລະດັບຊາດ, ແລະ ໃນລະດັບສາກົນ ການຄຸ້ມຄອງຄວາມສ່ຽງໄພພິບັດ ໂດຍຊຸມຊົນເປັນຖານ ເປັນວຽກສ່ວນໜຶ່ງ ຂອງການຄຸ້ມຄອງຄວາມສ່ຽງໄພພິບັດທ້ອງຖິ່ນ ບ່ອນທີ່ມີຊຸມຊົນ ແລະ ບັນດາອົງກອນ ເປັນສູນກາງຂອງການຕັດສິນໃຈ.

The process in which local actors (citizens, communities, government, non-profit organizations, institutions, and businesses) engage in and have ownership of the identification, analysis, evaluation, monitoring, and treatment of disaster risk and disasters, through measures that reduce or anticipate hazard, exposure, or vulnerability; transfer risk; improve disaster response and recovery; and promote an overall increase in capacities. LDRM normally requires coordination with and support from external actors at the regional, national, or international levels. Community-based disaster risk management is a subset of LDRM where community members and organizations are in the center of decisionmaking.

Loss and Damage: ຄວາມສູນເສຍ ແລະ ຄວາມເສຍຫາຍຈາກການປ່ຽນແປງດິນຟ້າອາກາດ

ໝາຍເຖິງ ກອງປະຊຸມລັດພາຄີສົນທິສັນຍາສະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ຄັ້ງທີ່ 16 (COP) ທີ່ເມືອງ ຄັນຄູນ ປະເທດເມກຊິໂກ ປີ 2010 ເຫັນດີໃຫ້ບັນດາປະເທດຕ່າງໆໄດ້ສ້າງແຜນງານເພື່ອແກ້ໄຂ ຄວາມສູນເສຍ ແລະ ຄວາມເສຍຫາຍ ຈາກຜົນກະທົບຂອງສະພາບການປ່ຽນແປງດິນຟ້າອາກາດ ຢູ່ໃນດາປະເທດກຳລັງພັດທະນາ ທີ່ມີຄວາມບອບບາງຕໍ່ກັບຄວາມຮຸນແຮງຂອງການປ່ຽນແປງດິນຟ້າອາກາດ.

At COP 16 in Cancun in 2010, Governments established a work programme in order to consider approaches to address loss and damage associated with climate change impacts in developing countries that are particularly vulnerable to the adverse effects of climate change as part of the Cancun Adaptation Framework.

M

Mainstreaming (climate change): ການເຊື່ອມສານການປ່ຽນແປງດິນຟ້າອາກາດ

ໝາຍເຖິງ ຜົນກະທົບທີ່ອາດເກີດຂຶ້ນຈາກການປ່ຽນແປງດິນຟ້າອາກາດ ແມ່ນໄດ້ຮັບການພິຈາລະນາ ແລະ ມີມາດຕະການ ການປັບຕົວທີ່ເໝາະສົມ ໃນການເຊື່ອມສານການປະຕິບັດແຜນງານກິດຈະກຳຂອງໂຄງການຢ່າງຕໍ່ເນື່ອງ.

The potential impacts of climate change are considered and appropriate adaptation measures are integrated as normal practice within ongoing programme activities.

Maladaptation: ການປັບຕົວທີ່ບໍ່ມີປະສິດທິຜົນ

ໝາຍເຖິງ ທຸກການປ່ຽນແປງທີ່ເກີດຈາກລະບົບທຳມະຊາດ ຫຼື ມະນຸດ ຊຶ່ງເປັນການເພີ່ມຂຶ້ນຂອງຄວາມບອບບາງ ຕໍ່ຜົນກະທົບຈາກພູມອາກາດ ຊຶ່ງແມ່ນການປັບຕົວທີ່ບໍ່ປະສົບຜົນສຳເລັດ ເພື່ອຫຼຸດຜ່ອນຄວາມບອບບາງ ແຕ່ເປັນການເພີ່ມທະວີຄວາມບອບບາງຂຶ້ນຕື່ມ.

Any changes in natural or human systems that inadvertently increase vulnerability to climatic stimuli; an adaptation that does not succeed in reducing vulnerability but increases it instead.

Mitigation: ການຫຼຸດຜ່ອນທາດອາຍເຮືອນແກ້ວ

ການຫຼຸດຜ່ອນທາດອາຍເຮືອນແກ້ວ ແມ່ນການດຳເນີນຂະບວນການ ກ່ຽວກັບ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ເພີ່ມແຫຼ່ງຊຶມຊັບທາດອາຍກາກບອນ.

Mitigation means the process of reducing greenhouse gas emissions and enhancing carbon sinks.

Mobile Combustion: ການເຜົາໄໝ້ນ້ຳມັນເຊື້ອໄຟຈາກຂະແໜງການຂົນສົ່ງ

ການເຜົາໄໝ້ນ້ຳມັນເຊື້ອໄຟ ຈາກຍານພາຫະນະ ໃນການຂົນສົ່ງເຊັ່ນ: ລົດ, ລົດບັນທຸກ, ລົດໄຟ, ຍົນ, ເຮືອ ແລະ ອື່ນໆ.

Burning of fuels by transportation devices such as cars, trucks, trains, airplanes, ships, etc.

Monsoon: ລົມມໍລະສຸມເຂດຮ້ອນ

ໝາຍເຖິງ ການປ່ຽນແປງທາງດ້ານລະດູການຂອງເຂດອາກາດຮ້ອນ ແລະ ຢູ່ໃກ້ເຂດຮ້ອນ ມີທັງລົມໜ້າດິນ ແລະ ຝົນຕົກ ເນື່ອງມາຈາກຄວາມຮ້ອນທີ່ແຕກຕ່າງກັນລະຫວ່າງ ຂະໜາດເນື້ອທີ່ຂອງທະວີບ ແລະ ມະຫາສະໝຸດ. ຝົນຕົກຕາມລະດູການ ແມ່ນເກີດຂຶ້ນຢູ່ຕາມພື້ນຜິວ ໃນຊ່ວງອາກາດອົບອຸ່ນ.

A monsoon is a tropical and subtropical seasonal reversal in both the surface winds and associated precipitation, caused by differential heating between a continental-scale land mass and the adjacent ocean. Monsoon rains occur mainly over land in summer.

Measurement, Reporting and Verification (MRV): ການວັດແທກ, ການລາຍງານ ແລະ ຢັ້ງຢືນ

ໝາຍເຖິງ ການເກັບກຳຂໍ້ມູນ ແລະ ລາຍລະອຽດລະດັບຊາດ (ລະດັບໂຄງການ) ແລະ ດຳເນີນການຄິດໄລ່ຫາຂໍ້ມູນສຳຄັນ ສຳລັບການປະເມີນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຫຼື ການເພີ່ມປະລິມານການເກັບສະສົມຂອງທາດກາກບອນ ແລະ ພົວພັນກັບຄວາມບໍ່ແນ່ນອນ ທີ່ບໍ່ສອດຄ່ອງກັບລະດັບຂອງເສັ້ນທຽບຖານ.

The collection of data and information at a national (or sub-national) level, and performance of the necessary calculations for estimating emission reductions or enhancement of carbon stocks and associated uncertainties against a reference level.

N

Natural Disaster: ໄພພິບັດທຳມະຊາດ

ໄພພິບັດທຳມະຊາດ ໝາຍເຖິງ ເຫດການ, ປະກົດການ ແລະ ການປ່ຽນແປງທາງທຳມະຊາດ ເປັນຕົ້ນ ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ພາຍຸ, ໄພໜາວ, ແຜ່ນດິນໄຫວ, ດິນເຈື່ອນ, ສັດຕູພືດ, ພະຍາດລະບາດ.

Natural Disaster refers to a natural event, phenomenon or change, such as flood, drought, storms, frost, earthquake, landslide, outbreak of pest and disease.

National Adaptation Programmes of Action (NAPAs): ແຜນດຳເນີນງານແຫ່ງຊາດ ໃນການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ

ແມ່ນເອກະສານ ຊຶ່ງກະກຽມໂດຍ ປະເທດດ້ອຍພັດທະນາ (LDCs) ເພື່ອກຳນົດ ຄວາມຕ້ອງການ ຢ່າງຮີບດ່ວນ ສຳລັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

Documents prepared by least developed countries (LDCs) identifying urgent and immediate needs for adapting to climate change.

National Communication on Climate Change : ບົດສື່ສານແຫ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດ

ແມ່ນເອກະສານ ນຳສົ່ງພາຍໃຕ້ອະນຸສັນຍາ (ສົນທິສັນຍາ) ຂອງປະເທດສະມາຊິກ ເພື່ອແຈ້ງໃຫ້ຮັບຊາບ ການຈັດຕັ້ງປະຕິບັດກິດຈະກຳຂອງລັດພາຄີ ໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

A document submitted in accordance with the Convention (and the Protocol) by which a Party informs other Parties of activities undertaken to address climate change.

Nationally Appropriate Mitigation Actions (NAMAs): ແຜນດຳເນີນງານການຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວຕາມສະພາບເງື່ອນໄຂຂອງປະເທດ

ໝາຍເຖິງ ການດຳເນີນການແບບສະໝັກໃຈ ຫຼື ຕາມໜ້າທີ່ຂອງປະເທດທີ່ກຳລັງພັດທະນາ ເພື່ອຫຼຸດຜ່ອນການປ່ອຍທາດກາກບອນ ທີ່ສອດຄ່ອງກັບສະພາບເສດຖະກິດ, ສິ່ງແວດລ້ອມ ສັງຄົມ ແລະ ການເມືອງ.

Voluntary or mandatory action by a developing country to reduce its carbon emissions in line with its economic, environmental, social and political context.

Native or Natural Forests: ປ່າໄມ້ດັ້ງເດີມ ຫຼື ປ່າໄມ້ທຳມະຊາດ

ໝາຍເຖິງ ປ່າໄມ້ທີ່ປະກອບໄປດ້ວຍຊະນິດໄມ້ພື້ນເມືອງທີ່ບໍ່ໄດ້ເກີດໂດຍການປູກ ຫຼື ການຫວ່ານແກ່ນໄມ້ ໃນຂະບວນການປູກປ່າ ຫຼື ການຟື້ນຟູປ່າຄືນໃໝ່.

A forest composed of indigenous trees not established by planting or/and seeding in the process of afforestation or reforestation.

Natural Regeneration: ການຟື້ນຟູປ່າໂດຍທຳມະຊາດ

ໝາຍເຖິງ ການຟື້ນໂຕຂອງປ່າໄມ້ທີ່ຖືກບຸກລຸກໃນໄລຍະທີ່ຜ່ານມາ, ໂດຍບໍ່ມີການແຊກແຊງຂອງມະນຸດ. ຜົນຕາມມາແມ່ນການເພີ່ມບົດບາດຂອງລະບົບນິເວດວິທະຍາ, ຄວາມຫຼາກຫຼາຍຂອງຊະນິດພັນພືດ ແລະ ມີໂຄງສ້າງທີ່ສະຫຼັບຊັບຊ້ອນ, ຖິ່ນທີ່ຢູ່ອາໃສຂອງພືດສັດ ແລະ ອື່ນໆ.

The recovery of a forest following disturbance, in the absence of human intervention. Resulting in increasing ecosystem functionality, vegetation species diversity and structural complexity, habitat availability etc.

National Designated Authority(NDA): ຈຸດປະສານງານແຫ່ງຊາດ ສຳລັບກອງທຶນ GCF

ໝາຍເຖິງໜ່ວຍງານຫຼືອົງການທີ່ມີໜ້າທີ່ຫຼັກໃນການຕິດຕໍ່ສື່ສານ ກັບກອງເລຂາຂອງ GCF ໃນການຈັດການກິດຈະກຳ ພາຍໃຕ້ການສະໜັບສະໜູນ ຂອງກອງທຶນ GCF ໂດຍສະໜັບສະໜູນ ໃຫ້ເກີດກິດຈະກຳດ້ານການປັບຕົວ ແລະ ການຫຼູດຜ່ອນການປ່ອຍອາຍເຮືອນ

ແກ້ວ ຕາມຄວາມຕ້ອງການຂອງປະເທດ

A core interface and the main point of communication between a country and the GCF. The NDA seeks to ensure that activities supported by the GCF align with strategic national objectives and priorities, and help advance ambitious action on adaptation and mitigation in line with national needs. A key role of NDAs is to provide letters of nomination to direct access entities.

National Determined Contributions (NDC): ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ

ອີງຕາມມາດຕາ 4 ວັກທີ 2 ຂອງສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ: ແຕ່ລະລັດພາຄີ ຕ້ອງມີການກະກຽມ, ລາຍງານ ແລະ ປັບປຸງ ແຜນງານແຫ່ງຊາດ ໃນການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ ເພື່ອໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້. ບັນດາລັດພາຄີຈະຕ້ອງນຳໃຊ້ມາດຕະການພາຍໃນປະເທດຂອງຕົນ ໃນການຫລຸດຜ່ອນອາຍເຮືອນແກ້ວ ເພື່ອບັນລຸຈຸດປະສົງຂອງການປະກອບສ່ວນດັ່ງກ່າວ.

According to Article 4 paragraph 2 of the Paris Agreement, each Party shall prepare, communicate and maintain successive nationally determined contributions (NDCs) that it intends to achieve. Parties shall pursue domestic mitigation measures, with the aim of achieving the objectives of such contributions.

Non-Party: ປະເທດບໍ່ໄດ້ເຂົ້າເປັນພາຄີສັນຍາ

ປະເທດທີ່ບໍ່ໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາ ແຕ່ເຂົ້າຮ່ວມກອງປະຊຸມໃນຖານະເປັນຜູ້ສັງເກດການ

A state that has not ratified the Convention but attends meetings as an observer.

P

Paris Agreement: ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ

ສັນຍາປາຣີ (PA) ຢູ່ພາຍໃຕ້ ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UN-FCCC) ໄດ້ຖືກຮັບຮອງໃນເດືອນ ທັນວາ ປີ 2015 ນະຄອນຫຼວງ ປາຣີ, ປະເທດຝຣັ່ງ ຢູ່ກອງປະຊຸມລັດພາຄີສົນທິສັນຍາ ຄັ້ງທີ 21. ສັນຍາດັ່ງກ່າວ ໄດ້ຮັບຮອງ ໂດຍ 196 ປະເທດລັດພາຄີ ຂອງສົນທິສັນຍາ ແລະ ມີຜົນບັງຄັບໃຊ້ ໃນວັນ 4 ພະຈິກ 2016 ແລະ ຮອດເດືອນ ພຶດສະພາ 2018 ມີຜູ້ລົງນາມ 195 ປະທດ ແລະ ໄດ້ໃຫ້ສັດຕະຍາບັນ 177 ປະເທດລັດພາຄີ. ເປົ້າໝາຍຂອງສັນຍາ ປາຣີ ແມ່ນຮັກສາການເພີ່ມຂຶ້ນອຸນນຫະພູມ ສະເລ່ຍຂອງໂລກ ໃຫ້ຕໍ່າກວ່າ 2 ອົງສາເຊ ຫຼື ດີທີ່ສຸດ ແມ່ນຈໍາກັດບໍ່ໃຫ້ເກີນ 1.5 ອົງສາເຊ ທຽບໃສ່ຍຸກປະຕິວັດອຸດສາຫະກໍາ ຊຶ່ງຮັບຮູ້ວ່າ ການຮັກສາການເພີ່ມຂຶ້ນອຸນຫະພູມ ສະເລ່ຍໃນລະດັບດັ່ງກ່າວ ຈະເປັນສ່ວນສໍາຄັນໃນການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບ ຈາກການປ່ຽນແປງດິນຟ້າອາກາດ. ນອກຈາກນັ້ນ, ສັນຍາ ມີຈຸດປະສົງ ເພື່ອສ້າງຄວາມ ສາມາດຂອງບັນດາປະເທດໃນການຮັບມືກັບຜົນກະທົບ ຈາກການປ່ຽນແປງດິນຟ້າອາກາດ.

The Paris Agreement under the United Nations Framework Convention on Climate Change (UNFCCC) was adopted on December 2015 in Paris, France, at the 21st session of the Conference of the Parties (COP) to the UNFCCC. The agreement, adopted by 196 Parties to the UNFCCC, entered into force on 4 November 2016 and as of May 2018 had 195 Signatories and was ratified by 177 Parties. One of the goals of the Paris Agreement is 'Holding the increase in the global average temperature to well below 2°C above pre-industrial levels and pursuing efforts to limit the temperature increase to 1.5°C above pre-industrial levels', recognising that this would significantly reduce the risks and impacts of climate change. Additionally, the Agreement aims to strengthen the ability of countries to deal with the impacts of climate change.

Post Disaster Recovery: ການຟື້ນຟູຫຼັງໄພພິບັດ

ການຟື້ນຟູຫຼັງໄພພິບັດ ແມ່ນການປົວແປງຊີວິດການເປັນຢູ່ຂອງຜູ້ປະສົບໄພພິບັດ ແລະ ການບູລະນະສ້ອມແປງ, ກໍ່ສ້າງໂຄງລ່າງພື້ນຖານ ທີ່ຖືກຜົນກະທົບ ແລະ/ຫຼື ໄດ້ຮັບຄວາມ

ເສຍຫາຍຈາກໄພພິບັດ ຄືນສູ່ສະພາບປົກກະຕິ ຫຼື ດີກວ່າເກົ່າ ຊຶ່ງຕ້ອງປະຕິບັດເປັນຕົ້ນ: ການປະເມີນຄວາມຕ້ອງການຫຼັງໄພພິບັດ; ການສ້າງແຜນຟື້ນຟູຫຼັງໄພພິບັດ; ການດຳເນີນການຟື້ນຟູຫຼັງໄພພິບັດ; ການຕິດຕາມກວດກາຫຼັງການຟື້ນຟູ.

Post disaster recovery is the restoration of the livelihoods of people affected by disaster, repairing and reconstructing the infra-structures affected and/or damaged by disaster to its normal condition, or better than before, in which the following actions shall be undertaken: Post disaster needs assessment; Disaster recovery planning; Disaster recovery implementation; Monitoring and Evaluating of disaster recovery.

Post Disaster Needs Assessment: ການປະເມີນຄວາມຕ້ອງການຫຼັງໄພພິບັດ

ການປະເມີນຄວາມຕ້ອງການຫຼັງໄພພິບັດ ແມ່ນການຕີລາຄາລະດັບຄວາມເສຍຫາຍ ແລະ ຄວາມຕ້ອງການ ເພື່ອປົວແປງຊີວິດການເປັນຢູ່, ບູລະນະສ້ອມແປງ ແລະ ກໍ່ສ້າງໂຄງລ່າງພື້ນຖານທີ່ໄດ້ຮັບຄວາມເສຍຫາຍຈາກໄພພິບັດຄືນໃໝ່.

The post-disaster needs assessment is to evaluate the level of damage, the needs for livelihoods restoration, and repairing and re-constructing infrastructure affected by a disaster.

Primary Effects: ຜົນກະທົບໃນເບື້ອງຕົ້ນ

ເງື່ອນໄຂ ຫຼື ກິດຈະກຳ ໃນການຫຼຸດຜ່ອນທາດອາຍເຮືອນແກ້ວໃດໜຶ່ງ (ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ, ການກັກເກັບກາກບອນ ຫຼື ການເພີ່ມທະວີການກຳຈັດທາດອາຍເຮືອນແກ້ວ) ຊຶ່ງໂຄງການມີຄວາມຕັ້ງໃຈໃນການບັນລຸຄາດໝາຍ.

The specific GHG reducing elements or activities (reducing GHG emissions, carbon storage, or enhancing GHG removals) that the project is intended to achieve.

Project Design Document of CDM: ເອກະສານໂຄງການກົນໄກການພັດທະນາສະອາດ

ໝາຍເຖິງ ເອກະສານໂຄງການ ທີ່ຜູ້ພັດທະນາໂຄງການ ໄດ້ກະກຽມ ຕາມແບບຟອມທີ່ອອກລ່າສຸດ ຕາມແວັບໄຊ ຂອງສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ເພື່ອ

ນຳສະເໜີໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາອອກໜັງສືຢັ້ງຢືນຮັບຮອງເອົາກ່ອນ ອົງກອນດຳເນີນງານສາກົນ ພິຈາລະນາຢັ້ງຢືນຄວາມຖືກຕ້ອງຄົບຖ້ວນຂອງໂຄງການ ກົນໄກການພັດທະນາສະອາດທີ່ກຳລັງສະເໜີນັ້ນເອກະສານໂຄງການດັ່ງກ່າວປະກອບດ້ວຍຂໍ້ມູນ ທີ່ຊີ້ແຈງເຖິງ: ສະພາບລວມຂອງໂຄງການ, ວິທີການກຳນົດຖານຂໍ້ມູນ, ໄລຍະເວລາລາຍຮັບສິນເຊື່ອກາກບອນ, ແຜນການ ແລະ ວິທີຕິດຕາມກວດກາໂຄງການ, ການຄິດໄລ່ການຫຼຸດລົງຂອງທາດອາຍເຮືອນແກ້ວ, ສະພາບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ຄຳເຫັນຕ່າງໆ ຕໍ່ໂຄງການກົນໄກການພັດທະນາສະອາດ ທີ່ກຳລັງສະເໜີນັ້ນ;

Project Design Document (PDD) means the project document based on the most recent format published on the website of the UNFCCC and submitted by the project proponent(s) to MONRE for approval prior to DOE validation. The PDD includes the following structure: general description of the project; description of the baseline methodology; timeline and crediting period; monitoring methodology and plan; calculation of GHG emissions by sources; and statement of environmental impacts and stakeholder comments.

Proxy Climate Indicator: ຄ່າຕົວຊີ້ບອກສະພາບພູມອາກາດ

ໝາຍເຖິງ ການບັນທຶກຂໍ້ມູນໃນທ້ອງຖິ່ນ ຊຶ່ງໄດ້ຮັບການແປຄວາມໝາຍ ໂດຍນຳໃຊ້ຫຼັກການຊີວະວິທະຍາ ແລະ ຟີຊິກ ເພື່ອເປັນການກຳນົດ ໃນການລວບລວມພູມອາກາດ ທີ່ກ່ຽວຂ້ອງກັບການຜັນປ່ຽນຕາມໄລຍະເວລາ. ຂໍ້ມູນທີ່ກ່ຽວຂ້ອງກັບພູມອາກາດ ໄດ້ນຳມາໂດຍອ້າງອີງເຖິງຂໍ້ມູນໂດຍສະເລ່ຍ. ຍົກຕົວຢ່າງ ຄ່າສະເລ່ຍລວມເອົາການວິເຄາະຝຸ່ນລະອອງ, ການບັນທຶກວົງແຫວນຕົ້ນໄມ້, ຄຸນລັກສະນະພຶດທະເລ ແລະ ຂໍ້ມູນອື່ນໆ ທີ່ໄດ້ມາຈາກແຜ່ນນ້ຳກ້ອນຂອງໂລກ. ຄຳສັບ ກ່ຽວກັບ ຄ່າສະເລ່ຍ ສາມາດນຳໃຊ້ເພື່ອອ້າງອີງ ການຄາດຄະເນໄດ້ໂດຍກົງ ຂອງສະພາບເງື່ອນໄຂໃນປະຈຸບັນ ຍົກຕົວຢ່າງ ໃນກໍລະນີ ບໍ່ມີຂໍ້ມູນການສັງເກດການ.

A proxy climate indicator is a local record that is interpreted, using physical and biophysical principles, to represent some combination of climate-related variations back in time. Climate-related data derived in this way are referred to as proxy data. Examples of proxies include pollen analysis, tree ring records, characteristics of corals, and various data derived from ice cores. The term 'proxy' can also be used to refer to indirect estimates of present-day conditions, for example, in the absence of observations.

R

Ratification: ການໃຫ້ສັດຕະຍາບັນ

ແມ່ນການຮັບຮອງແບບທາງການ ຈາກນັກການເມືອງ ຫຼື ນິຕິກຳແຫ່ງຊາດ ຂອງອະນຸສັນຍາ ສົນທິສັນຍາ ຫຼື ຂໍ້ຕົກລົງ ເພື່ອໃຫ້ປະເທດກາຍມາເປັນສະມາຊິກ. ການໃຫ້ສັດຕະຍາບັນ ແມ່ນຂະບວນການທີ່ຖືກແຍກອອກ ພາຍຫຼັງບັນດາປະເທດຕ່າງໆ ໄດ້ລົງນາມຂໍ້ຕົກລົງເຄື່ອງ ມືການໃຫ້ສັດຕະຍາບັນ ຕ້ອງໄດ້ມີການຝາກໄວ້ກັບຜູ້ຮັບຝາກ (ໃນກໍລະນີອະນຸສັນຍາ ວ່າ ດ້ວຍ ການປ່ຽນແປງດິນຟ້າອາກາດ, ເລຂາທິການໃຫຍ່ອົງການສະຫະປະຊາຊາດ) ໂດຍລິ ເລີ່ມນັບເວລາຖອຍຫຼັງ ເພື່ອໃຫ້ກາຍເປັນສະມາຊິກ (ສຳລັບກໍລະນີອະນຸສັນຍາ, ໄລຍະເວ ລາປະມານ 90 ມື້).

Formal approval, often by a Parliament or other national legislature, of a convention, protocol, or treaty, enabling a country to become a Party. Ratification is a separate process that occurs after a country has signed an agreement. The instrument of ratification must be deposited with a "depositary" (in the case of the Climate Change Convention, the UN Secretary-General) to start the countdown to becoming a Party (in the case of the Convention, the countdown is 90 days).

Radiative Forcing: ການປ່ອຍລັງສີ

ໝາຍເຖິງ ການປ່ຽນແປງຕາມແນວຕັ້ງການແຜ່ລັງສີສຸດທິ (ກຳນົດດ້ວຍວັດ ຕໍ່ຕາຕະລາງ ແມັດ; W/m^2) ໃນຊັ້ນບັນຍາກາດ ເນື່ອງຈາກການປ່ຽນແປງພາຍໃນ ແລະ ພາຍນອກ ຈາກການບັງຄັບລະບົບພູມອາກາດເຊັ່ນ ການປ່ຽນແປງຄວາມເຂັ້ມຂຸ້ນ ທາດອາຍກາກບອນ ໄດອອກໄຊ ຫຼື ພະລັງງານທີ່ໄດ້ຮັບຈາກດວງຕາເວັນ.

Radiative forcing is the change in the net vertical irradiance (expressed in Watts per square metre; W/M2) at the tropopause due to an internal or external change in the forcing of the climate system, such as a change in the concentration of (CO_2) or the output of the Sun.

Rapid Assessment: ການປະເມີນແບບເລັ່ງລັດ

ໝາຍເຖິງ ການປະເມີນແບບຮີບດ່ວນ ແລະ ບໍ່ສົມບູນແບບໂດຍອີງໃສ່ຂໍ້ມູນຈາກການຮິບໂຮມເອົາຂໍ້ມູນມືສອງ ແລະ ຂໍ້ມູນພື້ນຖານ ເຊິ່ງມັກຈະປະຕິບັດກັນຕາມພາຍຫຼັງການປະເມີນເບື້ອງຕົ້ນໃນສະພາບວິກິດການຮີບດ່ວນ ຫຼື ອາດຈະເປັນອີງປະກອບໜຶ່ງຂອງການປະເມີນຄືນໃໝ່ເນື່ອງຈາກໄລຍະເວລາສັ້ນ, ການປະເມີນຮີບດ່ວນຈະສຸມໃສ່ການເກັບຂໍ້ມູນດ້ານຄຸນນະພາບເປັນຕົ້ນຕໍ.

A quick and incomplete assessment based on a combination of secondary and primary data. Often undertaken following an initial assessment in a sudden crisis, or as a component of a reassessment. Because of the short time-frame, rapid assessments most often focus on qualitative data collection

Reducing Emissions from Deforestation and Forest Degradation (REDD): ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າເສື່ອມໂຊມ

ໝາຍເຖິງ ຄວາມຄິດລິເລີ່ມ ການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ເກີດຂຶ້ນຈາກການບຸກເບີກປ່າໄມ້, ໂດຍລວມເອົາການຫຼີກລ້ຽງການທຳລາຍປ່າເຂົ້າໃນກົນໄກຕະຫຼາດກາກບອນ. ເວົ້າແບບງ່າຍກວ່ານັ້ນ ແມ່ນການຈ່າຍຄ່າຕອບແທນສຳລັບການປົກປັກຮັກສາປ່າໄມ້.

An initiative to cut greenhouse gas emissions associated with forest clearing by the inclusion of “avoided deforestation” in carbon market mechanisms. More simply, payment in return for the active preservation of existing forests.

Reforestation: ການປູກປ່າໄມ້ຄືນໃໝ່

ໝາຍເຖິງ ການຫັນປ່ຽນພື້ນທີ່ດິນທີ່ບໍ່ມີປ່າໄມ້ ໃຫ້ກາຍເປັນປ່າໄມ້ ໂດຍມະນຸດ ດ້ວຍການນຳໃຊ້ເບ້ຍໄມ້, ແກ່ນໄມ້ ລວມທັງການສົ່ງເສີມສ້າງແຫຼ່ງແກ່ນພັນຕາມທຳມະຊາດ, ເພື່ອເຮັດໃຫ້ພື້ນທີ່ປ່າໄມ້ທີ່ຖືກຫັນປ່ຽນ ຫລື ທຳລາຍແລ້ວ ກັບກາຍເປັນພື້ນທີ່ປ່າໄມ້ຄືນໃໝ່.

Reforestation is the direct human-induced conversion of non-forested land to forested land through planting, seeding and/or the human-induced promotion of natural seed sources, on land that was forested but that has been converted to nonforested land.

Removals: ແຫຼ່ງຊຶມຊັບທາດອາຍເຮືອນແກ້ວ

ຂະບວນການນີ້ແມ່ນກົງກັນຂ້າມ ກັບການປ່ອຍທາດອາຍເຮືອນແກ້ວ ແລະ ມັນເກີດຂຶ້ນ ເມື່ອທາດອາຍເຮືອນແກ້ວ ຖືກກຳຈັດອອກຈາກຊັ້ນບັນຍາກາດ ຕົວຢ່າງ: ເວລາຕົ້ນໄມ້ທຳ ໜ້າທີ່ໃນຂະບວນການສັງເຄາະແສງ.

This is the opposite of an emission of greenhouse gas and occurs when greenhouse gases are removed from the atmosphere, for example, by trees during the process of photosynthesis.

Renewable Energy: ພະລັງງານທົດແທນ

ພະລັງງານປະເພດນີ້ສາມາດນຳໃຊ້ເພື່ອສະໜອງໄຟຟ້າ, ຄວາມຮ້ອນ ຫຼື ເຊື້ອໄຟສຳລັບການ ຂົນສົ່ງທີ່ຄ້າຍຄືກັບການນຳໃຊ້ເຊື້ອໄຟຈາກຖ່ານຫີນເພື່ອຈຸດປະສົງເຫຼົ່ານີ້. ມີຄວາມແຕກຕ່າງ ຈາກນ້ຳມັນ, ອາຍແກັດ, ຖ່ານຫີນ, ແຫຼ່ງທີ່ມາຂອງພະລັງງານທົດແທນຈະບໍ່ມີວັນໝົດເພາະ ແຫຼ່ງທີ່ມາສຳຄັນຂອງພະລັງງານທົດແທນ ສາມາດຟື້ນໂຕຄືນໄດ້ ເຊັ່ນ: ໄມ້, ການຍ່ອຍສະ ຫຼາຍຂອງສິ່ງເສດເຫຼືອ, ກິດຈະກຳທີ່ກ່ຽວກັບຄວາມຮ້ອນໃຕ້ດິນ, ພະລັງງານລົມ ແລະ ແສງ ອາທິດ. ການນຳໃຊ້ແຫຼ່ງພະລັງງານທົດແທນ ເພື່ອຜະລິດພະລັງງານຕາມປົກກະຕິແລ້ວແມ່ນ ພົວພັນກັບການປ່ອຍທາດເຮືອນແກ້ວໜ້ອຍກວ່າການນຳໃຊ້ເຊື້ອໄຟຈາກຖ່ານຫີນ

This form of energy can be used to provide electricity, heating or fuel for transportation similar to the way we use fossil fuels for these purposes. Unlike oil, gas and coal, renewable energy sources are not finite. Key sources include wood, waste decomposition, geothermal activity, wind and solar energy. The use of renewable sources for generating energy usually involves lower emissions of greenhouse gases than the use of fossil fuels does.

Representative Concentration Pathways (RCPs): ການຈຳລອງ ຄວາມເຂັ້ມຂຸ້ນການປ່ອຍທາດອາຍເຮືອນແກ້ວ

ການຈຳລອງ ໄດ້ລວມເອົາ ຂໍ້ມູນໄລຍະເວລາ ຂອງການປ່ອຍ ແລະ ຄວາມເຂັ້ມຂຸ້ນ ແບບ ຮອບດ້ານຂອງທາດອາຍເຮືອນແກ້ວ ແລະ ສານລະເຫີຍ ແລະ ສານເຄມີທີ່ກະຕຸ້ນໃຫ້ເກີດ ທາດອາຍແກັດ ລວມທັງການນຳໃຊ້ທີ່ດິນ/ເນື້ອທີ່ດິນປົກຫຸ້ມ (Moss et al., 2008). ຄຳສັບຕົວແທນທີ່ສະແດງໃຫ້ເຫັນເຖິງ ການຈຳລອງການປ່ອຍທາດອາຍເຮືອນແກ້ວ ທີ່ມີ

ລະດັບຄວາມເຂັ້ມຂຸ້ນທາດອາຍເຮືອນແກ້ວ ເຮັດໃຫ້ການແຜ່ລັງສີຄວາມຮ້ອນຢູ່ໜ້າໂລກ ໄດ້ສະໜອງພຽງແຕ່ການຈໍາລອງທີ່ເປັນໄປໄດ້ ຊຶ່ງອາດນໍາໄປສູ່ຄຸນລັກສະນະການປ່ອຍລັງສີອັນສະເພາະ. ຄໍາສັບ ກ່ຽວກັບ ແນວທາງ ແມ່ນເນັ້ນໜັກໃຫ້ເຫັນຄວາມເປັນຈິງ ລະດັບຄວາມເຂັ້ມຂຸ້ນໃນໄລຍະຍາວ ແລະ ເສັ້ນທາງການປະຕິບັດ ໃນແຕ່ລະໄລຍະ ເພື່ອບັນລຸຜົນໄດ້ຮັບທີ່ໄດ້ຮັບຄວາມສົນໃຈ (Moss et al., 2010). ການຈໍາລອງການປ່ອຍທາດອາຍເຮືອນແກ້ວ ທີ່ມີລະດັບຄວາມເຂັ້ມຂຸ້ນທາດອາຍເຮືອນແກ້ວ ເຮັດໃຫ້ການແຜ່ລັງສີຄວາມຮ້ອນຢູ່ໜ້າໂລກ ຖືກນໍາໃຊ້ ເພື່ອພັດທະນາການຄາດຄະເນສະພາບອາກາດ ໃນໂຄງການສຶກສາສົມທຽບ ລະຫວ່າງ ແບບຈໍາລອງພູມອາກາດໂລກໄລຍະ 5.

RCP2.6: ແມ່ນແນວທາງໜຶ່ງ ຂອງການຈໍາລອງການປ່ອຍທາດອາຍເຮືອນແກ້ວ ທີ່ມີລະດັບຄວາມເຂັ້ມຂຸ້ນທາດອາຍເຮືອນແກ້ວ ເຮັດໃຫ້ການແຜ່ລັງສີຄວາມຮ້ອນຢູ່ໜ້າໂລກສູງສຸດ 3 ວັດ/ມ^2 ແລະ ຫລຸດລົງໂດຍ ຈໍາກັດ ພາຍໃນ 2.6 ວັດ/ມ^2 ໃນປີ 2100 (ເພື່ອຕອບສະໜອງ ແນວທາງຕໍ່າກັບຂອບເຂດຄວາມເຂັ້ມຂຸ້ນ ແມ່ນມີຄ່າຄວາມເຂັ້ມຂຸ້ນຄົງທີ່ ຫຼັງຈາກປີ 2100).

RCP4.5 and RCP6.0: ແມ່ນສອງແນວທາງຮີບດ່ວນ ໝາຍເຖິງ ການຈໍາລອງການປ່ອຍທາດອາຍເຮືອນແກ້ວ ທີ່ມີລະດັບຄວາມເຂັ້ມຂຸ້ນຂອງທາດອາຍເຮືອນແກ້ວ ເຮັດໃຫ້ການແຜ່ລັງສີຄວາມຮ້ອນຢູ່ໜ້າໂລກ 4.5 ວັດ/ມ^2 ແລະ 6 ວັດ/ມ^2 ໃນປີ 2100 (ເພື່ອຕອບສະໜອງແນວທາງ ຕໍ່າກັບຂອບເຂດຄວາມເຂັ້ມຂຸ້ນ ແມ່ນມີຄ່າຄວາມເຂັ້ມຂຸ້ນຄົງທີ່ຫຼັງຈາກປີ 2150).

RCP8.5: ແມ່ນການຈໍາລອງການປ່ອຍທາດອາຍເຮືອນແກ້ວ ທີ່ມີລະດັບຄວາມເຂັ້ມຂຸ້ນຂອງທາດອາຍເຮືອນແກ້ວສູງ >8.5 ວັດ/ມ^2 ໃນປີ 2100 (ເພື່ອຕອບສະໜອງແນວທາງຕໍ່າກັບຂອບເຂດຄ່າຄວາມເຂັ້ມຂຸ້ນ ແມ່ນມີລະດັບການປ່ອຍມົນລະພິດແບບຄົງທີ່ ຫຼັງຈາກປີ 2100 ຈົນຮອດປີ 2150 ແລະ ຄ່າຄວາມເຂັ້ມຂຸ້ນຄົງທີ່ ຫຼັງຈາກປີ 2250).

Scenarios that include time series of emissions and concentrations of the full suite of greenhouse gases (GHGs) and aerosols and chemically active gases, as well as land use/land cover (Moss et al., 2008). The word representative signifies that each RCP provides only one of many possible scenarios that would lead to the specific radiative forcing characteristics. The term pathway emphasizes the fact that not only the long-term concentration levels but also the trajectory taken over time to reach that outcome are of interest (Moss et al., 2010). RCPs were used to develop climate projections in CMIP5.

RCP2.6: One pathway where radiative forcing peaks at approximately 3 W m-2 and then declines to be limited at 2.6 W m-2 in 2100 (the corresponding Extended Concentration Pathway, or ECP, has constant emissions after 2100).

• RCP4.5 and RCP6.0: Two intermediate stabilization pathways in which radiative forcing is limited at approximately 4.5 W -2 and 6.0 W -2 in 2100 (the corresponding ECPs have constant concentrations after 2150).

RCP8.5: One high pathway which leads to >8.5 W m in 2100 (the corresponding ECP has constant emissions after 2100 until 2150 and constant concentrations after 2250).

Resilience: ຄວາມທົນທານ

ໝາຍເຖິງ ຄວາມສາມາດໃນການຮັບມືກັບຜົນກະທົບ ຫຼື ຟື້ນຄືນສູ່ສະພາບປົກກະຕິ ຂອງ ຊຸມຊົນ, ສັງຄົມ ລວມທັງໂຄງລ່າງພື້ນຖານ ແລະ ລະບົບນິເວດ;

Resilience means an ability to respond to impacts and restore to a normal situation by/of communities, societies, infrastructure, and ecosystems.

Responses to Climate Change: ການຮັບມືຕໍ່ສະພາບການປ່ຽນແປງດິນຟ້າອາກາດ

ການຮັບມືການປ່ຽນແປງດິນຟ້າອາກາດ ແມ່ນການດຳເນີນບັນດາວຽກງານ ກ່ຽວກັບການປັບຕົວເຂົ້າກັບການປ່ຽນ ແປງດິນຟ້າອາກາດ ແລະ ການຫຼຸດຜ່ອນທາດອາຍເຮືອນແກ້ວ.

Climate change action refers to the implementation of climate change adaptation and mitigation activities.

Return Period: ຮອບວຽນການເກີດຊ້ຳ

ໝາຍເຖິງ ການຄາດຄະເນຄ່າສະເລ່ຍຊ່ອງວ່າງດ້ານໄລຍະເວລາ ລະຫວ່າງ ການເກີດຂຶ້ນຂອງເຫດການ (ເປັນຕົ້ນແມ່ນ ນ້ຳຖ້ວມ ຫຼື ຝົນຕົກຮຸນແຮງ) ດ້ວຍການກຳນົດຂະໜາດ ຫຼື ຄວາມຮຸນແຮງ.

An estimate of the average time interval between occurrences of an event (e.g., flood or extreme rainfall) of (or below/above) a defined size or intensity.

Revegetation: ການຟື້ນຟູປ່າຄືນ

ໝາຍເຖິງ ກິດຈະກໍາທີ່ສ້າງຂຶ້ນໂດຍມະນຸດ ເພື່ອເພີ່ມການເກັບສະສົມທາດກາກບອນຢູ່ ໃນພື້ນທີ່ໜ້ອຍສຸດ 0.05 ຮຕ ແລະ ບໍ່ໄດ້ຢູ່ໃນມາດຖານຂອງຄໍານິຍາມ ການປູກປ່າ ແລະ ການຟື້ນຟູປ່າຄືນ.

A direct human-induced activity to increase carbon stocks on sites through the establishment of vegetation that covers a minimum area of 0.05 hectares and does not meet the definitions of afforestation and reforestation.

Rio Conventions: ສົນທິສັນຍາຣິໂອ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ (UNFCCC), ຊີວະນາໆພັນ (CBD), ການຕໍ່ສູ້ ຕ້ານການກາຍເປັນທະເລຊາຍ (UNCCD)

ອະນຸສັນຍາທາງດ້ານສິ່ງແວດລ້ອມ 3 ສະບັບ, 2 ສະບັບ ໄດ້ຮັບຮອງໃນປີ 1992 ກອງປະຊຸມສຸດຍອດໂລກ ຢູ່ເມືອງ ຣິໂອດິຈາເນໂຣ: ອະນຸສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC), ອະນຸສັນຍາວ່າດ້ວຍຊີວະນາໆພັນ (CBD), ໃນຂະນະທີ່ອະນຸສັນຍາ ສະບັບທີ 3 ແມ່ນການຕໍ່ສູ້ຕ້ານການກາຍເປັນທະເລຊາຍ (UNCCD) ໄດ້ຮັບຮອງໃນປີ 1994. ບັນຫາດັ່ງກ່າວ ໄດ້ຮັບການແກ້ໄຂຈາກສະມາຊິກ ທີ່ກ່ຽວຂ້ອງກັບໂດຍສະເພາະແມ່ນ ການປ່ຽນແປງດິນຟ້າອາກາດ ມີຜົນກະທົບຕໍ່ການກາຍເປັນທະເລຊາຍ ແລະ ຊີວະນາໆພັນ-ໂດຍມີກຸ່ມປະສານງານຮ່ວມກັນ, ກອງເລຂາຂອງອະນຸສັນຍາທັງສາມສະບັບ ມີໜ້າທີ່ປະສານງານກິດຈະກໍາ ເພື່ອບັນລຸຄວາມຄືບໜ້າ.

Three environmental conventions, two of which were adopted at the 1992 "Earth Summit" in Rio de Janeiro: the United Nations Framework Convention on Climate Change (UNFCCC), and the Convention on Biodiversity (CBD), while the third, the United Nations Convention to Combat Desertification (UNCCD), was adopted in 1994. The issues addressed by the three treaties are related in particular, climate change can have adverse effects on desertification and biodiversity - and through a Joint Liaison Group, the secretariats of the three conventions take steps to coordinate activities to achieve common progress.

Rio+20: ຣິໂອ+20

ໝາຍເຖິງ ກອງປະຊຸມ ອົງການສະຫະປະຊາຊາດ ວ່າດ້ວຍການພັດທະນາແບບຍືນຍົງ ໄດ້

ຖືກຈັດຂຶ້ນ ຢູ່ເມືອງ ຣີໂອດີຈາເນໂຣ, ປະເທດບຣາຊິນ ວັນທີ 4-6 ເດືອນ ມິຖຸນາ 2012. ຊຶ່ງແມ່ນກອງປະຊຸມອົງການສະຫະປະຊາຊາດ ຄັ້ງທຳອິດ ວ່າດ້ວຍການພັດທະນາແບບຍືນຍົງ ໃນຫົວຂໍ້ ກອງປະຊຸມສຸດຍອດໂລກ ຈັດຂຶ້ນໃນ ປີ 1992 ແລະ ໄດ້ມີອະນຸສັນຍາຣີໂອ 3 ສະບັບ ທີ່ເອີ້ນວ່າ ອະນຸສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ, ອະນຸສັນຍາວ່າດ້ວຍຊີວະນາໆ ພັນ ແລະ ອະນຸສັນຍາການຕໍ່ສູ້ຕ້ານການກາຍເປັນທະເລຊາຍ.

The United Nations Conference on Sustainable Development, to be held in Rio de Janeiro, Brazil, on June 4-6, 2012. The first UN Conference on Sustainable Development was the "Earth Summit", held in 1992, and it spawned the three "Rio Conventions"-- the UNFCCC, the UNCCD, and the UNCBD.

Risk Assessments: ການປະເມີນຄວາມສ່ຽງ

ການປະເມີນຄວາມສ່ຽງ(ການສ້າງແຜນທີ່ຄວາມສ່ຽງທີ່ກ່ຽວຂ້ອງ) ແມ່ນກວມເອົາ: ການທົບທວນຄືນກ່ຽວກັບຄຸນລັກສະນະທາງດ້ານວິຊາການ ຂອງໄພອັນຕະລາຍຕ່າງໆເຊັ່ນ: ສະຖານທີ່ຕັ້ງ, ຄວາມຮຸນແຮງ, ຄວາມຖີ່ ແລະ ຄວາມເປັນໄປໄດ້, ການວິເຄາະດ້ານການປະສົບໄພ ແລະ ຄວາມອ່ອນໄຫວເຊິ່ງກວມເອົາຮູບການທາງດ້ານສັງຄົມ, ສຸຂະພາບ, ເສດຖະກິດ ແລະ ສິ່ງແວດລ້ອມ ແລະ ການປະເມີນກ່ຽວກັບປະສິດທິຜົນຂອງຄວາມອາດສາມາດໃນການແກ້ໄຂບັນຫາທີ່ພົ້ນເດັ່ນ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງກຸ່ມຂອງກິດຈະກຳດັ່ງກ່າວ ບາງຄັ້ງ ກໍ່ຮັບຮູ້ກັນວ່າເປັນຂະບວນການວິເຄາະຄວາມສ່ຽງໄພ.

Risk assessments (and associated risk mapping) include: a review of the technical characteristics of hazards such as their location, intensity, frequency and probability; the analysis of exposure and vulnerability including the physical social, health, economic and environmental dimensions; and the evaluation of the effectiveness of prevailing and alternative coping capacities. This series of activities is sometimes known as a risk analysis process.

Risk Classification(or class): ການຈັດປະເພດຄວາມສ່ຽງ (ຫຼື ລະດັບ)

ໝາຍເຖິງ ການພິສູດຢັ້ງຢືນ (VCS), ປະເພດ 1 ຫາ 4 ປະເພດຄື: (ຕ່ຳ, ກາງ, ສູງ ຫຼື ອັນຕະລາຍ/ລົ້ມເຫຼວ) ແມ່ນລະດັບຄວາມສ່ຽງທົ່ວໄປຂອງຄວາມບໍ່ໝັ້ນຄົງ ທີ່ຕິດພັນກັບໂຄງການໃດໜຶ່ງ.

Under the VCS, one of four categories (low, medium, high, or unacceptably high/fail) representing the general level of non-permanence risk associated with a given project.

S

Secondary Effects (Leakage): ຜົນກະທົບໄລຍະສອງ (ການຮົ່ວໄຫຼ)

ໝາຍເຖິງ ການປ່ຽນແປງການປ່ອຍທາດອາຍເຮືອນແກ້ວ ທີ່ມາຈາກໂຄງການ ບໍ່ສາມາດເບິ່ງເຫັນຜົນກະທົບຕົ້ນຕໍ. ໂດຍພື້ນຖານສິ່ງດັ່ງກ່າວນີ້ ແມ່ນມີຂະໜາດນ້ອຍ, ຍ້ອນຄວາມບໍ່ຕັ້ງໃຈຂອງໂຄງການທີ່ມີຜົນມາຈາກ ທາດອາຍເຮືອນແກ້ວ.

GHG emissions changes resulting from the project not captured by the primary effect(s). These are typically the small, unintended GHG consequences of a project.

Scenario: ການຈຳລອງ ສະພາບທີ່ຄາດວ່າຈະເກີດຂຶ້ນໃນອະນາຄົດ

ໝາຍເຖິງ ການອະທິບາຍຄວາມເປັນໄປໄດ້ ແລະ ເຂົ້າໃຈງ່າຍ ກ່ຽວກັບ ການພັດທະນາໃນອານາຄົດ ໂດຍອີງໃສ່ຄວາມຊັດເຈນ ແລະ ສອດຄ່ອງກັນໃນການຕັ້ງສົມມຸດຕິຖານ ປັດໄຈທີ່ພາໃຫ້ມີການປ່ຽນແປງ ແລະ ຄວາມສຳພັນຕົ້ນຕໍ. ສະຖານະການ ອາດຈະໄດ້ມາຈາກການຄາດຄະເນ ແຕ່ຍັງອີງໃສ່ຂໍ້ມູນເພີ່ມເຕີມຈາກແຫຼ່ງອື່ນໆ ແລະ ໃນບາງຄັ້ງກໍ່ອາດມີການພົວພັນກັບ ການບອກເລົ່າເລື່ອງໃດໜຶ່ງສະເພາະ

A plausible and often simplified description of how the future may develop based on a coherent and internally consistent set of assumptions about driving forces and key relationships. Scenarios may be derived from projections, but are often based on additional information from other sources, sometimes combined with a narrative storyline.

Sea Level Rise: ການເພີ່ມຂຶ້ນຂອງລະດັບນ້ຳທະເລ

ໝາຍເຖິງ ລະດັບນ້ຳທະເລສາມາດປ່ຽນແປງໄດ້ທັງພາກພື້ນ ແລະ ໃນໂລກ ເນື່ອງມາຈາກ 1). ການປ່ຽນແປງທາງດ້ານຂະໜາດຂອງມະຫາສະຫມຸດ, 2). ການປ່ຽນແປງທາງດ້ານ

ມວນສານຂອງນໍ້າ, 3). ການປ່ຽນແປງລະດັບຄວາມໜາແໜ້ນຂອງນໍ້າ. ປັດໄຈທີ່ເຮັດໃຫ້ລະດັບນໍ້າທະເລສູງຂຶ້ນ ພາຍໃຕ້ພາວະໂລກຮ້ອນ ລວມເຖິງການເພີ່ມຂຶ້ນຂອງມວນສານນໍ້າຈາກການລະລາຍຂອງຫິມະ ແລະ ນໍ້າກ້ອນ. ການປ່ຽນແປງລະດັບຄວາມໜາແໜ້ນຂອງນໍ້າເກີດຈາກການເພີ່ມຂຶ້ນຂອງອຸນຫະພູມໃນມະຫາສະໝຸດ ແລະ ການປ່ຽນແປງຄວາມເຄັມຂອງນໍ້າ. ການເພີ່ມຂຶ້ນຂອງລະດັບນໍ້າທະເລ ເກີດຂຶ້ນຢູ່ໃນສະຖານທີ່ບ່ອນທີ່ມີລະດັບການເພີ່ມຂຶ້ນຂອງມະຫາສະໝຸດທຽບໃສ່ດິນ ອາດເນື່ອງມາຈາກມະຫາສະໝຸດມີລະດັບເພີ່ມຂຶ້ນ ຫຼື ລະດັບຂອງດິນຍຸບຕົວລົງ.

Sea level can change, both globally and locally, due to (i) changes in the shape of the ocean basins, (ii) changes in the total mass of water and (iii) changes in water density.

Factors leading to sea level rise under global warming include both increases in the total mass of water from the melting of land-based snow and ice, and changes in water density from an increase in ocean water temperatures and salinity changes. Relative sea-level rise occurs where there is a local increase in the level of the ocean relative to the land, which might be due to ocean rise and/or land level subsidence.

Sea Surface Temperature (SST): ອຸນຫະພູມພື້ນຜິວທະເລ

ໝາຍເຖິງ ອຸນຫະພູມພື້ນຜິວທະເລ ແມ່ນອຸນຫະພູມຢູ່ລຸ່ມພື້ນຜິວອຸນຫະພູມ ຈາກເບື້ອງເທິງໜ້ານໍ້າທະເລ 2 ແມັດ ວັດແທກດ້ວຍເຮືອ, ປ່ອມລອຍນໍ້າ ແລະ ເຮືອຫາປາ. ຈາກການວັດແທກດ້ວຍເຮືອ ຂອງກຸ່ມຕົວຢ່າງນໍ້າທີ່ມີໃນຖັງ ແມ່ນຖືກປ່ຽນ ໃນຊຸມປີ 1940 ເປັນຕົວຢ່າງ ຈາກເຄື່ອງຈັກກັກເກັບນໍ້າ. ການວິເຄາະດ້ວຍພາບຖ່າຍດາວທຽມ ກ່ຽວກັບພື້ນຜິວອຸນຫະພູມ (ຊັ້ນເທິງສຸດ, ແຍກຈາກຄວາມໜາຫົວໜ່ວຍເປັນມິລິແມັດ) ດ້ວຍວິທີການສາຍແສງລັງສີ ຫຼື ຢູ່ດ້ານເທິງວັດແທກ ຫົວໜ່ວຍເປັນ ຊັງຕີແມັດ ຫຼື ໃນເຕົາອົບຄວາມຮ້ອນ ແມ່ນໄດ້ຖືກນໍາມາໃຊ້ ແຕ່ຕ້ອງໄດ້ມີການດັດປັບ ໃຫ້ມີຄວາມແທດເໝາະກັບອຸນຫະພູມຈໍານວນຫຼາຍ.

The sea surface temperature is the temperature of the subsurface bulk temperature in the top few meters of the ocean, measured by ships, buoys, and drifters. From ships, measurements of water samples in buckets were mostly switched in the 1940s to samples from engine intake water. Satellite measurements of skin temperature (uppermost layer; a fraction of a millimeter thick) in the infrared or the top centimeter or so in the microwave are also used, but must be adjusted to be compatible with the bulk temperature.

Sensitivity: ຄວາມອ່ອນໄຫວ

ໝາຍເຖິງ ລະດັບຄວາມຮຸນແຮງຂອງຜົນກະທົບ ທີ່ມີຕໍ່ລະບົບໃດໜຶ່ງ ໂດຍມີສາເຫດມາຈາກສະພາບພູມອາກາດ, ເຊິ່ງປະກອບດ້ວຍ ສະພາບແວດລ້ອມທາງທຳມະຊາດ ແລະ ສັງຄົມ. ຜົນກະທົບອາດຈະໂດຍທາງກົງ (ຕົວຢ່າງ: ການປ່ຽນແປງທາງດ້ານຜົນຜະລິດຂອງພືດຕໍ່ກັບການປ່ຽນແປງທາງດ້ານຄ່າສະເລ່ຍ, ຂະໜາດ ຫຼື ຄວາມບໍ່ຄົງທີ່ທາງດ້ານອຸນຫະພູມ) ຫຼື ຜົນກະທົບໂດຍທາງອ້ອມ(ຕົວຢ່າງ: ຄວາມເສຍຫາຍ ທີ່ເກີດມາຈາກການເພີ່ມຂຶ້ນໃນ ເວລາທີ່ເກີດນ້ຳຖ້ວມຢູ່ແຄມຝັ່ງ ເນື່ອງຈາກການເພີ່ມຂຶ້ນຂອງລະດັບນ້ຳທະເລ)

Sensitivity is the degree to which a system is affected, either adversely or beneficially, by climate variability or change. The effect may be direct (e.g., a change in crop yield in response to a change in the mean, range or variability of temperature) or indirect (e.g., damages caused by an increase in the frequency of coastal flooding due to sea level rise).

Sequestration: ການເກັບສະສົມ

ແມ່ນຂະບວນການເພີ່ມປະລິມານທາດກາກບອນຢູ່ໃນແຫຼ່ງກາກບອນໃດໜຶ່ງ ທີ່ຢູ່ນອກເໜືອຈາກຊັ້ນບັນຍາກາດ.

The process of increasing the carbon content of a carbon pool other than the atmosphere.

Sequestered Atmospheric Carbon: ການກັກເກັບ ທາດອາຍກາກບອນ ໃນຊັ້ນບັນຍາກາດ

ການກຳຈັດທາດອາຍກາກບອນ ໃນຊັ້ນບັນຍາກາດ ດ້ວຍວິທີການດູດຊັບທາງດ້ານຊີວະວິທະຍາ ແລະ ການກັກເກັບ ດ້ວຍເນື້ອເຍື່ອຂອງພືດ. ການກັກເກັບທາດອາຍກາກບອນ ໃນຊັ້ນບັນຍາກາດບໍ່ໄດ້ລວມເອົາການຈັບຕົວທາດອາຍເຮືອນແກ້ວ ໂດຍຜ່ານການຈັບຕົວຂອງທາດອາຍກາກບອນ ແລະ ການກັກເກັບ.

Carbon removed from the atmosphere by biological sinks and stored in plant tissue. Sequestered atmospheric carbon does not include GHGs captured through carbon capture and storage.

Small Scale CDM Projects: ໂຄງການພັດທະນາສະອາດຂະໜາດໜ້ອຍ

ໝາຍເຖິງ ຂະບວນການແບບງ່າຍດາຍ ສຳລັບໂຄງການກົນໄກພັດທະນາສະອາດຂະໜາດນ້ອຍ ທີ່ກໍ່ໃຫ້ເກີດມີການຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຊຶ່ງເອີ້ນວ່າ: ໂຄງການພະລັງງານທົດແທນທີ່ຕ່ຳກ່ວາ 15 MW, ໂຄງການປະຫຍັດພະລັງງານ ທີ່ຫລຸດຜ່ອນການນຳໃຊ້ພະລັງງານໄດ້ເຖິງ 60 GWh ຕໍ່ ປີ; ຫຼື ກິດຈະກຳຂອງໂຄງການ ທີ່ປ່ອຍອາຍກາກບອນໄດອອກໄຊ ທຽບເທົ່າ ໜ້ອຍກວ່າ 60 ກິໂລໂຕນ/ປີ.

There is a simplified process for small scale CDM projects that will generate less emissions reductions. They are defined as: renewable energy projects under 15 MW, energy efficiency projects that reduce energy consumption by up to 60 GWh per year; or project activities which emit less than 60 kilotonnes CO_2 equivalent per year.

Socio-Eonomic Scenarios: ການຈຳລອງດ້ານເສດຖະກິດ-ສັງຄົມ

ການຈຳລອງຕໍ່ກັບສະພາບເງື່ອນໄຂໃນອານາຄົດ ກ່ຽວກັບ ພົນລະເມືອງ, ລວມຍອດຜະລິດຕະພັນພາຍໃນ ແລະ ປັດໄຈທາງດ້ານເສດຖະກິດ-ສັງຄົມອື່ນໆທີ່ກ່ຽວຂ້ອງກັບ ຄວາມເຂົ້າໃຈໃນການປ່ຽນແປງທາງດ້ານດິນຟ້າອາກາດ.

Scenarios concerning future conditions in terms of population, Gross Domestic Product and other socio-economic factors relevant to understanding the implications of climate change.

Solar Radiation: ລັງສີ ຈາກແສງຕາເວັນ

ໝາຍເຖິງ ການແຜ່ລັງສີແມ່ເຫຼັກອອກຈາກແສງດວງຕາເວັນ. ພ້ອມທັງຫມາຍເຖິງການແຜ່ລັງສີກະແສຄື້ນສັ້ນ. ການແຜ່ລັງສີຈາກແສງດວງຕາເວັນ ມີຂະໜາດຂອງຄື້ນທີ່ແຕກຕ່າງກັນ (ແຖບສີ). ໂດຍກຳນົດຈາກອຸນຫະພູມຂອງແສງຕາເວັນຢູ່ຈຸດ ທີ່ຄວາມຍາວສູງ ສຸດຂອງຄື້ນ ທີ່ສາມາດເບິ່ງເຫັນໄດ້.

Electromagnetic radiation emitted by the Sun. It is also referred to as shortwave radiation. Solar radiation has a distinctive range of wavelengths (spectrum) determined by the temperature of the Sun, peaking in visible wavelengths.

Special Climate Change Fund (SCCF): ກອງທຶນພິເສດກ່ຽວກັບການປ່ຽນແປງດິນຟ້າອາກາດ

ກອງທຶນພິເສດ ກ່ຽວກັບການປ່ຽນແປງດິນຟ້າອາກາດ ໄດ້ຖືກສ້າງຕັ້ງຂຶ້ນມາເພື່ອສະໜັບສະໜູນດ້ານການເງິນໃຫ້ໂຄງການ ທີ່ກ່ຽວຂ້ອງກັບການປັບຕົວ, ການຖ່າຍທອດດ້ານເຕັກໂນໂລຊີ ແລະ ການສ້າງຄວາມອາດສາມາດ, ພະລັງງານ, ການຂົນສົ່ງ, ອຸດສະຫະກຳ, ກະສິກຳ, ການຄຸ້ມຄອງສິ່ງເສດເຫຼືອ ແລະ ປ່າໄມ້, ຄວາມຫຼາກຫຼາຍດ້ານເສດຖະກິດ. ກອງທຶນດັ່ງກ່າວ ອາດເປັນອົງປະກອບໜຶ່ງ ຂອງກົນໄກກອງທຶນອື່ນໆ ເພື່ອຈັດຕັ້ງປະຕິບັດອະນຸສັນຍາ. ກອງທຶນສະໜັບສະໜູນດ້ານສິ່ງແວດລ້ອມຂອງສາກົນ ຊຶ່ງແມ່ນພາກສ່ວນທີ່ດຳເນີນງານ ກົນໄກທາງດ້ານການເງິນຂອງອະນຸສັນຍາ ໂດຍໄດ້ຮັບຄວາມເຊື່ອຖື ໃນການດຳເນີນງານກອງທຶນດັ່ງກ່າວ.

The SCCF was established to finance projects relating to adaptation; technology transfer and capacity building; energy, transport, industry, agriculture, forestry and waste management; and economic diversification. This fund should complement other funding mechanisms for the implementation of the Convention. The Global Environment Facility (GEF), as the entity that operates the financial mechanism of the Convention, has been entrusted to operate this fund.

Stocktake of Climate Change Information: ການທົບທວນຂໍ້ມູນກ່ຽວກັບການປ່ຽນແປງດິນຟ້າອາກາດ

ການສຳຫຼວດການປ່ຽນແປງດິນຟ້າອາກາດ ແມ່ນການເກັບກຳສັງລວມຂໍ້ມູນ, ປະເມີນ, ວິໄຈຂໍ້ມູນ ແລະ ສ້າງແບບຈຳລອງສະພາບອາກາດ ເພື່ອນຳໃຊ້ໃນການວາງແຜນຄຸ້ມຄອງການປ່ຽນແປງດິນຟ້າອາກາດ.

The stocktake of climate change information includes data collection, compilation, assessment, and analysis, and climate status modeling for climate change management planning.

Stratosphere: ຊັ້ນບັນຍາກາດທີ່ຢູ່ລະຫວ່າງ 10 ຫາ 60 ກິໂລແມັດຈາກໜ້າໂລກ

ໝາຍເຖິງການຈັດແບ່ງລະດັບເຂດຄວາມສູງຂອງຊັ້ນບັນຍາກາດຢູ່ຊັ້ນເທິງຂອງຊັ້ນໂທໂປສະເຟຍ ໄດ້ຂະຫຍາຍອອກປະມານ 10 ກິໂລແມັດ (ໃນລະດັບຄວາມສູງ 9 ກິໂລແມັດຫາ 16 ກິໂລແມັດ ໃນເຂດອາກາດຮ້ອນ) ປະມານ 50 ກິໂລ ແມັດ.

Highly stratified region of atmosphere above the troposphere extending from about 10 km (ranging from 9 km in high latitudes to 16 km in the tropics) to about 50 km.

Stationary Combustion: ການເຜົາໄໝ້ນ້ຳມັນເຊື້ອໄຟຢູ່ກັບທີ່

ການເຜົາໄໝ້ ນ້ຳມັນ ເພື່ອສ້າງກະແສໄຟຟ້າ, ອາຍນ້ຳ, ຄວາມຮ້ອນ ຫຼື ພະລັງງານ ຢູ່ໃນອຸປະກອນ ຢູ່ໃນສະຖານທີ່ ເຊັ່ນ ໝໍ້ຕົ້ມ, ເຕົາເຜົາ.

Burning of fuels to generate electricity, steam, heat, or power in stationary equipment such as boilers, furnaces, etc.

Storm Surge: ພາຍຸຄື້ນທະເລ

ໝາຍເຖິງ ການເພີ່ມຂຶ້ນຂອງຄວາມຮຸນແຮງ ໄລຍະສັ້ນ ຢູ່ສະຖານທີ່ໃນລະດັບຄວາມສູງທຽບໃສ່ນ້ຳທະເລ ເນື່ອງຈາກສະພາບເງື່ອນໄຂທາງດ້ານອຸຕຸນິຍົມ (ຄວາມກົດດັນອາກາດຕ່ຳໃນຊັ້ນບັນຍາກາດ ແລະ/ຫຼື ລົມພັດແຮງ). ພາຍຸຮຸນແຮງ ແມ່ນໝາຍເຖິງເງື່ອນໄຂທີ່ສູງເກີນລະດັບຄາດໝາຍ ຈາກນ້ຳຂຶ້ນລົງຢ່າງດຽວ ຕາມໄລຍະເວລາ ແລະ ສະຖານທີ່.

The temporary increase, at a particular locality, in the height of the sea due to extreme meteorological conditions (low atmospheric pressure and/or strong winds). The storm surge is defined as being the excess above the level expected from the tidal variation alone at that time and place.

Subsidiary Body for Implementation (SBI): ຄະນະກຳມະການຈັດຕັ້ງປະຕິບັດພາຍໃຕ້ສົນທິສັນຍາ

ໝາຍເຖິງ ຂໍ້ຕົກລົງຍ່ອຍ ຂອງສົນທິສັນຍາສາກົນ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ອານຸສັນຍາກຽວໂຕ ທີ່ໄດ້ພິຈາລະນາ ແລະ ໃຫ້ຄຳແນະນຳແກ່ປະເທດພາຄີ ກ່ຽວກັບ

ການຈັດຕັ້ງປະຕິບັດສົນທິສັນຍາ ແລະ ອະນຸສັນຍາກຽວໂຕ.

A subsidiary body to the UNFCCC and Kyoto Protocol, which considers and advises the parties on issues relating to the implementation of the Convention and Kyoto Protocol.

Subsidiary Body for Scientific and Technological Advice (SBSTA): ຄະນະກຳມະການທີ່ປຶກສາດ້ານວິທະຍາສາດ ແລະ ເຕັກໂນໂລຊີພາຍໃຕ້ສົນທິສັນຍາ

ໝາຍເຖິງອົງກອນໜຶ່ງທີ່ຢູ່ໃນລະບົບກົງຈັກຂອງສົນທິສັນຍາສາກົນວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ອະນຸສັນຍາກຽວໂຕ ທີ່ຄົ້ນຄວ້າ ແລະ ໃຫ້ຄຳປຶກສາແກ່ປະເທດພາຄີດ້ານວິທະຍາສາດ ແລະ ເຕັກໂນໂລຊີທີ່ກ່ຽວຂ້ອງກັບສົນ ທິສັນຍາ ແລະ ອະນຸສັນຍາກຽວໂຕ.

A subsidiary body to the UNFCCC and Kyoto Protocol, which considers and advises the parties on scientific and technological issues related to the Convention and Kyoto Protocol.

T

Thermal Infrared Radiation: ລັງສີຄວາມຮ້ອນຂອງແສງອິນຟາເຣດ

ໝາຍເຖິງ ການແຜ່ລັງສີຂອງຜິວໂລກ, ຊັ້ນບັນຍາກາດ ແລະ ເມກເຝື້ອ ດັ່ງທີ່ຮູ້ກັນດີວ່າແມ່ນໜ້າໂລກ ຫຼື ການແຜ່ລັງສີຄື້ນຍາວ, ການແຜ່ລັງສີອິນຟາເຣດທີ່ເປັນສ່ວນປະກອບຂອງແສງຂອງດວງຕາເວັນ.

ການແຜ່ລັງສີອິນຟາເຣດ, ໂດຍທົ່ວໄປແມ່ນຈະມີຂະໜາດຂອງຄວາມຍາວຄື້ນ ທີ່ແຕກຕ່າງກັນ (ແຖບສີ) ຍາວກວ່າຄວາມຍາວຄື້ນທີ່ເປັນສີແດງ ເຊິ່ງເປັນສ່ວນທີ່ສາມາດເບິ່ງເຫັນໄດ້ດ້ວຍຕາ. ແຖບສີຂອງການແຜ່ຄວາມຮ້ອນຂອງແສງອິນຟາເຣດ ແມ່ນຕ່າງຈາກຄື້ນສັ້ນ ຫຼື ການແຜ່ລັງສີຈາກແສງອາທິດເນື່ອງຈາກຄວາມແຕກຕ່າງທາງດ້ານອຸນຫະພູມລະຫວ່າງ

ລະບົບດວງຕາເວັນ ແລະ ຊັ້ນບັນຍາກາດໂລກ.

Radiation emitted by the Earth's surface, the atmosphere and the clouds. It is also known as terrestrial or long wave radiation, and is to be distinguished from the near-infrared radiation that is part of the solar spectrum.

Infrared radiation, in general, has a distinctive range of wavelengths (spectrum) longer than the wavelength of the red colour in the visible part of the spectrum. The spectrum of thermal infrared radiation is practically distinct from that of shortwave or solar radiation because of the difference in temperature between the Sun and the Earth-Atmosphere system.

Tropical Cyclone: ພາຍຸໝູນເຂດຮ້ອນ

ໝາຍເຖິງຄວາມຮຸນແຮງ, ລະດັບຄວາມຮຸນແຮງສ້າງຜົນກະທົບຂອງລົມພາຍຸ ຊຶ່ງກໍ່ຕົວມາຈາກມະຫາສະໝຸດເຂດຮ້ອນ. ຄວາມແຕກຕ່າງລະຫວ່າງ ລະບົບທີ່ອ່ອນແອ (ປົກກະຕິມີຊື່ເອີ້ນວ່າ ລົມມໍລະສຸມເຂດຮ້ອນ ຫຼື ຄວາມກົດດັນອາກາດຕ່ຳ) ຊຶ່ງມີຄວາມໄວລົມເກີນລະດັບທີ່ກຳນົດໄວ້. ລົມພາຍຸເຂດຮ້ອນ ແມ່ນພາຍຸໝູນເຂດຮ້ອນ ຊຶ່ງມີລະດັບການເຄື່ອນທີ່ຄວາມໄວຂອງລົມຢູ່ພື້ນຜິວໜ້າດິນ ໃນລະຫວ່າງ 18-32 ແມັດ ຕໍ່ ວິນາທີ (m s-1). ຖ້າສູງກວ່າ 32 ແມັດ ຕໍ່ວິນາທີ (ms-1) ພາຍຸໝູນເຂດຮ້ອນ ຈະເອີ້ນວ່າລົມພາຍຸ, ພາຍຸໄຕ້ຝຸ່ນຊຶ່ງຂຶ້ນກັບພື້ນທີ່.

The general term for a strong, cyclonic-scale disturbance that originates over tropical oceans. Distinguished from weaker systems (often named tropical disturbances or depressions) by exceeding a threshold wind speed. A tropical storm is a tropical cyclone with one-minute average surface winds between 18 and 32 m s-1. Beyond 32 m s-1, a tropical cyclone is called a hurricane, typhoon, or cyclone, depending on geographic location.

Troposphere: ຊັ້ນບັນຍາກາດ(ຊັ້ນໂທຣໂປສະເຟຍ)

ໝາຍເຖິງ ສ່ວນທີ່ຕ່ຳສຸດຂອງຊັ້ນບັນຍາກາດ ຈາກໜ້າດິນຂຶ້ນໄປປະມານ 10 ກິໂລແມັດໃນລະດັບນ້ຳທະເລ ຢູ່ເສັ້ນຂະໜານ ໃນເຄິ່ງກາງຂອງເສັ້ນຂະໜານ (ໂດຍການຈັດລຽງເລີ່ມຈາກ 9 ກິໂລແມັດໃນຄວາມສູງຂອງເສັ້ນຂະໜານ ເຖິງ 16 ກິໂລແມັດໃນເຂດທີ່ມີຄວາມຮ້ອນສະເລ່ຍ), ເປັນບ່ອນທີ່ກ້ອນເມກເຝື້ອ ແລະອາກາດມີປະກົດການເກີດຂຶ້ນ. ຢູ່ໃນຊັ້ນບັນຍາກາດ (ໂທຣໂປສະເຟຍ) ອຸນຫະພູມຈະຫລຸດລົງຈາກຄວາມສູງ.

The lowest part of the atmosphere from the surface to about 10 km in altitude in mid- latitudes (ranging from 9 km in high latitudes to 16 km in the tropics on average) where clouds and 'weather' phenomena occur. In the troposphere, temperatures generally decrease with height.

Trust Funds: ກອງທຶນສະໜັບສະໜູນ

ກອງທຶນທີ່ສະຫງວນໄວ້ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວ ແຜນງານສະເພາະພາຍໃຕ້ກົນໄກຂອງອົງການສະຫະປະຊາຊາດ.

Funds earmarked for specific programmes within the UN system.

U

United Nations Framework Convention on Climate Change (UNFCCC): ສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ

ສົນທິສັນຍາໄດ້ຖືກຮັບຮອງໃນເດືອນ ພຶດສະພາ 1992 ແລະ ໄດ້ລົງນາມ ທີ່ກອງປະຊຸມ the Rio Earth Summit ຢູ່ທີ່ນະຄອນຣີໂອ. ມີຜົນບັງຄັບໃຊ້ ແຕ່ເດືອນ ມີນາ 1994 ແລະ ຮອດປີ 2018 ມີ 197 ປະເທດໄດ້ລົງນາມ. ຈຸດປະສົງຫຼັກ ຂອງສົນທິສັນຍາແມ່ນ ການຄວບຄຸມ ລະດັບຄວາມເຂັ້ມຂຸ້ນ ຂອງທາດອາຍເຮືອນແກ້ວ ໃນຊັ້ນບັນຍາກາດ ໃຫ້ຢູ່ໃນລະດັບທີ່ບໍ່ສ້າງຜົນກະທົບທີ່ຮ້າຍແຮງຕໍ່ກັບໂລກ ແລະ ມະນຸດ.

The UNFCCC was adopted in May 1992 and opened for signature at the 1992 Earth Summit in Rio de Janeiro. It entered into force in March 1994 and as of May 2018 had 197 Parties (196 States and the European Union). The Convention's ultimate objective is the 'stabilisation of greenhouse gas concentrations in the atmosphere at a level that would prevent dangerous anthropogenic interference with the climate system.'

Uncertainty: ຄວາມບໍ່ແນ່ນອນ ຫຼື ຄວາມຄາດເຄື່ອນ

ແມ່ນການສະແດງອອກ ກ່ຽວກັບ ລະດັບຕໍ່ຄຸນຄ່າ (ຕົວຢ່າງ: ສະພາວະໃນອານາຄົດຂອງ ລະບົບດິນຟ້າອາກາດ) ທີ່ບໍ່ສາມາຮັບຮູ້. ຄວາມບໍ່ແນ່ນອນ ສາມາດເກີດຈາກການຂາດຂໍ້ມູນ ຫຼື ຄວາມບໍ່ເອກະພາບ ກ່ຽວກັບສິ່ງທີ່ຮູ້ ຫຼື ອາດຈະຮູ້. ອາດຈະມີຫຼາຍແຫຼ່ງ, ຈາກຄວາມຜິດພາດດ້ານຈຳນວນທີ່ມີຢູ່ໃນຂໍ້ມູນທີ່ກຳນົດແນວຄວາມຄິດ ຫຼື ໃຊ້ຄຳສັບບໍ່ຊັດເຈນຫຼື ຄວາມ ບໍ່ແນ່ນອນ ຂອງການຄາດຄະເນ ກ່ຽວກັບການປະພຶດຂອງມະນຸດ. ຄວາມບໍ່ແນ່ນອນ ສາມາດນຳສະເໜີຈາກການວັດແທກດ້ານປະລິມານ (ຕົວຢ່າງ: ມູນຄ່າທີ່ຄິດໄລ່ຈາກແບບຈຳລອງຕ່າງໆໃນໄລຍະຜ່ານມາ) ຫຼື ຈາກການຢັ້ງຢືນທາງດ້ານຄຸນນະພາບ (ຜົນກະທົບຈາກການຕັດສິນຂອງທີມຊ່ຽວຊານ)

An expression of the degree to which a value (e.g., the future state of the climate system) isunknown. Uncertainty can result from lack of information or from disagreement about what is known or even knowa ble. It may have many types of sources, from quantifiable errors in the data to ambiguously defined concepts or terminology, or uncertain projections of human behaviour. Uncertainty can therefore be represented by quantitative measures (e.g., a range of values calculated by various models) or by qualitative statements (e.g., reflecting the judgement of a team of experts).

V

Validation: ການກວດສອບເພື່ອຮັບຮອງ

ແມ່ນຂະບວນການກວດສອບ ຂອງພາກສ່ວນທີ່ອິດສະຫຼະ ເພື່ອປະເມີນໂຄງການໂດຍອີງຕາມມາດຖານທີ່ໄດ້ກຳນົດໄວ້ ຊຶ່ງລວມທັງການປັບປຸງວິທີອອກແບບ, ວິທີການປະຕິບັດ, ການຄຳນວນ ແລະ ຍຸດທະສາດ ການວ່າຈ້າງຂອງໂຄງການ, ເຊິ່ງຕ້ອງມີຄວາມໝັ້ນໃຈວ່າໂຄງການໄດ້ດຳເນີນການຕາມລະບຽບການຂອງມາດຖານທີ່ໄດ້ກຳນົດໄວ້.

A process by which an independent third-party organization, which has been certified to evaluate projects accor ding to a specific standard, thoroughly reviews the design, methodologies, calculations and strategies employed in a project, ensuring the project follows the rules of the chosen standard.

Value Chain Emissions: ຕ່ອງໂສ້ ການປ່ອຍທາດອາຍເຮືອນແກ້ວຈາກຂະບວນການຜະລິດ

ໝາຍເຖິງ ການປ່ອຍຈາກກິດຈະກຳເບື້ອງເທິງ ແລະ ເບື້ອງລຸ່ມ ຊຶ່ງກ່ຽວຂ້ອງກັບການດຳເນີນງານ ຂອງການລາຍງານ ຂອງບໍລິສັດ

Emissions from the upstream and downstream activities associated with the operations of a reporting company.

Verification: ການຢັ້ງຢືນ

ແມ່ນການຮັບຮອງເປັນແຕ່ລະໄລຍະຈາກອົງກອນເອກະລາດ ແລະ ດຳເນີນຫຼັງການກວດກາການຫລຸດຜ່ອນການປ່ອຍອາຍເຮືອນແກ້ວ ຕາມລະດັບທີ່ໄດ້ກຳນົດໃຫ້ ໃນນັ້ນອາດລວມມີການຫລຸດຜ່ອນລະດັບການປ່ອຍ ແລະ ການເພີ່ມລະດັບການດູດຊຶມ (ຜົນປະໂຫຍດຈາກກາກບອນ) ຊຶ່ງເປັນຜົນມາຈາກການດຳເນີນກິດຈະກຳຂອງໂຄງການໃນລະຫວ່າງການພິສູດຢັ້ງຢືນ.

The periodic independent review and ex-post determination of the monitored reductions in anthropogenic emissions by sources of greenhouse gases or increases in carbon stocks (carbon benefits) that have occurred as a result of a project activity during the verification period.

Verified Emissions Reductions(VERs): ການຢັ້ງຢືນການຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວ

ເປັນສັບເຕັກນິກ ຂອງສິນເຊື່ອ ກາກບອນຊົດເຊີຍ ທີ່ໃຊ້ໃນລະບົບຕະຫຼາດກາກບອນແບບສະໝັກໃຈ, ສິນເຊື່ອເຫຼົ່ານີ້ແມ່ນສາມາດນຳໄປຊື້-ຂາຍໄດ້ ສຳລັບໂຄງການທີ່ດຳເນີນການຫລຸດຜ່ອນ ການປ່ອຍທາດອາຍເຮືອນແກ້ວ ເພື່ອໃຫ້ບັນລຸຕາມຄວາມຕ້ອງການຂອງຕະຫຼາດກາກບອນແບບສະໝັກໃຈ ຊຶ່ງເປັນຄວາມຕ້ອງການຂອງການຈັດຕັ້ງ ແລະ ບຸກຄົນທີ່ຢາກຈະຊົດເຊີຍການປ່ອຍທີ່ເຂົາເຈົ້າໄດ້ຜະລິດຂຶ້ນ.

The general name given to carbon offset credits in the voluntary carbon market. These are tradable credits for greenhouse emission reductions generated to meet voluntary demand for carbon credits by organizations and individuals wanting to offset their own emissions.

Voluntary Carbon Unit (VCU): ຫົວໜ່ວຍກາກບອນໃນລະບົບກາກບອນແບບສະໝັກໃຈ

ຄຳສັບເຕັກນິກຂອງສິນເຊື່ອກາກບອນຊົດເຊີຍ ໂດຍສະເພາະ ການພິສູດຢັ້ງຢືນ ກ່ຽວກັບມາດຕະຖານກາກບອນແບບສະໝັກໃຈ, ແມ່ນລະບົບທີ່ນຳໜ້າອັນໜຶ່ງ ໃນການສ້າງມາດຕະຖານແບບເອກະລາດເພື່ອເປັນການສາທິດທົດລອງ ກ່ຽວກັບຫຼັກຄຸນນະທຳຂອງໂຄງການຫລຸດຜ່ອນການປ່ອຍ ເພື່ອຄວບຄຸມຕະຫຼາດກາກບອນແບບສະໝັກໃຈທີ່ຍັງບໍ່ປະຕິບັດລະບຽບຫລັກການ.

The name of carbon offset credits specifically verified to the Voluntary Carbon Standard, one of the leading independent standards established to demonstrate integrity in project-based emission reductions in the unregulated voluntary carbon market.

Voluntary Commitments: ການໃຫ້ຄຳໝັ້ນສັນຍາແບບສະໝັກໃຈ

ໝາຍເຖິງ ຮ່າງມາດຕາ ທີ່ຖືກນຳມາພິຈາລະນາ ໃນລະຫວ່າງການເຈລະຈາ ອະນຸສັນຍາກຽວໂຕ ຊຶ່ງຄວນມີການອະນຸຍາດໃຫ້ບັນດາປະເທດທີ່ກຳລັງພັດທະນາ ມີຄວາມສະໝັກໃຈ ໃນການກຳນົດເປົ້າໝາຍການປ່ອຍມົນລະພິດ ທີ່ຖືກຕ້ອງຕາມກົດໝາຍ.

A draft article considered during the negotiation of the Kyoto Protocol that would have permitted developing countries to voluntarily adhere to legally binding emissions targets.

Voluntary Markets: ຕະຫຼາດກາກບອນແບບສະໝັກໃຈ

ແມ່ນຄຳສັບທີ່ໃຊ້ ເພື່ອກ່າວເຖິງຕະຫຼາດກາກບອນທີ່ຢູ່ນອກກອບຂໍ້ບັງຄັບ ຫຼື ອະນຸສັນຍາສາກົນກ່ຽວກັບຕະຫຼາດກາກບອນ, ຕະຫຼາດເຫຼົ່ານີ້ຕັ້ງຂຶ້ນ ແລະ ຖືກດຳເນີນໄປດ້ວຍຄວາມຮັບຜິດຊອບແບບສະໝັກໃຈຂອງອົງກອນຕ່າງໆ (ເຊັ່ນ: ບໍລິສັດພະລັງງານ, ສາຍການບິນ) ແລະ ບຸກຄົນ.

The term used to describe carbon markets outside the regulatory carbon framework that does not involve international agreements. These markets are driven by voluntary commitments from organizations (e.g., energy companies, airlines) and individuals.

Vulnerability: ຄວາມບອບບາງ

ໝາຍເຖິງ ຄວາມອ່ອນໄຫວ ແລະ ບໍ່ສາມາດຮັບມື ກັບຜົນກະທົບ ທີ່ເກີດຈາກການປ່ຽນແປງດິນຟ້າອາກາດ;

Vulnerability refers to sensitivity and inability to cope with the impacts of climate change;

Vulnerability Assessment: ການປະເມີນຄວາມບອບບາງ

ໝາຍເຖິງ ການຕີລາຄາລະດັບຄວາມບອບບາງ ແລະ ຄາດຄະເນຜົນກະທົບຈາກທ່າອ່ຽງຂອງການປ່ຽນແປງອຸນຫະພູມ, ປະລິມານນໍ້າຝົນ ແລະ ເຫດການ ຫຼື ຜົນກະທົບຈາກສະພາບການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ພາຍຸ, ໄພນໍ້າຖ້ວມ, ໄພແຫ້ງແລ້ງ, ໄພໜາວ ໂດຍອີງໃສ່ຂໍ້ມູນທີ່ເກັບກຳໄດ້ໃນແຕ່ລະໄລຍະ ແລະ ຜົນການຄາດຄະເນໃນຕໍ່ໜ້າ ເພື່ອນຳຜົນການປະເມີນນັ້ນ ມາໃຊ້ເປັນຂໍ້ມູນພື້ນຖານໃນການວາງນະໂຍບາຍ, ແຜນຍຸດທະສາດ ແລະ ແຜນການ ເພື່ອກະກຽມຄວາມພ້ອມໃນການຮັບມື.

The vulnerability assessment evaluates the degree of vulnerability and estimates the impacts of temperature trends, rainfall patterns, and events or impacts from climate change phenomena, particularly storms, floods, droughts, and cold waves. The assessment is based on periodically collected data and future forecasts and functions as an information base for climate change action, policies, strategies, and plans.

Vulnerability Classification: ການກຳນົດເຂດຄວາມບອບບາງ

ໝາຍເຖິງ ການກຳນົດລັກສະນະ, ຈຸດພິເສດທາງພູມສັນຖານ ແລະ ລະດັບຄວາມບອບບາງເພື່ອຮອງຮັບການວາງແຜນຫຼຸດຜ່ອນຜົນກະທົບ, ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການວາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ເປັນຕົ້ນການວາງແຜນຜັງເມືອງຂອງຕົວເມືອງ, ການຈັດສັນພູມລຳເນົາ, ການພັດທະນາໂຄງລ່າງພື້ນຖານ, ໂຄງການພັດທະນາຕ່າງໆ.

Vulnerability classification is a process of identifying characteristics, specific geographies, and levels of susceptibility in order to support impact reduction plans, climate change adaption, and socio-economic and environmental management plans, particularly plans for urban development, residential settlement, infrastructure development, and development projects.

Vulnerability Mapping: ການສ້າງແຜນທີ່ຄວາມບອບບາງ

ໝາຍເຖິງ ການລວມເອົາຂໍ້ມູນຕ່າງໆຂອງປະເພດຄວາມສ່ຽງ ຈາກການປ່ຽນແປງດິນຟ້າອາກາດ ແລະ ຄວາມສາມາດໃນການປັບຕົວ ທີ່ສະແດງເຖິງສະຖານທີ່ຕັ້ງ ພູມສັນຖານ ແລະ ພູມລໍາເນົາຂອງປະຊາຊົນ, ຊັບສິນ ແລະ ທໍາມະຊາດ ທີ່ອາດເກີດມີຄວາມສ່ຽງຕໍ່ເຫດການຮ້າຍແຮງຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ ແລະ ສັງຄົມ.

Vulnerability mapping uses data on climate change risks and adaptive capacity to show geographic and residential areas, assets, and nature that may pose an extreme risk to human lives and social assets.

W

Weather: ສະພາບອາກາດ

ໝາຍເຖິງ ສະພາບຊັ້ນບັນຍາກາດໃນແຕ່ລະໄລຍະເວລາ ຫຼື ຢູ່ໃນສະຖານທີ່ໃດໜຶ່ງນັ້ນ ສາມາດວັດແທກໄດ້ ຕົວຊີ້ບອກເຊັ່ນ: ລົມ, ອຸນຫະພູມ, ຄວາມຊຸ່ມ, ຄວາມກົດດັນຂອງຊັ້ນບັນຍາກາດ, ຄວາມໜາແໜ້ນຂອງເມກ ແລະ ປະລິມານນໍ້າຝົນ. ສະພາບອາກາດໃນເກືອບທຸກໆເຂດອາດມີການປ່ຽນແປງໃນແຕ່ລະຊົ່ວໂມງ, ມື້ຕໍ່ມື້ ແລະ ລະດູການຕໍ່ລະດູການອາກາດມີຄວາມໝາຍແຕກຕ່າງສະພາບພູມອາກາດ ຊຶ່ງກໍານົດດ້ວຍຄ່າສະເລ່ຍອາກາດ ຫຼື ຄວາມໝາຍກວ້າງຂວາງຕື່ມ ແມ່ນລະບົບພູມອາກາດ. ວິທີການງ່າຍດາຍສໍາລັບການຈໍາແນກຄວາມແຕກຕ່າງ ຂອງພູມອາກາດໝາຍເຖິງ ສິ່ງທີ່ເຮົາຄາດຄະເນ (ເຊັ່ນ: ລະດູໜາວ) ແລະອາກາດ ໝາຍເຖິງສິ່ງທີ່ເຮົາໄດ້ຮັບ (ເຊັ່ນ: ພະຍຸຫິມະ).

Atmospheric condition at any given time or place. Weather is measured in terms of such things as wind, temperature, humidity, atmospheric pressure, cloudiness, and precipitation. In most places, weather can change from hour-to- hour, day-to-day, and season-to-season. Weather should be clearly distinct from climate, which is usually defined as the "average weather", or in wider sense is the state of the climate system. A simple way of remembering the difference is that climate is what you expect (e.g. cold winters) and 'weather' is what you get (e.g. a blizzard).

Weather Prediction/Forecast: ການຄາດຄະເນ ກ່ຽວກັບອາກາດ/ການພະຍາກອນລ່ວງໜ້າ

ໝາຍເຖິງ ການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ເຂົ້າໃນການຄາດຄະເນສະພາບພູມອາກາດໃນອາຄົດ ແລະ ສະຖານທີ່ໃດໜຶ່ງ. ມະນຸດເຮົາໄດ້ພະຍາຍາມພະຍາກອນອາກາດແບບບໍ່ເປັນທາງການມາເປັນເວລາຫຼາຍພັນປີ ແລະ ສາມາດພາຍະກອນອາກາດເປັນທາງການ ນັບແຕ່ສັດຕະວັດທີສິບເກົ້າເປັນຕົ້ນມາ, ການພະຍາກອນອາກາດ ແມ່ນດຳເນີນດ້ວຍການເກັບກຳຂໍ້ມູນທາງດ້ານປະລິມານ ກ່ຽວກັບ ສະພາບຊັ້ນບັນຍາກາດ ໃນປະຈຸບັນ ແລະ ນຳໃຊ້ວິທະຍາສາດສຶກສາສ້າງຄວາມເຂົ້າໃຈ ກ່ຽວກັບ ຂະບວນການຂອງສະພາບບັນຍາກາດເພື່ອຄາດການ ແລະ ພະຍາກອນຊັ້ນບັນຍາກາດທີ່ຈະເກີດຂຶ້ນໃນຕໍ່ໜ້າ.

The application of science and technology to predict the state of the atmosphere for a future time and a given location.

Human beings have attempted to predict the weather informally for millennia, and formally since at least the nineteenth century. Weather forecasts are made by collecting quantitative data about the current state of the atmosphere and using scientific understanding of atmospheric process to project how the atmosphere will evolve.

Z

Zero-carbon: ການປ່ອຍທາດອາຍກາກບອນເຫຼືອສູນ

ໝາຍເຖິງ ບັນດາສິ່ງປຸກສ້າງ, ກິດຈະກຳ ຫຼື ການດຳເນີນທຸລະກິດ ທີ່ບໍ່ປ່ອຍ ຫຼື ເພີ່ມທາດອາຍກາກບອນຂຶ້ນສູ່ຊັ້ນບັນຍາກາດ

A zero-carbon building, activity, business, etc., is one that does not cause any carbon dioxide to be added to the atmosphere.

References - ເອກະສານອ້າງອີງ

DDC. (2012). Guidelines on Development and Consideration of Proposed Clean Development Mechanism Projects in Lao PDR, MONRE

DDC. (2019). Climate Change Decree, MONRE

EPA Center for Corporate Climate Leadership: GHG Inventory Guidance: Glossary of Terms. Retrieved 16 Sep 2020, from https://www.epa.gov/climateleadership/ghg-inventory-guidance-glossary-terms

FAO. (2013). Lao PDR Risk and Vulnerability Survey 2012/13. Analysis Report. Retrieved July 2020, from http://www.fao.org/laos/resources/publications/zh/?page=2&ipp=5&no_cache=1&tx_dynalist_pi1[par]=YToxOntzOjE6IkwiO3M6MToiNiI7fQ

MOLSW (2020). Ministry of Labor and Social Welfare: The Law on Disaster Management

MoAF Ministry of Agriculture and Forest, Department of Forestry: REDD+glossary.

MoH (2020). Ministry of Health: Law on Hygiene and Health Promotion

MRC (2013). Mekong River Commission Climate Change and Adaptation Initiative: Glossary of Terms and Definitions on Climate Change and Adaptation. Retrieved 21 July 2020, from http://www.mrcmekong.org/assets/Publications/glossaries/Glossary-of-Terms-n-Definitions-on-CCA-Eng-04072013.pdf

IPCC (2014). Report: AR5 Climate Change: Mitigation of Climate Change: Annex I: Glossary, Acronyms and Chemical Symbols. Retrieved 23 July 2020, from https://www.ipcc.ch/site/assets/uploads/2018/02/ipcc_wg3_ar5_annex-i.pdf

IPCC (2014). Annex II: Glossary Retrieved 23 July 2020, from https://www.ipcc.ch/site/assets/uploads/2018/02/AR5_SYR_FINAL_Annexes.pdf

IPCC (2018). Special Report: GLOBAL WARMING OF 1.5 ºC Annex I: Glossary. Retrieved 23 July 2020, from https://www.ipcc.ch/site/assets/uploads/sites/2/2019/06/SR15_AnnexI_Glossary.pdf

IPCC (2019). Refinement to the 2006 IPCC Guidelines for National Greenhouse Gas: Glossary. Retrieved 23 July 2020, from https://www.ipcc.ch/report/2019-refinement-to-the-2006-ipcc-guidelines-for-national-greenhouse-gas-inventories/2019-refinement-glossary/

IPCC Subject to final copyedit and layout: Glossary. Retrieved 23 July 2020, From https://www.ipcc.ch/report/2019-refinement-to-the-2006-ipcc-guidelines-for-national-greenhouse-gas-inventories/2019-refinement-glossary-advance-version/

UNFCCC. Glossary of climate change acronyms and terms. Retrieved 21 July 2020, from https://unfccc.int/process-and-meetings/the-convention/glossary-of-climate-change-acronyms-and-terms

UNISDR. (2009). TerminologyEnglish.pdf. Retrieved 21 July 2020, from https://www.unisdr.org/files/7817_UNISDRTerminologyEnglish.pdf

ONEP. (2018). Thailand Green Climate Fund Guidebook. Office of Natural Resources and Environmental Policy and Planning, Ministry of Natural Resources and Environment. Bangkok, Retrieved 21 July 2020, from http://gcf.onep.go.th

JCM The Joint Crediting Mechanism (JCM). Retrieved 21 July 2020, from https://www.jcm.go.jp

ສະໜັບສະໜູນໂດຍ:
ອົງການ ອະນາໄມໂລກ, ສະຖາບັນ ເຕີບໂຕສີຂຽວ ສາກົນ ແລະ ອົງການ ສະຫະປະຊາຊາດ ດ້ານເຄຫາສະຖານ

Supported by:
World health Organization, Global Green Growth Institute and UN-Habitat

MONRE

World Health Organization
Representative Office for Lao PDR

GGGI

UN-HABITAT
FOR A BETTER URBAN FUTURE